ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄູ່ມື ແນະນຳຫຼັກການອະນາໄມ ແລະ ຂ້າເຊື້ອ

# ເພື່ອປ້ອງກັນ ການລະບາດ ພະຍາດໂຄວິດ - 19 (COVID-19)

ສະບັບ ເດືອນ ເມສາ 2021

ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ກະຊວງສາທາລະນະສຸກ

## ສາລະບານ


**ພາກທີ່ 1** 6

**ຄວາມຮູ້ພື້ນຖານກ່ຽວກັບ ວຽກງານອະນາໄມ ແລະ ຂ້າເຊື້ອ** 6

**ພາກທີ 2** 7

**ຈຸດປະສົງ ແລະ ຂອບເຂດ** 7

I. ຈຸດປະສົງ *7*

II. ຂອບເຂດການນຳໃຊ້ *7*

**ພາກທີ3** 8

**ຫຼັກການອະນາໄມ ແລະ ຂ້າເຊື້ອ** 8

1. ວິທີການອະນາໄມ ແລະ ຂ້າເຊື້ອ *8*

2. ຜະລິດຕະພັນ ສຳລັບການອະນາໄມ ແລະ ຂ້າເຊື້ອ *8*

2.1. ຜະລິດຕະພັນ ການອະນາໄມ: *8*

2.3 ຜົນກະທົບຕໍ່ສຸຂະພາບຂອງສານຄຼໍລີນ (Chlorine) ມີດັ່ງນີ້ : *9*

6. ຫຼັກການອະນາໄມ ແລະ ຂ້າເຊື້ອ *12*

6.1. ຂັ້ນຕອນທີ 1 ກ່ອນການອະນາໄມ ແລະ ການຂ້າເຊື້ອ *12*

6.1.1. ຜູ້ຈະເຮັດອະນາໄມ ແລະ ຂ້າເຊື້ອ ຕ້ອງອະນາໄມ ແລະ ອະເຊື້ອມື *12*

**ພາກທີ 4** 16

**ມາດຕະການ ອະນາໄມ ແລະ ຂ້າເຊື້ອ ຢູ່ສະຖານທີ່ຕ່າງໆ** 16

1. ການອະນາໄມ ແລະ ຂ້າເຊື້ອ ຢູ່ສະຖານທີ່ປິ່ນປົວຄົນເຈັບຕິດເຊື້ອໂຄວິດ - 19 *16*

2. ການອະນາໄມ ແລະ ຂ້າເຊື້ອ ຫ້ອງແຍກປ່ຽວຢູ່ສະຖານທີ່ບໍລິການສາທາລະນະສຸກ *18*

3. ການອະນາໄມ ແລະ ຂ້າເຊື້ອ ຢູ່ສະຖານທີ່ຈຳກັດບໍລິເວນ *20*

4. ການອະນາໄມ ແລະ ຂ້າເຊື້ອ ສະຖານທີ່ພັກເຊົາ ໂຮງແຮມ ແລະ ເຮືອນພັກ *23*

5. ການອະນາໄມ ແລະ ຂ້າເຊື້ອຢູ່ຮ້ານອາຫານ, ພັດຕະຄານ, ສະຖານທີ່ທ່ອງທ່ຽວ ແລະ ສະຖານບັນເທີງ *26*

6. ການອະນາໄມ ແລະ ຂ້າເຊື້ອສະຖານທີ່ ດ່ານສາກົນທາງບົກ, ດ່ານສະໜາມບິນສາກົນ ແລະ ພາຍໃນ *29*

7. ການອະນາໄມ ແລະ ຂ້າເຊື້ອ ຢູ່ສະຖານີຂົນສົ່ງ ໂດຍສານສາທາລະນະ *32*

8. ການອະນາໄມ ແລະ ຂ້າເຊື້ອ ຢູ່ໂຮງຮຽນ, ສະຖາບັນການສຶກສາ *35*

9. ການອະນາໄມ ແລະ ຂ້າເຊື້ອ ຢູ່ຮ້ານສັບພະສິນຄ້າ, ຮ້ານຂາຍເຄື່ອງຍ່ອຍທົ່ວໄປ, ຮ້ານຂາຍຢາ *38*

10. ການອະນາໄມ ແລະ ຂ້າເຊື້ອ ຢູ່ຕະຫຼາດສົດ *41*

11. ການອະນາໄມ ແລະ ຂ້າເຊື້ອ ລົດ ຮັບ-ສົ່ງ ຜູ້ໂດຍສານທີ່ຈະໄປຈຳກັດບໍລິເວນ *44*

12. ການອະນາໄມ ແລະ ຂ້າເຊື້ອ ຢູ່ທະນາຄານ, ສະຖາບັນການເງິນຈຸລະພາກ ແລະ ຕູ້ ATM *46*

13. ການອະນາໄມ ແລະ ຂ້າເຊື້ອ ຢູ່ສຳນັກງານ, ອົງການ *49*

14. ການອະນາໄມ ແລະ ຂ້າເຊື້ອສະຖານທີ່ອອກກຳລັງກາຍ *52*

15. ການອະນາໄມ ແລະ ຂ້າເຊື້ອ ໃນໂຮງງານ *55*

16. ການອະນາໄມ ແລະ ຂ້າເຊື້ອ ຢູ່ໂຮງຂ້າສັດ *58*

17. ການອະນາໄມ ແລະ ຂ້າເຊື້ອ ຢູ່ສະຖານທີ່ ປະຕິບັດທາງດ້ານ ສາດສະໜາ ແລະ ຮີດຄອງປະເພນີ *61*

18. ການອະນາໄມ ແລະ ຂ້າເຊື້ອ ຢູ່ ຄ້າຍຄຸມຂັງ - ດັດສ້າງ *64*
19. ການອະນາໄມ ແລະ ຂ້າເຊື້ອ ຢູ່ຮ້ານເສີມຄວາມງາມ, ຮ້ານຕັດຜົມ, ຮ້ານນວດ ແລະ ສະປາ *67*
**ພາກທີ 5** **70**
**ການຄຸ້ມຄອງ - ກຳຈັດ ຂີ້ເຫຍື້ອ, ສິ່ງເສດເຫຼືອ ແລະ ນ້ຳເປື້ອນ ຕິດເຊື້ອ ໂຄວິດ-19** **70**
1. ປະເພດຂີ້ເຫຍື້ອອອກຈາກສະຖານທີ່ປິ່ນປົວຄົນເຈັບຕິດເຊື້ອໂຄວິດ-19 *70*
2. ປະເພດຂີ້ເຫຍື້ອອອກຈາກສະຖານທີ່ພັກເຊົາຂອງພະນັກງານແພດໝໍ, ບ່ອນແຍກປ່ຽວ ແລະ ບ່ອນຈຳກັດບໍລິເວນ *70*
3. ພາຊະນະບັນຈຸຂີ້ເຫຍື້ອ: *71*
4. ການຕິດສະຫຼາກໃສ່ພາຊະນະ *71*
5. ການແຍກຂີ້ເຫຍື້ອ *71*
6. ວິທີການທ້ອນໂຮມ ແລະ ການເກັບມ້ຽນສິ່ງເສດເຫຼືອ, ຂີ້ເຫຍື້ອຕິດເຊື້ອ *71*
7. ການຂົນສົ່ງ ແລະ ເຄື່ອນຍ້າຍຂີ້ເຫຍື້ອ *71*
8. ການກຳຈັດຂີ້ເຫຍື້ອມີ 03 ວິທີ ດັ່ງນີ້: *72*
**ພາກທີ 6** **72**
**ການມ້ຽນຊາກສົບຜູ້ເສຍຊີວິດຈາກການຕິດເຊື້ອໂຄວິດ-19** **72**
1. ການກຽມທີມງານ: *72*
2. ກະກຽມອຸປະກອນ: *72*
3. ການຫຸ້ມຫໍ່ສົບ *72*
4. ການເຄື່ອນຍ້າຍສົບ *73*
5. ການເຜົາສົບ *73*
6. ການອະນາໄມ *73*

**ຄຳນຳ**

ປະຈຸບັນສະພາບການຂອງໂລກມີການແຜ່ລະບາດຂອງການຕິດເຊື້ອພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (ໂຄວິດ-19) ຈຳນວນຫຼວງຫຼາຍ ເຊິ່ງເພີ້ມທະວີຄວາມຮ້າຍແຮງ ແລະ ແຜ່ລະບາດໄປທົ່ວໂລກ ເຊິ່ງເຮັດໃຫ້ອັດຕາການຕິດເຊື້ອ ແລະ ເສຍຊີວິດປະຈຳວັນຂອງປະຊາກອນໃນທົ່ວໂລກ ເປັນຈຳນວນຫຼວງຫຼາຍ ແລະ ເພີ່ມຂຶ້ນຢ່າງໄວວາ.

ສປປ ລາວ ກໍເປັນປະເທດໜຶ່ງທີ່ກຳລັງປະເຊີນກັບສະພາບການເກີດລະບາດຂອງເຊື້ອພະຍາດອັກເສບປອດທີ່ເກີດຈາກເຊື້ອຈຸລະໂລກສາຍພັນໃໝ່ ( ໂຄວິດ-19 ) ເຊິ່ງເຮັດໃຫ້ມີຜົນກະທົບ ຕໍ່ສຸຂະພາບ ແລະ ການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ ທີ່ເປັນສາຍເຫດ ສິ່ງຜົນສະທ້ອນຕໍ່ການພັດທະນາ ເສດຖະກິດ - ສັງຄົມຂອງຊາດ ຢ່າງຮ້າຍແຮງ, ເພື່ອປ້ອງກັນ ແລະ ຄວບຄຸມ ການແຜ່ລະບາດຂອງເຊື້ອພະຍາດດັ່ງກ່າວ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດມາດຕະການສະກັດກັ້ນ ການຄວບຄຸມສະພາບການລະບາດບໍ່ໃຫ້ແຜ່ລາມອອກຢ່າງວ່ອງໄວ ແລະ ກ້ວາງຂວາງ.

ສະນັ້ນ, ການອະນາໄມ ແລະ ຂ້າເຊື້ອ ແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນທີ່ນອນຢູ່ໃນມາດຕະການສະກັດກັ້ນການຄວບຄຸມ ເພື່ອຕັດຕ່ອງໂສ້ຂອງການແຜ່ລະບາດ. ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ຈຶ່ງໄດ້ພັດທະນາຄູ່ມືແນະນຳດ້ານຫຼັກການ ຂອງການອະນາໄມ ແລະ ຂ້າເຊື້ອ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດພະຍາດໂຄວິດ-19 ສະບັບນີ້ຂຶ້ນມາເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ໄດ້ສຶກສາຄົ້ນຄ້ວາ ແລະ ພັດທະນາ ຫຼັກການອະນາໄມ ແລະ ຂ້າເຊື້ອເປັນແຕ່ລະໄລຍະເພື່ອໃຫ້ແທດເໝາະກັບສະພາບການ, ຫວັງຢ່າງຍິ່ງວ່າ ຄູ່ມືແນະນຳ ເຫຼັ້ມນີ້ ຈະເປັນປະໂຫຍດຕໍ່ວຽກງານປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດພະຍາດຈາກເຊື້ອຈຸລະໂລກສາຍພັນໃໝ່ (ໂຄວິດ-19) ເພື່ອຫຼຸດຜ່ອນອັດຕາການເຈັບປ່ວຍ ແລະ ເສຍຊີວິດຈາກການຕິດເຊື້ອພະຍາດດັ່ງກ່າວ ໃນທົ່ວປະເທດ.

ກົມອະນາໄມ ແລະ ສົ່ງເສີມສຸຂະພາບ

ດຣ. ພອນປະເສີດ ອຸນາພົມ

## ພາກທີ 1

## ຄວາມຮູ້ພື້ນຖານກ່ຽວກັບ ວຽກງານອະນາໄມ ແລະ ຂ້າເຊື້ອ

ການອະນາໄມ ແລະ ຂ້າເຊື້ອ ແມ່ນການເຮັດຄວາມສະອາດ ແລະ ທຳລາຍເຊື້ອພະຍາດ ເພື່ອຕັດຕ່ອງໂສ້ຂອງການຕິດເຊື້ອ ຈາກການຈະເລີນເຕີບໂຕ ແລະ ການແຜ່ກະຈາຍເຊື້ອພະຍາດ ຢູ່ໃນສະຖານທີ່ຕ່າງໆ ລວມທັງສະຖານທີ່ບໍລິການສາທາລະນະສຸກ ໂດຍສະເພາະແມ່ນສະຖານທີ່ແຍກປ່ຽວ, ສະຖານທີ່ຈຳກັດບໍລິເວນ ແລະ ສະຖານທີ່ປິ່ນປົວຄົນເຈັບທີ່ຕິດເຊື້ອພະຍາດໂຄວິດ-19 ແລະ ທຸກສະຖານທີ່ ທີ່ມີຄວາມສ່ຽງ ແລະ ມີການຕິດເຊື້ອ , ຖ້າການອະນາໄມ ແລະ ຂ້າເຊື້ອ ບໍ່ໄດ້ດີຈະເຮັດໃຫ້ ການກະຈາຍຂອງເຊື້ອພະຍາດ ໃສ່ສະພາບແວດລ້ອມ, ວັດຖຸສິ່ງຂອງ, ເຄື່ອງມື, ພື້ນຜິວ ແລະ ບຸກຄົນອື່ນ ເຮັດໃຫ້ມີການລະບາດໃນວົງກ້ວາງ ແລະ ວ່ອງໄວ.

## ພາກທີ 2

## ຈຸດປະສົງ ແລະ ຂອບເຂດ

### I. ຈຸດປະສົງ

ເພື່ອກໍານົດ ຫຼັກການ, ມາດຕະການ ວິທີການຈັດຕັ້ງປະຕິບັດ ກ່ຽວກັບການອະນາໄມ ແລະ ຂ້າເຊື້ອ ຢູ່ສະຖານທີ່ຕ່າງໆ. ແນໃສ່ການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດ ໂຄວິດ-19, ຫຼຸດຜ່ອນການຕິດເຊື້ອ ແລະ ການເສຍຊີວິດຂອງຄົນ ຮັບປະກັນໃຫ້ພົນລະເມືອງ ທັງພາຍໃນ ແລະ ຕ່າງປະເທດທີ່ດໍາລົງຊີວິດຢູ່ໃນ ສປປ ລາວ ມີສຸຂະພາບແຂງແຮງ.

### II. ຂອບເຂດການນໍາໃຊ້

ຄູ່ມືສະບັບນີ້ສາມາດນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ, ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດໍາລົງຊີວິດ ຢູ່ສປປ ລາວ.

ພາກທີ3

ຫຼັກການອະນາໄມ ແລະ ຂ້າເຊື້ອ

## 1. ວິທີການອະນາໄມ ແລະ ຂ້າເຊື້ອ

ການອະນາໄມ ແມ່ນເລີ້ມແຕ່ບ່ອນທີ່ເປື້ອນນ້ອຍ ຫາບ່ອນເປື້ອນຫຼາຍ,ຈາກບ່ອນສູງຫາບ່ອນຕໍ່າ ເພື່ອໃຫ້ຂີ້ເຫຍື້ອ ຕົກລົງພື້ນ ແລະ ອະນາໄມເທື່ອສຸດທ້າຍຢ່າງເປັນລະບົບ. ໃຫ້ໃຊ້ຜ້າສະອາດສໍາລັບການອະນາໄມທຸກຄັ້ງ ສໍາລັບພື້ນທີ່ພິຈາລະນາແລ້ວວ່າມີຄວາມສ່ຽງຕໍ່ການປົນເປື້ອນເຊື້ອພະຍາດ COVID-19.

ອຸປະກອນສໍາລັບການອະນາໄມພື້ນທີ່ ທີ່ມີຄວາມສ່ຽງ ແລະ ພື້ນທີ່ມີການຕິດເຊື້ອພະຍາດໂຄວິດ-19 ຕ້ອງໄດ້ແຍກ, ເກັບມ້ຽນ ແລະ ຮັກສາເປັນຢ່າງດີ. ນໍ້າຢາເຮັດຄວາມສະອາດ ຫຼື ນໍ້າຢາຂ້າເຊື້ອ ຖ້າມີການປົນເປື້ອນ ແລະ ໃຊ້ແລ້ວຕ້ອງໄດ້ປ່ຽນນໍ້າຢາໃໝ່ທັນທີ, ຫຼັງຈາກອະນາໄມແລ້ວຕ້ອງລ້າງຖັງດ້ວຍນໍ້າແຟັບ ແລະ ໄລດ້ວຍນໍ້າສະອາດ, ຕາກໃຫ້ແຫ້ງແລ້ວນໍາກັບໄປໃຊ້ຕາມປົກກະຕິ.

## 2. ຜະລິດຕະພັນ ສໍາລັບການອະນາໄມ ແລະ ຂ້າເຊື້ອ

### 2.1. ຜະລິດຕະພັນ ການອະນາໄມ:

1. ສະບູຝຸ່ນ(ແຟັບ)
2. ສະບູກ້ອນ/ສະບູແຫຼວ
3. ນໍ້າສະອາດ









### 2.2. ຜະລິດຕະພັນ ການຂ້າເຊື້ອ:

**2.2.1. ສານໄຮໂປຄໍລາຍ** (**Hypochlorite**)ມີ 2 ຊະນິດຄື:

- Sodium Hypochlorite (ຊະນິດນໍ້າ) ຕົວຢ່າງ: **ກໍ່ລິນ ທີ່ປະສົມສໍາເລັດມາແລ້ວ**
- Calcium Hypochlorite (ຊະນິດຝຸ່ນ) ຕົວຢ່າງ: ຝຸ່ນກໍ່ລິນ 65 - 70%
- Haiter ໄຮເຕີ້
- Dettol ເດັດຕອນ












**ສານກໍ່ລິນຊະນິດຝຸ່ນ**

ຜະລິດຕະພັນທີ່ມີສ່ວນປະສົມຂອງສານຄໍລີນ ( Chlorine ) ຊະນິດນໍ້າ ( Sodium Hypochlorite ) ແລະ ເປັນຝຸ່ນ ເຊິ່ງຕ້ອງໄດ້ໃຊ້ສູດປະສົມນໍ້າ ( Calcium Hypochlorite ) ບັນດາສານເຫຼົ່ານີ້ ແມ່ນຕ້ອງໄດ້ລະລາຍໃນນໍ້າຕາມສູດຄິດໄລ່ປະລິມານຂອງສານລະລາຍທີ່ມີປະສິດທິພາບໃນການຕໍ່ຕ້ານເຊື້ອພະຍາດທົ່ວໄປຫຼາຍຊະນິດໃນລະດັບຄວາມເຂັ້ມຂຸ້ນຕ່າງໆ ເຊັ່ນ : ຕ້ານຕໍ່ເຊື້ອໄວຣັສໄດ້ໃນຄວາມເຂັ້ມຂຸ້ນຂອງຢາຂ້າເຊື້ອແມ່ນ 0.05% (500 ppm) ເຊື້ອພະຍາດ ບາງຊະນິດຕ້ອງນໍາໃຊ້ຢາຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນສູງເຖິງ 0.5% (5.000 ppm)

ສຳລັບວຽກງານການປ້ອງກັນການລະບາດ COVID-19 ແມ່ນແນະນຳໃຫ້ໃຊ້ນ້ຳຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນ 0.1% (1,000 ppm) ເຊິ່ງຈະສາມາດຢັບຢັ້ງເຊື້ອພະຍາດອື່ນ ໄດ້ເຊັ່ນກັນ, ສະລັບ ກໍລະນີທີ່ມີການຕົກເຮ່ຍ ຫຼື ການຮົ່ວໄຫຼຂອງແຫຼວຈາກຮ່າງກາຍ ແມ່ນໃຫ້ໃຊ້ຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0.5% (5.000 ppm)

### 2.2.2. ການປະສົມນ້ຳຢາຂ້າເຊື້ອ

#### 2.2.2.1. ສູດຄິດໄລ່ ທີ 1 ຮູບແບບນ້ຳ : Sodium Hypochlorite concentrations :

ເປີເຊັນ(%)ຂອງChlorine ໃນ Sodium Hypochlorite ຫານ (%)ຄວາມເຂັ້ມຂອງChlorine ທີ່ຕ້ອງການ - 1 = ສັດສ່ວນຂອງນ້ຳ ຕໍ່ 1 ສ່ວນ ຂອງ Sodium Hypochlorite.

ຕົວຢ່າງ:

$$\frac{\text{65\% ໃນນ້ຳ Sodium Hypochlorite}}{\text{0.5\% ຂອງChlorineທີ່ຕ້ອງການ -1}} = \text{9 ຂອງນ້ຳຕໍ່ 1 ສ່ວນຂອງSodium}$$

#### 2.2.2.2. ສູດຄິດໄລ່ ທີ 2 ຮູບແບບເປັນຝຸ່ນ : Calcium Hypochlorite Concentrations

ເປີເຊັນ(%)Calcium Chlorine ຊະນິດຜົງຫານໃຫ້(%)ນ້ຳຢາຂ້າເຊື້ອທີ່ຕ້ອງການ-1= ສັດສ່ວນຂອງນ້ຳ.

ຕົວຢ່າງ:

$$\frac{\text{70\% Calcium Chlorine ຊະນິດຜົງ}}{\text{0,1\% ນ້ຳຢາຂ້າເຊື້ອທີ່ຕ້ອງການ - 1}} = \text{699 ສ່ວນຂອງນ້ຳ. Hypochlorite}$$

Chlorine 1ສ່ວນ (1ບ່ວງ)=15 mg/ນ້ຳ 699 ສ່ວນ

1/699 ກໍລີນ 70% 1ບ່ວງແກງ (15mg) x 699 = 10,485 ml

**ຕາຕະລາງການປະສົມນ້ຳຢາຂ້າເຊື້ອ**

| ປະເພດຜະລິດຕະພັນ | ປະລິມານ | ປະລິມານນ້ຳສະອາດ | ຄວາມເຂັ້ມຂຸ້ນ |
|---|---|---|---|
| ຝຸ່ນກໍລີນຊະນິດຝຸ່ນ 70% | 1 ບ່ວງແກງ (15 mg) | 1 ລິດ | 1% |
| | 1 ບ່ວງແກງ (15 mg) | 2 ລິດ | 0,5% |
| | 1 ບ່ວງແກງ (15 mg) | 10 ລິດ | 0,1% |
| ກໍລີນຊະນິດນ້ຳ 5 - 6 % | 1 ສ່ວນ | ນ້ຳ 4 ສ່ວນ | 1% |
| | 1 ສ່ວນ | ນ້ຳ 9 ສ່ວນ | 0,5% |
| | 1 ສ່ວນ | ນ້ຳ 49 ສ່ວນ | 0,1% |
| ນ້ຳຢາຊັກຢ້ຳຂາວ ໄຮເຕີ | 2 ຝາ | ນ້ຳ 2 ລິດ | ໃຊ້ຂ້າເຊື້ອ |
| ນ້ຳຢາຖູພື້ນ ເດັດຕອນ | 4,5 ຝາ | ນ້ຳ 2 ລິດ | ໃຊ້ຂ້າເຊື້ອ |

### 2.3 ຜົນກະທົບຕໍ່ສຸຂະພາບຂອງສານກໍລີນ (Chlorine) ມີດັ່ງນີ້ :

- ຜົນກະທົບຕໍ່ລະບົບລະລາຍ: ຫາກກືນເຂົ້າໄປໃນຮ່າງກາຍຈະມີອາການເຈັບອອກຮ້ອນກະເພາະ, ຖອກທ້ອງ ວິນຫົວ ແລະ ຮາກ;
- ຜົນກະທົບຕໍ່ຕາ: ເຮັດໃຫ້ມີ ອາການ ແສບຕາ, ຕາແດງ ແລະ ເຈັບຕາ;
- ຜົນກະທົບຕໍ່ ຜິວໜັງ ເຮັດໃຫ້ເປັນຜື່ນຄັນຕໍ່ຜິວໜັງ.

**2.4 ການເກັບຮັກສາ**

- ເກັບຮັກສາໄວ້ໃນພາຊະນະທີ່ມີຝາປິດ ແລະ ຕ້ອງເປັນພາຊະນະທີ່ແສງບໍ່ສາມາດຜ່ານເຂົ້າໄດ້, ເກັບມ້ຽນໃຫ້ຫ່າງຈາກວັດຖຸໄວໄຟ ແລະ ໃຫ້ຫ່າງໄກຈາກ ເດັກນ້ອຍ;
- ສໍາລັບນໍ້າຢາຂ້າເຊື້ອທີ່ໄດ້ປະສົມແລ້ວແມ່ນມີອາຍຸນໍາໃຊ້ 2 ຊົ່ວໂມງ. ສະນັ້ນ, ປະລິມານນໍ້າຢາທີ່ປະສົມແມ່ນໃຫ້ຄິດໄລ່ຕາມເບື້ອທີ່ຈະນໍາໃຊ້ ຫຼັງຈາກປະສົມແລ້ວ ໃຫ້ເກັບໄວ້ໃນພາຊະນະທີ່ມີຝາປິດ ແລະ ຕ້ອງເປັນພາຊະນະທີ່ແສງບໍ່ສາມາດ ຜ່ານເຂົ້າໄດ້, ເກັບມ້ຽນໃຫ້ຫ່າງຈາກວັດຖຸໄວໄຟ ແລະ ໃຫ້ຫ່າງໄກຈາກເດັກນ້ອຍ ຖ້າກາຍ 2 ຊົ່ວໂມງແມ່ນໃຫ້ຖອກຖິ້ມ.

**2.5 ຂໍ້ຫ້າມ**

- ຫ້າມດື່ມ, ກໍລະນີຫຼົງດື່ມເຂົ້າໄປ ຕ້ອງໄດ້ດື່ມນໍ້າໃຫ້ຫຼາຍ, ໄປຫາແພດ
- ປ້ອງກັນບໍ່ໃຫ້ສໍາພັດກັບຜິວໜັງ, ຕາ (ຖ້າເຂົ້າຕາ, ຖືກຜິວໜັງ ຕ້ອງລ້າງດ້ວຍນໍ້າສະອາດທັນທີ, ໄປພົບແພດ)

**3. ເຫຼົ້າ 70% ມີ 2 ຊະນິດຄື:**

ເຫຼົ້າທີ່ໃຊ້ຂ້າເຊື້ອ ມີ 2 ຊະນິດ ຄື ເອທີນອານໂກນ ( Ethyl alcohol ) ແລະ ອີໂຊໂປຣນປິນອານໂກນ ( Isopropyl alcohol ) ທັງສອງຊະນິດແມ່ນເປັນນໍ້າ, ບໍ່ມີສີ ລະເຫີຍອາຍໄດ້ງ່າຍ ຢູ່ໃນອຸນຫະພູມຫ້ອງ, ໃຊ້ເຮັດຄວາມສະອາດ, ຂ້າເຊື້ອວັດຖຸ, ອຸປະກອນທີ່ເປັນໂລຫະ, ຢາງ, ໄມ້, ໜັງ, ສະແຕນເລດ ບໍ່ມີການຕົກຄ້າງ ແລະ ປອດໄພ. ເຫຼົ້າ ທັງ 2 ຊະນິດ ມີລິດໃນການທໍາລາຍເຊື້ອຈຸລິນຊີ, ວັນນະໂລກ, ເຊື້ອເຫັດ ແລະ ເຊື້ອຈຸລະໂລກ ແຕ່ບໍ່ສາມາດທໍາລາຍ ສະປໍ Spore ( ປໍ້ ຂອງເຊື້ອຈຸລິນຊີໄດ້).

ເຫຼົ້າ 70% ໄດ້ກາບົດເປັນຜະລິດຕະພັນ ອະນາໄມ ແລະ ຂ້າເຊື້ອສະຖານທີ່ຕ່າງໆ ນອກຈາກນີ້ຍັງໃຊ້ຂ້າເຊື້ອມືໂດຍກົງ ແລະ ເປັນສ່ວນປະສົມໃນເຈວ ຂ້າເຊື້ອມື ເຊິ່ງມີຂາຍຕາມຕະຫຼາດທົ່ວໄປ.

ເຫຼົ້າ 90% - 95% ແມ່ນ ມີຄວາມເຂັ້ມຂຸ້ນຂອງທາດເຫຼົ້າສູງ ຈະເຮັດໃຫ້ ການລະເຫີຍອາຍໄວ ໂດຍທີ່ບໍ່ທັນດູດຊຶມຜ່ານ ເຍື່ອຫຸ້ມຈຸລັງຂອງເຊື້ອພະຍາດ, ນອກຈາກນີ້ ຍັງເຮັດໃຫ້ຜິວແຫ້ງ ແລະ ຄັນໄດ້, ຈິ່ງບໍ່ໃຫ້ໃຊ້ ເຫຼົ້າ 90%-95% ຂ້າເຊື້ອພະຍາດ.

ຂໍ້ຄວນລະວັງສໍາລັບການນໍາໃຊ້ເຫຼົ້າຂ້າເຊື້ອ ຄວນຄໍານຶງເຖິງຄວາມຖີ່ຂອງການນໍາໃຊ້ ເພາະຈະເຮັດໃຫ້ ຜິວແຫ້ງ, ການ ເກັບຮັກສາ ແມ່ນຫຼີກລ່ຽງແສງແດດ ແລະ ຄວາມຮ້ອນ ເພາະ ເຫຼົ້າສາມາດຕິດໄຟຟ້າໄດ້ ແລະ ເປັນຜະລິດຕະພັນທີ່ໃຊ້ສໍາລັບ ພາຍນອກ.






### 4. ຫຼອດໄຟ UV

- UVGI Disinfection Chamber ເປັນລັກສະນະ ຄືກັບຕູ້ອົບ ແມ່ນໃຊ້ສຳລັບຂ້າເຊື້ອອຸປະກອນ ທີ່ສາມາດຊັກ ແລະ ທຳຄວາມສະອາດໄດ້ ;
- ເປັນຫຼອດໄຟ UV ທີ່ສາມາດເຄື່ອນຍ້າຍໄປມາໄດ້ ເໝາະສຳລັບຂ້າເຊື້ອພະຍາດ ທີ່ມີຄວາມສ່ຽງຕໍ່ການແຜ່ລະບາດ ຂອງ COVID-19 ເປັນຕົ້ນຫ້ອງທີ່ມີຄວາມດັນລົບ, ໃນເວລາເປີດໄຟ UV ແມ່ນບໍ່ອະນຸຍາດໃຫ້ມີຄົນຢູ່ໃນຫ້ອງ ດັ່ງກ່າວ;

  ລັງສີທີ່ຫຼອດໄຟປ່ອຍອອກມາໃນລະຫວ່າງ 200nm - 313nm ( ຕາມມາດຕະຖານສາກົນ CIE, DIN, IESNA ) ແຕ່ຈະມີປະສິດທິພາບໄດ້ດີທີ່ສຸດ ຖ້າມີຄວາມຍາວຄື້ນຢູ່ປະມານ 265 nm ແມ່ນສາມາດທຳລາຍເຊື້ອພະຍາດເຊັ່ນ : ຈຸລິນຊີ, ເຊື້ອເຫັດ, ເຊື້ອລາ ແລະ ນອກນີ້ ຍັງສາມາດທຳລາຍເຊື້ອຈຸລະໂລກ (ໄວຣັສ) ໄດ້ອີກ. ເຊິ່ງແສງລັງສີນີ້ຈະໄປທຳລາຍຕ່ອງໂສ້ຂອງ DNA-RNA ເຊັ່ນ :ຂອງ ໄວຣັສ COVID-19 ແລະ ຈະສາມາດໄປຢັບຢັ້ງການຂະຫຍາຍພັນຂອງເຊື້ອຈຸລິນຊີ ແລະ ໄວຣັສ.
- ການນຳໃຊ້ ແສງ UV ແມ່ນໃຫ້ຄຳນຶງເຖິງເປົ້າໝາຍໃຫ້ເໝາະສົມກັບ ຈຸດປະສົງທີ່ເຮົາຕ້ອງການຂ້າເຊື້ອເຊັ່ນ : UVGI Disinfection Chamber ເປັນລັກສະນະ ຄືກັບຕູ້ອົບ ແມ່ນໃຊ້ສຳລັບ ຂ້າເຊື້ອອຸປະກອນ ທີ່ສາມາດຊັກ ແລະ ທຳຄວາມສະອາດໄດ້ ;



- Moveable UVGI Air and Sureface ເປັນຫຼອດໄຟ UV ທີ່ສາມາດເຄື່ອນຍ້າຍໄປມາໄດ້ ເໝາະສຳລັບຂ້າເຊື້ອພະ ຍາດ ທີ່ມີຄວາມສ່ຽງຕໍ່ການແຜ່ລະບາດຂອງ COVID-19 ເປັນຕົ້ນຫ້ອງທີ່ມີຄວາມດັນລົບ, ໃນເວລາເປີດໄຟ UV ແມ່ນບໍ່ອະນຸຍາດໃຫ້ ມີຄົນຢູ່ໃນຫ້ອງດັ່ງກ່າວ;





- Handheld UVGI Surface Disinfection Equipment ເປັນຊະນິດນຶ່ງທີ່ຕ້ອງການນຳໃຊ້ຂ້າເຊື້ອ ຢູ່ອຸປະກອນ ທີ່ໃຊ້ຮ່ວມກັນກັບຄົນອື່ນ ເຊັ່ນ: ຄີບອດຄອມພິວເຕີ້ລວມ, ລູກບິດປະຕູຫ້ອງນ້ຳ.

**ຜົນກະທົບຈາກລັງສີ UV ຕໍ່ອະໄວຍະວະຂອງຄົນ ເຊັ່ນ :**

- ຕໍ່ຕາ ຈະເຮັດໃຫ້ມີອັນຕະລາຍຕໍ່ກະຈົກຕາ ແລະ ເລນຕາໄດ້ ;
- ຕໍ່ຜິວໜັງ ຈະເຮັດໃຫ້ຜິວໜັງໄໝ້, ແດງ, ແສບຜິວ ແລະອາດຈະກໍ່ໃຫ້ເກີດມະເຮັງໄດ້;
- ຕໍ່ລະບົບຫາຍໃຈ : ລັງສີທີ່ປ່ອຍອອກມາ ຖ້າຄື້ນຍາວກ່ວາ 240 nm ສາມາດຜະລິດ ແກສໂອໂຊນທີ່ເປັນພິດຕໍ່ລະບົບຫາຍໃຈໄດ້.

5. **ການຂ້າເຊື້ອດ້ວຍຄວາມຮ້ອນ: (Pasteurization)**

ການຂ້າເຊື້ອດ້ວຍຄວາມຮ້ອນ ແລະ ອຸນຫະພູມຂອງນ້ຳຮ້ອນ 100 ອົງສາເຊ ເວລາ 30 ນາທີຂຶ້ນໄປແມ່ນສາມາດຂ້າເຊື້ອພະຍາດໄດ້ ເຊິ່ງວິທີນີ້ເປັນການຂ້າເຊື້ອທີ່ມີປະສິດທິພາບສູງ

## 6. ຫຼັກການອະນາໄມ ແລະ ຂ້າເຊື້ອ

### 6.1. ຂັ້ນຕອນທີ 1 ກ່ອນການອະນາໄມ ແລະ ການຂ້າເຊື້ອ

#### 6.1.1.ຜູ້ຈະເຮັດອະນາໄມ ແລະ ຂ້າເຊື້ອ ຕ້ອງອະນາໄມ ແລະ ອະເຊື້ອມື

ການອະນາໄມມືທີ່ຖືກຕ້ອງຈະສາມາດຫຼຸດຜ່ອນເຊື້ອພະຍາດທີ່ປົນເປື້ອນໃນຂະນະທີ່ປະຕິບັດກິດຈະກຳຕ່າງໆ ເຊັ່ນ: ເລືອດ, ນ້ຳມູກ, ຂີ້ກະເທີ່, ນ້ຳລາຍ, ນ້ຳຍ່ຽວ, ອາຈົມ ຕ່າງໆ ຫຼື ຈັບບາຍກັບ ອຸປະກອນ, ສິ່ງແວດລ້ອມອ້ອມຕົວຄົນເຈັບ, ພະນັກງານອະນາໄມ ແລະ ຂ້າເຊື້ອ ຄວນອະນາໄມ ແລະ ຂ້າເຊື້ອມືກ່ອນ ແລະ ຫຼັງເຮັດວຽກ.

ການລ້າງມືຕ້ອງໃຊ້ນ້ຳສະອາດລ້າງ, ໃສ່ສະບູ, ໄລດ້ວຍນ້ຳສະອາດ, ໃຊ້ເວລາໃນການລ້າງມືປະມານ 40-60 ວິນາທີ ເຊັດດ້ວຍຜ້າເຊັດມືທີ່ສະອາດ ແລະ ໃຊ້ເທື່ອດຽວ ຫຼື ເຈ້ຍເຊັດມືໃຫ້ແຫ້ງ ເພາະວ່າການລ້າງມືພຽງແຕ່ເຮັດໃຫ້ເຊື້ອພະຍາດສ່ວນໃດສ່ວນນຶ່ງອອກເທົ່ານັ້ນ ແລະ ເຊື້ອພະຍາດສາມາດຂະຫຍາຍ ຫຼື ຈະເລີນເຕີບໂຕໃນຄວາມຊຸ່ມ ແລະ ບ່ອນປຽກໄດ້ດີ, ດັ່ງນັ້ນ ຫຼັງຈາກລ້າງມືແລ້ວ ຕ້ອງໃຊ້ເຫຼົ້າ ຫຼື ເຈວອະນາໄມມືທີ່ມີສ່ວນປະສົມທາດເຫຼົ້າ 70% ອະເຊື້ອມື ເຊິ່ງຂັ້ນຕອນການອະນາໄມມືດ້ວຍສະບູ ຫຼື ດ້ວຍເຈວຂ້າເຊື້ອມື ທີ່ມີທາດເຫຼົ້າ ຕ້ອງປະຕິບັດດັ່ງລຸ່ມນີ້ :

- ຂັ້ນຕອນທີ 1 : ຝາມືຖູຝາມືແລ້ວສອດນິ້ວມືປະສານກັນ
- ຂັ້ນຕອນທີ 2 : ຝາມືເບື້ອງຂວາຖູຝາມືເບື້ອງຊ້າຍ ແລະ ສອດນິ້ວມືປະສານກັນ ເພື່ອອະນາໄມຕາມຮ່ອງນິ້ວມືແລະ ສະຫຼັບຂ້າງກັນ
- ຂັ້ນຕອນທີ 3 : ກຳມືເຂົ້າ ແລ້ວເອົາສັນມືຖູຝາມື
- ຂັ້ນຕອນທີ 4 : ຖູອ້ອມໂປ້ມືຂວາ ແລະ ຊ້າຍສະຫຼັບກັນ
- ຂັ້ນຕອນທີ 5 : ເອົາປາຍນິ້ວມືຖູຝາມືໄປມາ ສະຫຼັບກັນຊ້າຍ ແລະ ຂວາ





**6.1.2 ການໃສ່ເຄື່ອງປ້ອງກັນຕົນເອງ :**

ຜູ້ອະນາໄມ ແລະ ຂ້າເຊື້ອ ຕ້ອງໄດ້ໃສ່ເຄື່ອງປ້ອງກັນຕົນເອງ ຕະຫຼອດເວລາໃນເວລາປະຕິບັດໜ້າທີ່ ເພື່ອປ້ອງກັນບໍ່ໃຫ້ພະຍາດ ຕິດແປດໃສ່ມື, ຕາ, ຜົມ, ເສື້ອຜ້າ ແລະ ເກີບ ແລະ ປ້ອງກັນບໍ່ໃຫ້ຕິດເຊື້ອໃສ່ຄົນອື່ນ ເຊິ່ງມີດັ່ງນີ້ :

1. ຖົງມືຊະນິດບາງ
2. ຖົງມືຊະນິດຢາງຍາວໜາ;
3. ແວ່ນປ້ອງກັນຕາ;
4. ຜ້າອັດປາກ ແລະ ດັງ ຊະນິດປ້ອງກັນເຄມີ;
5. ຜ້າຢາງກັນເປື້ອນ;
6. ເສື້ອຄຸມ ( ເສື້ອກາວ)
7. ເກີບໂບກ
8. ໝວກ ຫຼື ຖົງປົກຜົມ



ຫຼັກການໃສ່ເຄື່ອງປ້ອງກັນຕົນເອງ ແມ່ນເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ການຕິດເຊື້ອ ແລະ ປ້ອງກັນເຄມີເຂົ້າສູ່ຮ່າງກາຍ, ແຕ່ບໍ່ສາມາດປ້ອງກັນໄດ້ທັງໝົດ. ການໃສ່ເຄື່ອງປ້ອງກັນຕົນເອງຢ່າງມີປະສິດທິພາບ ຖືກວິທີ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງລຸ່ມນີ້ :

1. ອະນາໄມ ແລະ ຂ້າເຊື້ອມື
2. ໃສ່ຜ້າອັດປາກ-ດັງ ( ຊະນິດປ້ອງກັນເຄມີ ແລະ ເຊື້ອພະຍາດ )
3. ໃສ່ເສື້ອຄຸມ ( ເສື້ອກາວ)
4. ໃສ່ແວ່ນປ້ອງກັນຕາ
5. ໃສ່ໝວກປົກກວມຜົມ
6. ໃສ່ຜ້າຢາງກັນເປື້ອນ
7. ໃສ່ເກີບໂບກ
8. ໃສ່ຖົງມືຢາງຊະນິດບາງ
9. ໃສ່ຖົງມືຢາງຊະນິດໜາຍາວ
10. ຕ້ອງມີຜູ້ຊ່ວຍເບິ່ງຄວາມຮຽບຮ້ອຍ

- ຫຼີກເວັ້ນການສໍາພັດກັບເຄື່ອງປ້ອງກັນຕົນເອງທີ່ຖືກນໍາໃຊ້ແລ້ວ ແລະ ປົນເປື້ອນກັບສິ່ງຂັບຫຼັ່ງອອກຈາກຮ່າງກາຍ;
- ຫ້າມບໍ່ໃຫ້ໃສ່ເຄື່ອງປ້ອງກັນຕົນເອງຊ້ອນກັນເພາະບໍ່ສາມາດປ້ອງກັນພະຍາດໄດ້ເພີ້ມຕື່ມ ເຊິ່ງຈະເປັນການສິ້ນເປືອງພ້ອມທັງເຮັດວຽກບໍ່ສະດວກສະບາຍ;
- ບໍ່ໃຫ້ໃສ່ເຄື່ອງປ້ອງກັນຕົນເອງຮ່ວມກັນ.

ສະນັ້ນ, ຈິ່ງມີຄວາມຈໍາເປັນໃຫ້ມີເຄື່ອງປ້ອງກັນຕົນເອງທີ່ພຽງພໍ ມີໃຊ້ຕະຫຼອດເວລາ ພ້ອມທັງຝຶກອົບຮົມການນໍາໃຊ້ເຄື່ອງປ້ອງກັນຕົນເອງ ໃຫ້ພະນັກງານອະນາໄມ - ຂ້າເຊື້ອ ຢ່າງທົ່ວເຖິງ ແລະ ທັນກັບສະພາບການ. ພະນັກງານອະນາໄມ ແລະ ຂ້າເຊື້ອ ທຸກຄົນຕ້ອງຮູ້ວິທີ ແລະ ຫຼັກການໃສ່ເຄື່ອງປ້ອງກັນຕົນເອງໃຫ້ຖືກຕ້ອງ.

**ຂໍ້ຄວນລະວັງ**

- ຫຼີກລ້ຽງການສຳພັດກັບດ້ານໜ້າຂອງຊຸດທີ່ປົນເປື້ອນໃນເວລາກຳຈັດ;
- ການຖອດແວ່ນປ້ອງກັນຕາ, ເກີບໂບກ ແລະ ອຸປະກອນອື່ນໆທີ່ສາມາດນຳໃຊ້ໄດ້ຫຼາຍຄັ້ງຕ້ອງຖອດທັນທີແລ້ວນຳໄປແຊ່ນ້ຳຢາຂ້າເຊື້ອ; ສ່ວນອຸປະກອນທີ່ນຳໃຊ້ຄັ້ງດຽວຄວນຖິ້ມໄວ້ໃນຖົງ ແລ້ວນຳໄປຖິ້ມໃສ່ໃນຖັງຂີ້ເຫຍື້ອສີເຫຼືອງທີ່ຖິ້ມອຸປະກອນການແພດເພື່ອນຳໄປກຳຈັດ;
- ການຖອດອຸປະກອນປ້ອງກັນ ແຕ່ລະຂັ້ນຕອນຕ້ອງຂ້າເຊື້ອມືທຸກຄັ້ງດ້ວຍເຫຼົ້າ70% ເມື່ອຖອດອຸປະກອນທັງໝົດອອກແລ້ວຕ້ອງລ້າງມືດ້ວຍສະບູ, ໄລດ້ວຍນ້ຳສະອາດ ແລະ ຂ້າເຊື້ອມື;
- ສຳລັບອຸປະກອນທີ່ສາມາດນຳໃຊ້ຄືນແມ່ນໃຫ້ຂ້າເຊື້ອດ້ວຍນ້ຳຢາຄູລໍລີນທີ່ມີຄວາມເຂັ້ມຂຸ້ນ 0,5%;
- ການປະສົມຢາຂ້າເຊື້ອຕ້ອງຢູ່ສະຖານທີ່ມີການລະບາຍອາກາດໄດ້ດີ;
- ລະມັດລະວັງ ແລະ ຫຼີກລ້ຽງການສຳພັດໂດຍກົງກັບນ້ຳຢາຂ້າເຊື້ອ;
- ປະສົມຢາຂ້າເຊື້ອ ແມ່ນໃຫ້ປະຕິບັດຕາມອັດຕາສ່ວນຢູ່ໃນຄູ່ມືແນະນຳສະບັບນີ້ຢ່າງເຄັ່ງຄັດ.

### 6.2 ຂັ້ນຕອນທີ 2 ການອະນາໄມ ແລະ ການຂ້າເຊື້ອ:

- ຕ້ອງເປີດປະຕູ, ປ່ອງຢ້ຽມ ເພື່ອລະບາຍອາກາດ;
- ບໍ່ໃຫ້ມີຄົນຢູ່ໃນຫ້ອງທີ່ຈະເຮັດອະນາໄມ ແລະ ຂ້າເຊື້ອ;
- ອະນາໄມ ແລະ ຂ້າເຊື້ອທຸກພື້ນທີ່ ທີ່ມີຄວາມສ່ຽງໃນການຕິດເຊື້ອ ໂດຍການໃຊ້ແພຈຸບນ້ຳຢາທີ່ກຽມໄວ້ ຫຼື ສີດນ້ຳຢາໃສ່ບໍລິເວນທີ່ຈະອະນາໄມ ແລະ ຂ້າເຊື້ອ ແລ້ວໃຊ້ຜ້າເຊັດຖູຄວນເລີ່ມຈາກ ບ່ອນທີ່ເປື້ອນໜ້ອຍໄປຫາບ່ອນເປື້ອນຫຼາຍ, ຈາກບ່ອນສູງ ຫາ ບ່ອນຕ່ຳ,ຈາກດ້ານໃນຫາດ້ານນອກ ເຊັ່ນ: ຊ່ອງລະບາຍອາກາດ, ເຄື່ອງປັບອາກາດ, ເຄື່ອງໃຊ້ພາຍໃນຫ້ອງ, ລູກບິດປະຕູ, ຮາວຂັ້ນໄດ, ປຸ່ມກົດລິບ, ຫ້ອງນ້ຳ, ບ່ອນເກັບມ້ຽນຂີ້ເຫຍື້ອ, ສິ່ງເສດເຫຼືອ ແລະ ອື່ນໆ...

### 6.3 ຂັ້ນຕອນທີ 3 ຫຼັງຈາກການອະນາໄມ ແລະ ຂ້າເຊື້ອແລ້ວ

ຫຼັງຈາກສຳເລັດການອະນາໄມຂ້າເຊື້ອແລ້ວໃຫ້ຜູ້ອະນາໄມ ຖອດເຄື່ອງປ້ອງກັນຕົນເອງຢ່າງລະມັດ ລະວັງຕາມຂັ້ນຕອນດັ່ງລຸ່ມນີ້ :

1. ລ້າງມືດ້ວຍສະບູ, ໄລດ້ວຍນ້ຳສະອາດ ແລະ ຂ້າເຊື້ອມື ດ້ວຍເຫຼົ້າ 70% ຫຼື ເຈວຂ້າເຊື້ອ;
2. ຖອດຖົງມືຍາວ ລ້າງມືດ້ວຍສະບູ ແລະ ນ້ຳສະອາດ ແລ້ວຂ້າເຊື້ອ ດ້ວຍເຫຼົ້າ70% ຫຼື ເຈວຂ້າເຊື້ອ;
3. ຖອດຜ້າກັນເປື້ອນອອກລ້າງມືດ້ວຍເຫຼົ້າ70% ຫຼື ເຈວຂ້າເຊື້ອ;
4. ປົດໝວກອອກໄປດ້ານຫຼັງ ລ້າງມືດ້ວຍເຫຼົ້າ70% ຫຼື ເຈວຂ້າເຊື້ອ;
5. ແກ້ເສື້ອຄຸມໂດຍການມ້ວນອອກ ລ້າງມືດ້ວຍເຫຼົ້າ70% ຫຼື ເຈວຂ້າເຊື້ອ;
6. ຖອດເກີບໂບກອອກແລ້ວລ້າງມືດ້ວຍເຫຼົ້າ70% ຫຼື ເຈວຂ້າເຊື້ອ;
7. ຖອດຖົງມືຢາງຊະນິດບາງ ແລ້ວລ້າງມືດ້ວຍເຫຼົ້າ70% ຫຼື ເຈວຂ້າເຊື້ອ;
8. ຖອດແວ່ນປ້ອງກັນຕາອອກ ລ້າງມືດ້ວຍເຫຼົ້າ70% ຫຼື ເຈວຂ້າເຊື້ອ;
9. ຖອດຜ້າອັດປາກ-ດັງອອກ ແລ້ວລ້າງດ້ວຍເຫຼົ້າ70% ຫຼື ເຈວຂ້າເຊື້ອ;

10. ລ້າງມືດ້ວຍສະບູ, ໄລດ້ວຍນ້ຳທີ່ສະອາດ, ເຊັດມືໃຫ້ແຫ້ງດ້ວຍຜ້າທີ່ສະອາດ ຫຼື ເຈ້ຍອະນາໄມ;
11. ອະນາໄມມືດ້ວຍເຈວຂ້າເຊື້ອ ທີ່ມີທາດເຫຼົ້າ 70%;
12. ອາບນ້ຳ ອະນາໄມຮ່າງກາຍປ່ຽນເຄື່ອງນຸ່ງໃຫ້ສະອາດຢູ່ສະເໝີ.

ຫຼັງຈາກສຳເລັດການອະນາໄມ-ຂ້າເຊື້ອ ແລ້ວໃຫ້ມີການອະນາໄມຮ່າງກາຍດ້ວຍສະບູ, ນ້ຳສະອາດ. ສຳລັບອຸປະກອນ, ເສື້ອຜ້າຕ່າງໆ ແມ່ນໃຫ້ແຊ່ດ້ວຍຢາຂ້າເຊື້ອທີ່ມີສ່ວນປະສົມຂອງສານ Chlorine 0.1% (1.000 mg/l) ຖ້າສະຖານທີ່ມີຄວາມສ່ຽງ ແລະ ມີການຕິດເຊື້ອ ແມ່ນແຊ່ດ້ວຍນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,5 - 1% ປະໄວ້ 30 ນາທີ ແລ້ວຊັກ, ຕາກໃຫ້ແຫ້ງດີ.

ຜູ້ເຮັດອະນາໄມຄວນສັງເກດຕົນເອງ ຫາກມີອາການເຈັບປ່ວຍທີ່ມີຄວາມສ່ຽງ ເຊັ່ນ: ໄອ, ຈາມ, ມີນ້ຳມູກ, ມີໄຂ້ ຫຼື ອາການຫາຍໃຈຍາກ ໃຫ້ຕິດຕໍ່ໂທລະສັບສາຍດ່ວນ 165 - 166 ເພື່ອຂໍຄຳແນະນຳ.

**ສິ່ງທີ່ຄວນເອົາໃຈໃສ່**

ການຂ້າເຊື້ອໃນແຕ່ລະສະຖານທີ່ຄວນຢູ່ພາຍໃຕ້ການຊີ້ນຳຂອງໜ່ວຍງານສາທາລະນະສຸກໃນແຕ່ລະທ້ອງຖິ່ນ, ດຳເນີນໂດຍໜ່ວຍງານທີ່ກ່ຽວຂ້ອງຢ່າງທັນເວລາ. ການອະນາໄມ ແລະ ຂ້າເຊື້ອທຸກຄັ້ງ ໃນສະຖານທີບໍລິການສາທາລະນະສຸກຄວນແມ່ນຄວາມຮັບຜິດຊອບຂອງພະນັກງານແພດ ແລະ ໜ່ວຍງານອະນາໄມ, ຕ້ອງມີການແນະນຳອົບຮົມດ້ານເຕັກນິກໃຫ້ແກ່ທີມງານຈາກໜ່ວຍງານອະນາໄມ ແລະ ຂ້າເຊື້ອ ໃນທ້ອງຖິ່ນກ່ອນ, ການເກັບຮັກສາຢາຂ້າເຊື້ອຕ້ອງເກັບໃຫ້ຖືກຕ້ອງຕາມຫຼັກການຂ້າງເທິງ.

## ພາກທີ 4

## ມາດຕະການ ອະນາໄມ ແລະ ຂ້າເຊື້ອ ຢູ່ສະຖານທີ່ຕ່າງໆ

### 1. ການອະນາໄມ ແລະ ຂ້າເຊື້ອ ຢູ່ສະຖານທີ່ປິ່ນປົວຄົນເຈັບຕິດເຊື້ອໂຄວິດ - 19

| | |
|---|---|
|   | **ການອະນາໄມມື**<br>• ຕ້ອງຈັດໃຫ້ມີຈຸດລ້າງມື ແລະ ສະໜອງສິ່ງອຳນວຍຄວາມສະດວກເຊັ່ນ: ນ້ຳສະອາດ, ສະບູ, ເຈ້ຍເຊັດມື ແລະ ເຈວຂ້າເຊື້ອ ຫຼື ເຫຼົ້າ 70% ຢູ່ໜ້າທາງເຂົ້າ-ອອກ ຫ້ອງປິ່ນປົວ ແລະ ໃນຫ້ອງປິ່ນປົວ.<br>• ທຸກກໍລະນີທີ່ເຂົ້າມາປິ່ນປົວຕ້ອງໝັ່ນລ້າງມືໃສ່ສະບູ ແລ້ວຂ້າເຊື້ອມືດ້ວຍເຈວທີ່ມີສ່ວນປະສົມຂອງເຫຼົ້າ70% ກ່ອນ ແລະ ຫຼັງກິນອາຫານ, ຫຼັງຈາກໃຊ້ຫ້ອງນ້ຳ ແລະ ຫຼັງຈາກສຳຜັດ ຈັບບາຍວັດຖຸສິ່ງຂອງອື່ນໆ. |
|   | **ການໃສ່ຜ້າອັດປາກ-ດັງ ແລະ ການປະຕິບັດຕົນໃນເວລາ ໄອ - ຈາມ**<br>• ຄົນເຈັບຕິດເຊື້ອທຸກກໍລະນີທີ່ກຳລັງນອນປິ່ນປົວ ຕ້ອງໃສ່ຜ້າອັດປາກ-ດັງ ຕະຫຼອດເວລາ;<br>• ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ຂໍ້ພັບແຂນສອກ, ຫຼັງຈາກນັ້ນໃຫ້ລ້າງມືດ້ວຍນ້ຳສະອາດໃສ່ສະບູ, ເຈວລ້າງມື ຫຼື ເຫຼົ້າ 70%;<br>• ໃຫ້ປ່ຽນຜ້າອັດປາກ-ດັງໃໝ່ທຸກໆ ຄັ້ງ ເມື່ອເຫັນວ່າມີຄວາມປຽກຊຸ່ມ ແລະ ເປິເປື້ອນ;<br>• ຕ້ອງຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ໃນຖົງຢາງສອງຊັ້ນ ມັດປາກຖົງໃຫ້ແໜ້ນ ແລ້ວຖິ້ມໃສ່ຖັງຂີ້ເຫຍື້ອຕິດເຊື້ອທີ່ມີຝາປິດ. |
| | **ການຮັກສາໄລຍະຫ່າງ:**<br>• ການຈັດວາງຕຽງນອນຄົນເຈັບແມ່ນໃຫ້ຫ່າງກັນ 1 - 2 ແມັດ; |
|   | **ການອະນາໄມ ແລະ ຂ້າເຊື້ອ**<br>• ຕ້ອງອະນາໄມ ແລະ ຂ້າເຊື້ອຫ້ອງປິ່ນປົວເປັນປະຈຳ:<br>- ອະນາໄມດ້ວຍນ້ຳແຟັບ ແລະ ຂ້າເຊື້ອ ດ້ວຍນ້ຳຢາຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນ 0,5% ຫຼື ນ້ຳຢາຊັກຜ້າຂາວຕາມອັດຕາສ່ວນທີ່ກຳນົດໄວ້ໃນຜະລິດຕະພັນ;<br>- ສຳລັບພື້ນທີ່ຄັບແຄບ, ມູມຫ້ອງ, ຕຽງນອນ, ອຸປະກອນການແພດຕ່າງໆ ຕ້ອງໃຊ້ເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອເຊັດຖູ;<br>- ບໍ່ຄວນນຳໃຊ້ບັ້ງສີດ ທີ່ມີຄວາມດັນສູງສີດໃສ່ພື້ນໂດຍກົງເພື່ອຫຼີກລ່ຽງການກະຈາຍຂອງເຊື້ອພະຍາດ ແຕ່ລຸ່ມຂຶ້ນເທິງ;<br>• ອະນາໄມ ແລະ ຂ້າເຊື້ອ ວັດຖຸ ສິ່ງຂອງ ຫຼື ບ່ອນທີ່ມີການສຳຜັດເລື້ອຍໆ ເຊັ່ນ: ໂທລະສັບ, ໂຕະ, ຕັ່ງ, ລູກບິດປະຕູ, ມືຈັບປະຕູ, ຫ້ອງນ້ຳ ແລະ ອື່ນໆ... |

| | |
|---|---|
| | • ຜ້າແພ ຕ່າງໆ ທີ່ໃຊ້ໃນຫ້ອງປິ່ນປົວ ຕ້ອງຊັກດ້ວຍແຟັບ ແລະ ນ້ຳຮ້ອນ 100 ອົງສາ ຂຶ້ນໄປ, ເມື່ອໃຊ້ນ້ຳເປັນຊັກ ຕ້ອງໃຊ້ນ້ຳຢາຊັກຜ້າຂາວ ທີ່ໄດ້ເຈືອຈາງກັບນ້ຳສະອາດຕາມອັດຕາສ່ວນທີ່ໄດ້ລະບຸໄວ້ໃນຜະລິດຕະພັນ ຫຼື ໃຫ້ແຊ່ດ້ວຍນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,5% - 1%;<br>• ພະນັກງານອະນາໄມ ແລະ ຂ້າເຊື້ອ ຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບຫຼັກການອະນາໄມ ແລະ ຂ້າເຊື້ອ;<br>• ໃນເວລາປະຕິບັດໜ້າທີ່ ພະນັກງານອະນາໄມ ແລະ ຂ້າເຊື້ອ ຕ້ອງໃສ່ຊຸດປ້ອງກັນຕົນເອງຄົບຊຸດ ຕະຫຼອດເວລາ ເຊັ່ນ: ຜ້າອັດປາກ-ດັງ N95, ແວ່ນປ້ອງກັນຕາ, ຖົງມືບາງ, ຖົງມືໜາ, ໝວກ, ຖົງຊຸບຕີນ, ຜ້າຢາງກັນເປື້ອນ, ເກີບໂບກ ແລະ ອື່ນໆ |
|   | **ການລະບາຍອາກາດ**<br>• ເປີດປ່ອງຢ້ຽມ ແລະ ເຄື່ອງດູດອາກາດ ເພື່ອໃຫ້ອາກາດໃນຫ້ອງຖ່າຍເທໄດ້ດີ;<br>• ອະນາໄມ ແລະ ຂ້າເຊື້ອ ພັດລົມ ແລະ ເຄື່ອງດູດອາກາດ ເປັນປະຈຳ. |
|  | **ການຕິດຕາມອຸນຫະພູມຮ່າງກາຍ ( ເອົາເນື້ອໃນຂອງການຄຸ້ມຄອງກໍລະນີຈາກ ກປປ ມາໃສ່ )**<br>• ຄົນເຈັບຕິດເຊື້ອ ທີ່ນອນປິ່ນປົວ ຕ້ອງແທກອຸນຫະພູມຮ່າງກາຍດ້ວຍຕົນເອງເປັນປະຈຳ;<br>• ກໍລະນີມີອຸນຫະພູມຮ່າງກາຍເກີນ 37.5 ອົງສາເຊ ແລະ ມີອາການ: ໄຂ້, ນ້ຳມູກຍ້ອຍ, ເຈັບຄໍ, ໄອ, ຈາມ, ດັງບໍ່ໄດ້ກິ່ນ, ລີ້ນບໍ່ໄດ້ລົດຊາດຕ້ອງລາຍງານແພດໝໍຜູ້ປະຈຳການຢ່າງຮີບດ່ວນ. |
|    | **ການວາງແຜນ, ຄຸ້ມຄອງ ແລະ ຕິດຕາມ ການປະຕິບັດມາດຕະການ**<br>• ແຕ່ງຕັ້ງພະນັກງານຕິດຕາມໃນການຈັດຕັ້ງປະຕິບັດ ມາດຕະການ ກັນ ແລະ ຄວບຄຸມການຕິດເຊື້ອພະຍາດໂຄວິດ-19;<br>• ຕ້ອງມີຂໍ້ມູນຂ່າວສານ ເພື່ອໃຫ້ຄວາມຮູ້ແກ່ພະນັກງານ ແລະ ລູກຄ້າທີ່ມາບໍລິການກ່ຽວກັບມາດຕະການປ້ອງກັນຕົນເອງຈາກການລະບາດພະຍາດ COVID-19;<br>• ມີການປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການນຳສົ່ງ ກໍລະນີສົງໃສ ໄປສະຖານທີ່ແຍກປ່ຽວ ຫຼື ປິ່ນປົວ;<br>• ສຳລັບຜູ້ທີ່ຈະເດີນທາງ ໃຫ້ມີການວາງແຜນລ່ວງໜ້າ, ຊອກຮູ້ຂໍ້ມູນຂ່າວສານກ່ຽວກັບສະພາບການລະບາດຂອງພະຍາດໂຄວິດ-19 ທີ່ມີການປ່ຽນແປງໃນແຕ່ລະວັນ;<br>• ການສຳລະເງິນ ແມ່ນໃຫ້ໃຊ້ວິທີການໂອນເງິນຜ່ານບັນຊີ ຫຼື ຈ່າຍດ້ວຍບັດ ເພື່ອຫຼຸດຜ່ອນການສຳຜັດໂດຍກົງ. |
|  | **ການອະນາໄມຂ້າເຊື້ອຫຼັງຈາກກັບຮອດເຮືອນ**<br>• ຄົນເຈັບທີ່ປິ່ນປົວຫາຍດີແລ້ວ ແລະ ແພດໝໍຜູ້ທີ່ປິ່ນປົວຄົນເຈັບຕິດເຊື້ອຫຼັງຈາກສິ້ນສຸດພາລະກິດ ແລະ ມາດຕະການຕ່າງໆ ກັບຮອດເຮືອນ ຕ້ອງລ້າງມືໃຫ້ສະອາດ, ປ່ຽນເຄື່ອງນຸ່ງ ແລະ ນຳໄປແຊ່ດ້ວຍນ້ຳແຟັບ ຫຼື ນ້ຳຢາຊັກຜ້າຂາວ (ໄຮເຕີ) ຕາມອັດຕາສ່ວນທີ່ໄດ້ກຳນົດໄວ້, ແຊ່ດ້ວຍນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,5% ຫຼື ຕົ້ມດ້ວຍນ້ຳຮ້ອນໃຫ້ຟົດ ເວລາ 20 - 30 ນາທີ;<br>• ເຊັດຂ້າເຊື້ອ ເຄື່ອງໃຊ້ສ່ວນຕົວທຸກຢ່າງເຊັ່ນ: ໂທລະສັບມືຖື, ກະແຈລົດ, ແວ່ນຕາ, ໂມງ, ແຫວນ ແລະ ອື່ນໆ ດ້ວຍເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ 0,5%. |

## 2. ການອະນາໄມ ແລະ ຂ້າເຊື້ອ ຫ້ອງແຍກປ່ຽວຢູ່ສະຖານທີ່ບໍລິການສາທາລະນະສຸກ

| | |
|---|---|
|   | **ການອະນາໄມມື**<br>• ຕ້ອງຈັດໃຫ້ມີຈຸດລ້າງມື ແລະ ສະໜອງສິ່ງອຳນວຍຄວາມສະດວກເຊັ່ນ: ນ້ຳສະອາດ, ສະບູ, ເຈ້ຍເຊັດມື ແລະ ເຈວຂ້າເຊື້ອມື ຫຼື ເຫຼົ້າ 70% ຢູ່ໃນຫ້ອງແຍກປ່ຽວ,<br>• ທຸກຄົນທີ່ເຂົ້າມາໃນຫ້ອງແຍກປ່ຽວ ຕ້ອງລ້າງມືໃສ່ສະບູ ຫຼື ເຈວຂ້າເຊື້ອ ກ່ອນ ເຂົ້າ - ອອກ, ກ່ອນ - ຫຼັງກິນອາຫານ, ຫຼັງຈາກໃຊ້ຫ້ອງນ້ຳ ແລະ ຫຼັງຈາກສຳຜັດ ຈັບບາຍວັດຖຸສິ່ງຂອງອື່ນໆ. |
|   | **ການໃສ່ຜ້າອັດປາກ-ດັງ ແລະ ການປະຕິບັດຕົນໃນເວລາ ໄອ - ຈາມ**<br>• ຄົນທີ່ເຂົ້າມາແຍກປ່ຽວຕ້ອງໃສ່ຜ້າອັດປາກ-ດັງ ຕະຫຼອດເວລາ;<br>• ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ຂໍ້ພັບແຂນສອກ , ຫຼັງຈາກນັ້ນໃຫ້ລ້າງມືດ້ວຍນ້າສະອາດໃສ່ສະບູ, ເຈວ ຂ້າເຊື້ອມື ຫຼື ເຫຼົ້າ 70% ຂຶ້ນໄປ;<br>• ໃຫ້ປ່ຽນຜ້າອັດປາກ-ດັງ ໃໝ່ທຸກໆ ຄັ້ງ ເມື່ອເຫັນວ່າມີຄວາມປຽກຊຸ່ມ ແລະ ເປິເປື້ອນ;<br>• ຕ້ອງຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ໃນຖົງຢາງ ມັດປາກຖົງໃຫ້ແໜ້ນ ແລ້ວຖິ້ມໃສ່ຖັງຂີ້ເຫຍື້ອທີ່ມີຝາປິດ. |
| | **ການຮັກສາໄລຍະຫ່າງ ເພື່ອຫຼີກລ່ຽງຄວາມແອອັດ**<br>• ຕ້ອງຈັດສັນຄົນທີ່ເຂົ້າມາແຍກປ່ຽວຫ້ອງລະ 1 ຄົນ; |
|   | **ການອະນາໄມ ແລະ ຂ້າເຊື້ອ**<br>• ຕ້ອງອະນາໄມ ແລະ ຂ້າເຊື້ອຫ້ອງແຍກປ່ຽວເປັນປະຈຳ:<br>- ອະນາໄມດ້ວຍນ້ຳແຟັບ ແລະ ຂ້າເຊື້ອດ້ວຍນ້ຳຢາຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນ 0,1% ຫຼື ນ້ຳຢາ ຊັກຜ້າຂາວຕາມອັດຕາສ່ວນທີ່ກຳນົດໄວ້ໃນຜະລິດຕະພັນ;<br>- ຕ້ອງໃຊ້ເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ ເຊັດຖູທຸກພື້ນທີ່ຂອງຫ້ອງແຍກປ່ຽວ;<br>• ອະນາໄມ ແລະ ຂ້າເຊື້ອ ວັດຖຸ ສິ່ງຂອງ ຫຼື ບ່ອນທີ່ມີການສຳຜັດເລື້ອຍໆ ເຊັ່ນ: ໂທລະສັບ, ໂຕະ, ຕັ່ງ, ຕຽງ, ລູກບິດປະຕູ, ມືຈັບປະຕູ, ຫ້ອງນ້ຳ ແລະ ອື່ນໆ.<br>• ຜ້າ ແພ ຕ່າງໆ ທີ່ໃຊ້ໃນຫ້ອງ ຕ້ອງຊັກດ້ວຍແຟັບແລ້ວແຊ່ດ້ວຍນ້ຳຢາຊັກຜ້າຂາວ( ໄຮເຕີ ) ທີ່ໄດ້ເຈືອຈາງກັບນ້ຳສະອາດຕາມອັດຕາສ່ວນທີ່ໄດ້ລະບຸໄວ້ໃນຂ້າງກ່ອງຂອງຜະລິດຕະພັນ; |
|   | **ການລະບາຍອາກາດ**<br>• ເປີດປ່ອງຢ້ຽມ, ເຄື່ອງດູດອາກາດ ເພື່ອໃຫ້ອາກາດໃນຫ້ອງຖ່າຍເທໄດ້ດີ;<br>• ອະນາໄມ ແລະ ຂ້າເຊື້ອ ເຄື່ອງປັບອາກາດ, ພັດລົມ ເປັນປະຈຳ. |
|  | **ການຕິດຕາມອຸນຫະພູມຮ່າງກາຍ**<br>• ຜູ້ທີ່ແຍກປ່ຽວຕ້ອງແທກອຸນຫະພູມຮ່າງກາຍດ້ວຍຕົນເອງເປັນປະຈຳ;<br>• ກໍລະນີມີອຸນຫະພູມຮ່າງກາຍເກີນ 37.5 ອົງສາເຊ ແລະ ມີອາການ: ໄຂ້, ນ້ຳມູກຍ້ອຍ, ເຈັບຄໍ, ໄອ, ຈາມ, ດັງບໍ່ໄດ້ກິ່ນ, ລີ້ນບໍ່ໄດ້ລົດຊາດຕ້ອງລາຍງານແພດໝໍຜູ້ປະຈຳການຢ່າງຮີບດ່ວນ. |

| | |
|---|---|
|  | **ການວາງແຜນ, ຄຸ້ມຄອງ ແລະ ຕິດຕາມ ການປະຕິບັດມາດຕະການ**<br>• ຕ້ອງແຕ່ງຕັ້ງພະນັກງານແພດໝໍ ຕິດຕາມ ອາການຊີວິດຂອງຜູ້ແຍກປ່ຽວ;<br>• ຜູ້ທີ່ຖືກແຍກປ່ຽວຕ້ອງຢູ່ໃນຫ້ອງຕະຫຼອດເວລາຈົນກ່ວາຈະຄົບກຳນົດເວລາ;<br>• ຕ້ອງໃຫ້ຂໍ້ມູນຂ່າວສານປະຈຳວັນ ກ່ຽວກັບມາດຕະການປ້ອງກັນຕົນເອງຈາກ ການລະບາດພະຍາດ COVID-19ໃຫ້ແກ່ຜູ້ມາແຍກປ່ຽວ. |
| | **ການອະນາໄມຂ້າເຊື້ອຫຼັງຈາກກັບຮອດເຮືອນ**<br><br>• ເມື່ອກັບຮອດເຮືອນ ຕ້ອງລ້າງມືໃຫ້ສະອາດ, ປ່ຽນເຄື່ອງນຸ່ງ ແລະ ນຳໄປແຊ່ດ້ວຍນ້ຳແຟັບ ຫຼື ນ້ຳຢາຊັກຜ້າຂາວ (ໄຮເຕີ) ຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ ຫຼື ຕົ້ມດ້ວຍນ້ຳຮ້ອນໃຫ້ຟົດ ເວລາ 20 - 30 ນາທີ<br>• ຂ້າເຊື້ອ ເຄື່ອງໃຊ້ສ່ວນຕົວທຸກຢ່າງພາຍຫຼັງອອກຈາກຫ້ອງແຍກປ່ຽວເຊັ່ນ: ໂທລະສັບມືຖື, ກະແຈລົດ, ແວ່ນຕາ, ໂມງ, ແຫວນ ແລະ ອື່ນໆ ດ້ວຍເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ. |

3. ການອະນາໄມ ແລະ ຂ້າເຊື້ອ ຢູ່ສະຖານທີ່ຈຳກັດບໍລິເວນ

| | |
|---|---|
|  | **ການອະນາໄມມື**<br>• ຕ້ອງຈັດໃຫ້ມີຈຸດລ້າງມື ແລະ ສະໜອງສິ່ງອຳນວຍຄວາມສະດວກເຊັ່ນ: ນ້ຳສະອາດ, ສະບູ, ເຈ້ຍເຊັດມື ແລະ ເຈວຂ້າເຊື້ອມື ຫຼື ເຫຼົ້າ 70% ເພື່ອລ້າງມືຢູ່ບໍລິເວນ ໜ້າທາງເຂົ້າ-ອອກ, ບ່ອນລໍຖ້າ, ບ່ອນລົງທະບຽນ, ໜ້າຫ້ອງນອນ ແລະ ຫ້ອງນ້ຳ.<br>• ທຸກຄົນທີ່ເຂົ້າມາໃນສູນຈຳກັດບໍລິເວນ ຕ້ອງລ້າງມືໃສ່ສະບູ ຫຼື ເຈວຂ້າເຊື້ອ ກ່ອນ ເຂົ້າ - ອອກ, ກ່ອນ - ຫຼັງກິນອາຫານ, ກ່ອນ - ຫຼັງ ປຸງແຕ່ງອາຫານ, ຫຼັງຈາກໃຊ້ຫ້ອງນ້ຳ ແລະ ຫຼັງຈາກສຳຜັດຈັບບາຍວັດຖຸສິ່ງຂອງອື່ນໆ. |
| <br> | **ການໃສ່ຜ້າອັດປາກ-ດັງ ແລະ ການປະຕິບັດຕົນໃນເວລາ ໄອ - ຈາມ**<br>• ທຸກຄົນທີ່ເຂົ້າມາໃນສູນຈຳກັດບໍລິເວນ ຕ້ອງໃສ່ຜ້າອັດປາກ-ດັງ( ກໍລະນີທີ່ໃສ່ຜ້າອັດປາກ-ດັງມາແລ້ວຕ້ອງປ່ຽນໃໝ່ທຸກຄັ້ງກ່ອນຈະເຂົ້າໄປໃນຫ້ອງພັກເຊົາ );<br>• ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ຂໍ້ພັບແຂນສອກ, ຫຼັງຈາກນັ້ນໃຫ້ລ້າງມືດ້ວຍນ້ຳສະອາດໃສ່ສະບູ, ເຈວຂ້າເຊື້ອມື ຫຼື ເຫຼົ້າ 70% ຂຶ້ນໄປ;<br>• ກໍລະນີຜູ້ມາຈຳກັດບໍລິເວນມີຄວາມຈຳເປັນອອກຈາກຫ້ອງແມ່ນໃຫ້ໃສ່ຜ້າອັດປາກ-ດັງຕະຫຼອດເວລາ;<br>• ຖ້ານຳໃຊ້ຜ້າອັດປາກ-ດັງ ທີ່ໃຊ້ຄັ້ງດຽວ ແມ່ນໃຫ້ປ່ຽນໃໝ່ທຸກໆຄັ້ງ ເມື່ອເຫັນວ່າມີຄວາມປຽກຊຸ່ມ ແລະ ເປິເປື້ອນ;<br>• ກໍລະນີນຳໃຊ້ຜ້າອັດປາກ-ດັງ ຊະນິດ ຜ້າແພ ຖ້ານຳມາໃຊ້ຄືນ ຕ້ອງຊັກດ້ວຍແຟັບ, ລ້າງດ້ວຍນ້ຳສະອາດແລ້ວຕາກແດດໃຫ້ແຫ້ງ, ລີດດ້ວຍຄວາມຮ້ອນ ຫຼື ຕົ້ມໃຫ້ຟົດໃຊ້ເວລາ 20 - 30 ນາທີທຸກຄັ້ງ;<br>• ຕ້ອງຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ໃນຖັງຂີ້ເຫຍື້ອທີ່ມີຝາປິດ. |
| | **ການຮັກສາໄລຍະຫ່າງ 1 ແມັດ**<br>• ທຸກສະຖານທີ່ ຕ້ອງມີການກຳນົດການຮັກສາໄລຍະຫ່າງ;<br>• ໝາຍສັນຍາລັກໃສ່ພື້ນທີ່ພາຍໃນ ແລະ ພາຍນອກ ໃຫ້ຊັດເຈນ, ໃຫ້ຜູ້ທີ່ຖືກຈຳກັດບໍລິເວນເຫັນວ່າເຂົາເຈົ້າຄວນຢືນ ຫຼື ນັ່ງຢູ່ຈຸດໃດ;<br>• ໃຫ້ມີການຈັດສັນ ຈຳນວນຜູ້ທີ່ຈະເຂົ້າມາຈຳກັດບໍລິເວນປະຈຳວັນ ຕາມຄວາມເໝາະສົມຂອງເນື້ອທີ່ຫ້ອງ ເພື່ອຫຼຸດຜ່ອນການແອອັດ;<br>• ຖ້າບໍ່ສາມາດປະຕິບັດການຮັກສາໄລຍະຫ່າງຢ່າງໜ້ອຍ 1 ແມັດຂຶ້ນໄປ ຕ້ອງໃຊ້ແນວຂັ້ນລະຫວ່າງພະນັກງານ ແລະ ຜູ້ມາຈຳກັດບໍລິເວນ ຫຼື ບຸກຄົນຕໍ່ບຸກຄົນ. |

| | |
|---|---|
| <br> | **ການອະນາໄມ ແລະ ຂ້າເຊື້ອ**<br>• ຕ້ອງອະນາໄມທຸກພື້ນທີ່ ບໍລິເວນສູນຈໍາກັດບໍລິເວນ ເປັນປະຈໍາ:<br>- ອະນາໄມດ້ວຍນໍ້າແຟັບ ແລະ ຂ້າເຊື້ອດ້ວຍນໍ້າຢາຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນ 0,1% ຫຼື ນໍ້າຢາຊັກຜ້າຂາວຕາມອັດຕາສ່ວນທີ່ກໍານົດໄວ້ໃນຜະລິດຕະພັນ;<br>- ສໍາລັບພື້ນທີ່ຄັບແຄບ ຫຼື ມູມຫ້ອງ ໃຫ້ໃຊ້ເຫຼົ້າ 70% ຫຼື ນໍ້າຢາຂ້າເຊື້ອ ເຊັດຖູ;<br>- ບໍ່ຄວນນໍາໃຊ້ບັ້ງສີດ ທີ່ມີຄວາມດັນສູງ ສີດໃສ່ພື້ນໂດຍກົງເພື່ອຫຼີກລ່ຽງການກະຈາຍຂອງເຊື້ອພະຍາດ ແຕ່ລຸ່ມຂຶ້ນເທິງ<br>• ອະນາໄມ ແລະ ຂ້າເຊື້ອ ວັດຖຸ ສິ່ງຂອງ ຫຼື ບ່ອນທີ່ມີການສໍາຜັດເລື້ອຍໆເຊັ່ນ: ບ່ອນລໍຖ້າ, ບ່ອນລົງທະບຽນ, ໂຕະ, ຕັ່ງ, ຕຽງນອນ, ຕູ້, ລູກບິດປະຕູ, ຮາວຈັບປະຕູ, ໄລກອນປະຕູ, ບ່ອນປິດ-ເປີດໄຟ, ໂຕະ, ໂທລະສັບ, ກະແຈ/ແປ້ນກະແຈ, ຫ້ອງນໍ້າ ແລະ ອື່ນໆ...<br>• ຫຸ້ມຫໍ່ຣີໂມດທຸກປະເພດເຊັ່ນ: ຣີໂມດໂທລະພາບ, ແອ...ດ້ວຍພຣາດສະຕິກ ທີ່ງ່າຍໃນການເຊັດຂ້າເຊື້ອ;<br>• ຜ້າຕ່າງໆ ທີ່ໃຊ້ໃນຫ້ອງພັກເຊົາ ຕ້ອງຊັກດ້ວຍແຟັບ ແລະ ນໍ້າຮ້ອນ 100 ອົງສາ ຂຶ້ນໄປ, ເມື່ອໃຊ້ນໍ້າເຢັນຊັກ ຕ້ອງໃຊ້ນໍ້າຢາຊັກຜ້າຂາວ ທີ່ໄດ້ເຈືອຈາງກັບນໍ້າສະອາດ(ກໍລະນີອະນາໄມຂ້າເຊື້ອທົ່ວໄປ ໃຫ້ໃຊ້ນໍ້າຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,05%, ກໍລະນີທີ່ສົງໃສວ່າຕິດເຊື້ອໂຄວິດ-19 ໃຫ້ໃຊ້ນໍ້າຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,1%,);<br>• ພະນັກງານອະນາໄມ ຕ້ອງໃສ່ຜ້າອັດປາກ-ດັງ, ແວ່ນປ້ອງກັນຕາ, ຖົງມື, ຜ້າກັນເປື້ອນ, ໝວກ, ເກີບໂບກ ໃນເວລາເຮັດອະນາໄມທຸກຄັ້ງ;<br>• ຖ້າກໍລະນີສົງໃສ ມີການຕິດເຊື້ອພະຍາດ ໂຄວິດ-19 ຢູ່ສະຖານທີ່ໃດນຶ່ງແມ່ນໃຫ້ປະຕິບັດຕາມຫຼັກການອະນາໄມ ແລະ ຂ້າເຊື້ອ ໃນພາກທີ 3 ຂອງປຶ້ມຄູ່ມືສະບັບນີ້ຢ່າງເຄັ່ງຄັດ. |
|   | **ການລະບາຍອາກາດ**<br><br>• ເປີດປະຕູ ແລະ ປ່ອງຢ້ຽມ ເພື່ອໃຫ້ອາກາດໃນຫ້ອງ ແລະ ອາຄານ ຖ່າຍເທໄດ້ດີ;<br>• ອະນາໄມເຄື່ອງປັບອາກາດ (ແອ), ພັດລົມ ແລະ ເຄື່ອງດູດອາກາດ ເປັນປະຈໍາ. |
|  | **ການກັ່ນກອງດ້ວຍການວັດແທກອຸນຫະພູມ**<br><br>• ຕ້ອງວັດແທກອຸນຫະພູມຮ່າງກາຍຂອງພະນັກງານ ແລະ ຜູ້ຈໍາກັດບໍລິເວນທຸກຄົນ ເຊົ້າ- ແລງ ຈົນຄົບໄລຍະເວລາ 14 ວັນ ໂດຍນໍາໃຊ້ເຄື່ອງກວດອຸນຫະພູມແບບອິນຟາເຣດ (infrared thermometer);<br>• ໃຫ້ມີຈຸດກັ່ນກອງ, ມີພະນັກງານຮັບຜິດຊອບ, ມີຫ້ອງແຍກປ່ຽວຊົ່ວຄາວ;<br>• ກໍລະນີພົບບຸກຄົນໃດທີ່ມີອຸນຫະພູມຮ່າງກາຍເກີນ 37.5 ອົງສາເຊ ແລະ ມີອາການ: ໄຂ້, ນໍ້າມູກຍ້ອຍ, ເຈັບຄໍ, ໄອ, ຈາມ, ດັງບໍ່ໄດ້ກິ່ນ, ລີ້ນບໍ່ໄດ້ລົດຊາດ, ບໍ່ອະນຸຍາດໃຫ້ຜູ້ກ່ຽວເຂົ້າໃນສະຖານທີ່ດັ່ງກ່າວ ແລະ ຕ້ອງແຍກອອກຈາກກຸ່ມຄົນທົ່ວໄປ ແລ້ວໃຫ້ຕິດຕໍ່ຫາໜ່ວຍງານສະເພາະກິດ ໂທຫາສາຍດ່ວນ 165/166 ຫຼື ໂທ 020 54066777. |

| | |
|---|---|
|  | **ການວາງແຜນ, ຄຸ້ມຄອງ ແລະ ຕິດຕາມ ການປະຕິບັດມາດຕະການ**<br>• ມີການສັບປ່ຽນພະນັກງານໃນການເຮັດວຽກ ແລະ ປະຈຳການ ເພື່ອຮັບປະກັນມາດຕະການຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ;<br>• ແຕ່ງຕັ້ງພະນັກງານຕິດຕາມໃນການຈັດຕັ້ງປະຕິບັດ ມາດຕະການ ກັນ ແລະ ຄວບຄຸມການຕິດເຊື້ອພະຍາດໂຄວິດ-19;<br>• ຕ້ອງມີການໃຫ້ຂໍ້ມູນຂ່າວສານປະຈາວັນ ແລະ ໃຫ້ຄວາມຮູ້ແກ່ຜູ້ມາຈາກັດບໍລິເວນ ເຊັ່ນ: ຕິດຕັ້ງເຄື່ອງກະຈາຍສຽງ, ຈໍໂທລະພາບ, ໂປສເຕີຕ່າງໆ ຫຼື ພະນັກງານຕ້ອງໂຄສະນາ - ສຸຂະສຶກສາກັບທີ່ກ່ຽວກັບມາດຕະການປ້ອງກັນຕົນເອງຈາກການລະບາດພະຍາດ COVID-19;<br>• ມີການປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການນຳສົ່ງ ກໍລະນີສົງໃສ ໄປສະຖານທີ່ແຍກປ່ຽວ ຫຼື ປິ່ນປົວ;<br>• ສຳລັບຜູ້ທີ່ຈະເດີນທາງ ໃຫ້ມີການວາງແຜນລ່ວງໜ້າ, ຊອກຮູ້ຂໍ້ມູນຂ່າວສານກ່ຽວກັບສະພາບການລະບາດຂອງພະຍາດໂຄວິດ-19 ທີ່ມີການປ່ຽນແປງໃນແຕ່ລະວັນ; |
| | **ການອະນາໄມຂ້າເຊື້ອຫຼັງຈາກອອກຈາກສູນຈຳກັດບໍລິເວນເວລາກັບຮອດເຮືອນ**<br><br>• ເມື່ອທຸກຄົນກັບຮອດເຮືອນ ຕ້ອງລ້າງມືໃຫ້ສະອາດ, ປ່ຽນເຄື່ອງນຸ່ງ ແລະ ນຳໄປແຊ່ດ້ວຍນ້ຳແຟັບ ຫຼື ນ້ຳຢາຊັກຜ້າຂາວ (ໄຮເຕີ) ຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ ຫຼື ຕົ້ມດ້ວຍນ້ຳຮ້ອນໃຫ້ຟົດ ເວລາ 20 - 30 ນາທີ<br>• ຂ້າເຊື້ອ ເຄື່ອງໃຊ້ສ່ວນຕົວຂອງທ່ານທຸກຄັ້ງທີ່ກັບຮອດເຮືອນເຊັ່ນ: ໂທລະສັບມືຖື, ກະແຈລົດ, ແວ່ນຕາ, ໂມງ, ແຫວນ ແລະ ອື່ນໆ ດ້ວຍເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ. |

## 4. ການອະນາໄມ ແລະ ຂ້າເຊື້ອ ສະຖານທີ່ພັກເຊົາ ໂຮງແຮມ ແລະ ເຮືອນພັກ

| | |
|---|---|
|  | **ການອະນາໄມມື**<br>• ຕ້ອງຈັດໃຫ້ມີຈຸດລ້າງມື ແລະ ສະໜອງສິ່ງອຳນວຍຄວາມສະດວກເຊັ່ນ: ນໍ້າສະອາດ, ສະບູ, ເຈັ້ຍເຊັດມື ແລະ ເຈວລ້າງມື ຫຼື ເຫຼົ້າ 70% ເພື່ອລ້າງມືຢູ່ບໍລິເວນ ໜ້າທາງເຂົ້າ-ອອກ, ບ່ອນຮັບຕ້ອນແຂກ, ບໍລິເວນລໍຖ້າ, ບໍລິເວນໃກ້ລິບ, ຮ້ານອາຫານ ແລະ ຫ້ອງນໍ້າ.<br>• ທຸກຄົນທີ່ເຂົ້າມາໃນໂຮງແຮມ ແລະ ເຮືອນພັກ ຕ້ອງລ້າງມືໃສ່ສະບູ ຫຼື ເຈວຂ້າເຊື້ອ ກ່ອນ ເຂົ້າ - ອອກ, ກ່ອນ - ຫຼັງກິນອາຫານ, ກ່ອນ - ຫຼັງ ປຸງແຕ່ງອາຫານ, ຫຼັງຈາກໃຊ້ຫ້ອງນໍ້າ ແລະ ຫຼັງຈາກສໍາຜັດ ຈັບບາຍວັດຖຸສິ່ງຂອງອື່ນໆ. |
|  | **ການປະຕິບັດຕົນໃນເວລາ ໄອ - ຈາມ**<br>• ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ແຂນສອກ, ຫຼັງຈາກນັ້ນໃຫ້ລ້າງມືດ້ວຍນໍ້າສະອາດໃສ່ສະບູ, ເຈວລ້າງມື ຫຼື ເຫຼົ້າ 70% ຂຶ້ນໄປ;<br>• ຖ້ານໍາໃຊ້ຜ້າອັດປາກ-ດັງ ທີ່ໃຊ້ຄັ້ງດຽວ ແມ່ນໃຫ້ປ່ຽນໃໝ່ທຸກໆຄັ້ງ ເມື່ອເຫັນວ່າມີຄວາມປຽກຊຸ່ມ ແລະ ເປິເປື້ອນ;<br>• ກໍລະນີນໍາໃຊ້ຜ້າອັດປາກ-ດັງ ຊະນິດ ຜ້າແພ ຖ້ານໍາມາໃຊ້ຄືນ ຕ້ອງຊັກດ້ວຍແຟັບ, ລ້າງດ້ວຍນໍ້າສະອາດແລ້ວຕາກແດດໃຫ້ແຫ້ງ, ລີດດ້ວຍຄວາມຮ້ອນ ຫຼື ຕົ້ມໃຫ້ຟົດໃຊ້ເວລາ 20 - 30 ນາທີທຸກຄັ້ງ;<br>• ຕ້ອງຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ໃນຖັງຂີ້ເຫຍື້ອທີ່ມີຝາປິດ. |
| | **ການຮັກສາໄລຍະຫ່າງ 1ແມັດ**<br>• ທຸກສະຖານທີ່ ຕ້ອງມີການກໍານົດການຮັກສາໄລຍະຫ່າງ;<br>• ໝາຍສັນຍາລັກໃສ່ພື້ນທີ່ພາຍໃນ ແລະ ພາຍນອກ ໃຫ້ຊັດເຈນ, ໃຫ້ລູກຄ້າເຫັນວ່າເຂົາເຈົ້າຄວນຢືນ, ນັ່ງຢູ່ ຈຸດໃດ;<br>• ໃຫ້ມີການຈໍາກັດຈໍານວນລູກຄ້າທີ່ໃຊ້ສະຖານທີ່ອອກກໍາລັງກາຍ, ສະຖານທີ່ນວດ, ສະລອຍນໍ້າ ແລະ ອື່ນໆ...<br>• ຖ້າບໍ່ສາມາດປະຕິບັດການຮັກສາໄລຍະຫ່າງ:<br>- ຕ້ອງໃຊ້ແນວຂັ້ນລະຫວ່າງພະນັກງານ ແລະ ລູກຄ້າ<br>- ຕ້ອງປິດການບໍລິການບາງປະເພດທີ່ມີຄວາມສ່ຽງ ຕົວຢ່າງ: ສະລອຍນໍ້າ, ສະຖານທີ່ນວດ ແລະ ສະຖານທີ່ອອກກໍາລັງກາຍ. |

<table>
<tr>
<td><br></td>
<td>
ການອະນາໄມ ແລະ ຂ້າເຊື້ອ<br>
• ຕ້ອງອະນາໄມຫ້ອງທີ່ມີແຂກເຂົ້າພັກເຊົາ ທຸກວັນ:<br>
- ອະນາໄມດ້ວຍນ້ຳແຟັບ ແລະ ຂ້າເຊື້ອດ້ວຍນ້ຳຢາຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນ 0,1% ຫຼື ນ້ຳຢາຊັກຜ້າຂາວຕາມອັດຕາສ່ວນທີ່ກຳນົດໄວ້ໃນຜະລິດຕະພັນ;<br>
- ສຳລັບພື້ນທີ່ຄັບແຄບ ຫຼື ມູມຫ້ອງ ໃຫ້ໃຊ້ເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ;<br>
- ບໍ່ຄວນນຳໃຊ້ບັ້ງສີດ ທີ່ມີຄວາມດັນສູງສີດໃສ່ພື້ນໂດຍກົງເພື່ອຫຼີກລ່ຽງການກະຈາຍຂອງເຊື້ອພະຍາດ ແຕ່ລຸ່ມຂຶ້ນເທິງ<br>
• ອະນາໄມ ແລະ ຂ້າເຊື້ອ ວັດຖຸ ສິ່ງຂອງ ຫຼື ບ່ອນທີ່ມີການສຳຜັດເລື້ອຍໆເຊັ່ນ: ບ່ອນຮັບຕ້ອນ, ໂຕະ, ຕັ່ງ, ປຸ່ມກົດລິບ, ລູກບິດປະຕູ, ຮາວຈັບປະຕູ, ຫ້ອງນ້ຳ ແລະ ອື່ນໆ...<br>
• ອະນາໄມ ແລະ ຂ້າເຊື້ອສິ່ງຂອງ ຫຼື ບ່ອນທີ່ມີການສຳຜັດເລື້ອຍໆໃນຫ້ອງນອນຂອງແຂກເຊັ່ນ: ໄລກອນປະຕູ, ບ່ອນປິດ-ເປີດໄຟ, ໂຕະ, ໂທລະສັບ, ກະແຈ/ແປ້ນກະແຈ ແລະ ອື່ນໆ....<br>
• ຫຸ້ມຫໍ່ຣີໂມດທຸກປະເພດເຊັ່ນ: ຣີໂມດໂທລະພາບ, ແອ...ດ້ວຍພຣາດສະຕິກ ທີ່ງ່າຍໃນການເຊັດຂ້າເຊື້ອ;<br>
• ຜ້າຕ່າງໆ ທີ່ໃຊ້ໃນຫ້ອງນອນ ຕ້ອງຊັກດ້ວຍແຟັບ ແລະ ນ້ຳຮ້ອນ 100 ອົງສາ ຂຶ້ນໄປ, ເມື່ອໃຊ້ນ້ຳເຢັນຊັກ ຕ້ອງໃຊ້ນ້ຳຢາຊັກຜ້າຂາວ ທີ່ໄດ້ເຈືອຈາງກັບນ້ຳສະອາດ(ກໍລະນີອະນາໄມຂ້າເຊື້ອທົ່ວໄປໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,05%, ກໍລະນີທີ່ສົງໃສວ່າຕິດເຊື້ອໂຄວິດ-19 ໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,1%,);<br>
• ພະນັກງານອະນາໄມ ຕ້ອງໃສ່ຜ້າອັດປາກ-ດັງ, ແວ່ນປ້ອງກັນຕາ, ຖົງມື, ຜ້າກັນເປື້ອນ, ໝວກ, ເກີບໂບກ ໃນເວລາເຮັດອະນາໄມທຸກຄັ້ງ;<br>
• ຖ້າກໍລະນີສົງໃສວ່າມີການຕິດເຊື້ອພະຍາດ ໂຄວິດ-19 ຢູ່ສະຖານທີ່ໃດນຶ່ງແມ່ນໃຫ້ປະຕິບັດຕາມຫຼັກການອະນາໄມ ແລະ ຂ້າເຊື້ອ ໃນພາກທີ 3 ຂອງປຶ້ມຄູ່ມືສະບັບນີ້.
</td>
</tr>
<tr>
<td> </td>
<td>
ການລະບາຍອາກາດ<br>
• ເປີດປະຕູ ແລະ ປ່ອງຢ້ຽມ ເພື່ອໃຫ້ອາກາດໃນຫ້ອງ ແລະ ອາຄານ ຖ່າຍເທໄດ້ດີ;<br>
• ໃຊ້ເຄື່ອງປັບອາກາດ (ແອ),ພັດລົມ ແລະ ເຄື່ອງດູດອາກາດ ເພື່ອໃຫ້ອາກາດ ພາຍໃນຖ່າຍເທ.
</td>
</tr>
<tr>
<td></td>
<td>
ການກັ່ນກອງດ້ວຍການວັດແທກອຸນຫະພູມ<br>
• ຕ້ອງວັດແທກອຸນຫະພູມຮ່າງກາຍຂອງພະນັກງານ ແລະ ລູກຄ້າທຸກຄົນ ໂດຍນຳໃຊ້ເຄື່ອງກວດອຸນຫະພູມແບບອິນຟາເຣດ (infrared thermometer);<br>
• ໃຫ້ມີຈຸດກັ່ນກອງ, ມີພະນັກງານຮັບຜິດຊອບ, ມີຫ້ອງແຍກປ່ຽວຊົ່ວຄາວ;<br>
• ກໍລະນີພົບບຸກຄົນໃດທີ່ມີອຸນຫະພູມຮ່າງກາຍເກີນ 37.5 ອົງສາເຊ ແລະ ມີອາການ: ໄຂ້, ນ້ຳມູກຍ້ອຍ, ເຈັບຄໍ, ໄອ, ຈາມ, ດັງບໍ່ໄດ້ກິ່ນ, ລີ້ນບໍ່ໄດ້ລົດຊາດ, ບໍ່ອະນຸຍາດໃຫ້ຜູ້ກ່ຽວເຂົ້າໃນສະຖານທີ່ດັ່ງກ່າວ ແລະ ຕ້ອງແຍກອອກຈາກກຸ່ມຄົນທົ່ວໄປ ແລ້ວໃຫ້ຕິດຕໍ່ຫາໜ່ວຍງານສະເພາະກິດ ໂທຫາສາຍດ່ວນ 165/166 ຫຼື ໂທ 020 54066777.
</td>
</tr>
</table>

| | |
|---|---|
|  | **ການວາງແຜນ, ຄຸ້ມຄອງ ແລະ ຕິດຕາມ ການປະຕິບັດມາດຕະການ**<br>• ມີການສັບປ່ຽນພະນັກງານໃນການເຮັດວຽກ ແລະ ປະຈຳການ ເພື່ອຮັບປະກັນມາດຕະການຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ;<br>• ແຕ່ງຕັ້ງພະນັກງານຕິດຕາມໃນການຈັດຕັ້ງປະຕິບັດ ມາດຕະການ ກັນ ແລະ ຄວບຄຸມການຕິດເຊື້ອພະຍາດໂຄວິດ-19;<br>• ຕ້ອງມີຂໍ້ມູນຂ່າວສານ ເພື່ອໃຫ້ຄວາມຮູ້ແກ່ພະນັກງານ ແລະ ລູກຄ້າທີ່ມາບໍລິການກ່ຽວກັບມາດຕະການປ້ອງກັນຕົນເອງຈາກການລະບາດພະຍາດ COVID-19;<br>• ມີການປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການນຳສົ່ງ ກໍລະນີສົງໃສ ໄປສະຖານທີ່ແຍກປ່ຽວ ຫຼື ປິ່ນປົວ;<br>• ສຳລັບຜູ້ທີ່ຈະເດີນທາງ ໃຫ້ມີການວາງແຜນລ່ວງໜ້າ, ຊອກຮູ້ຂໍ້ມູນຂ່າວສານກ່ຽວກັບສະພາບການລະບາດຂອງພະຍາດໂຄວິດ-19 ທີ່ມີການປ່ຽນແປງໃນແຕ່ລະວັນ;<br>• ການສຳລະເງິນ ແມ່ນໃຫ້ໃຊ້ວິທີການໂອນເງິນຜ່ານບັນຊີ ຫຼື ຈ່າຍດ້ວຍບັດ ເພື່ອຫຼຸດຜ່ອນການສຳຜັດໂດຍກົງ. |
| | **ການອະນາໄມຂ້າເຊື້ອຫຼັງຈາກກັບຮອດເຮືອນ**<br><br>• ເມື່ອທຸກຄົນກັບຮອດເຮືອນ ຕ້ອງລ້າງມືໃຫ້ສະອາດ, ປ່ຽນເຄື່ອງນຸ່ງ ແລະ ນຳໄປແຊ່ດ້ວຍນ້ຳແຟັບ ຫຼື ນ້ຳຢາຊັກຜ້າຂາວ (ໄຮເຕີ) ຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ ຫຼື ຕົ້ມດ້ວຍນ້ຳຮ້ອນໃຫ້ຟົດ ເວລາ 20 - 30 ນາທີ<br>• ຂ້າເຊື້ອ ເຄື່ອງໃຊ້ສ່ວນຕົວຂອງທ່ານທຸກຄັ້ງທີ່ກັບຮອດເຮືອນເຊັ່ນ: ໂທລະສັບມືຖື, ກະແຈລົດ, ແວ່ນຕາ, ໂມງ, ແຫວນ ແລະ ອື່ນໆ ດ້ວຍເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ. |

## 5. ການອະນາໄມ ແລະ ຂ້າເຊື້ອຢູ່ຮ້ານອາຫານ, ພັດຕະຄານ, ສະຖານທີ່ທ່ອງທ່ຽວ ແລະ ສະຖານບັນເທີງ

| | |
|---|---|
|   | **ການອະນາໄມມື**<br>• ຕ້ອງຈັດໃຫ້ມີຈຸດລ້າງມື ແລະ ສະໜອງສິ່ງອໍານວຍຄວາມສະດວກເຊັ່ນ: ນໍ້າສະອາດ, ສະບູ, ເຈ້ຍເຊັດມື ແລະ ເຈວລ້າງມື ຫຼື ເຫຼົ້າ 70% ເພື່ອລ້າງມືຢູ່ບໍລິເວນ ໜ້າທາງເຂົ້າ-ອອກ, ບ່ອນຮັບຕ້ອນແຂກ, ບໍລິເວນໃກ້ລິບ, ບ່ອນປຸງແຕ່ງອາຫານ ແລະ ຫ້ອງນໍ້າ;<br>• ທຸກຄົນທີ່ເຂົ້າມາໃນສະຖານທີ່ດັ່ງກ່າວ ຕ້ອງລ້າງມືໃສ່ສະບູ ຫຼື ເຈວຂ້າເຊື້ອ ກ່ອນ ເຂົ້າ - ອອກ, ກ່ອນ - ຫຼັງ ຮັບປະທານອາຫານ, ກ່ອນ - ຫຼັງ ປຸງແຕ່ງອາຫານ, ຫຼັງຈາກໃຊ້ຫ້ອງນໍ້າ ແລະ ຫຼັງຈາກສໍາຜັດ ຈັບບາຍວັດຖຸສິ່ງຂອງອື່ນໆ;<br>• ສໍາລັບພະນັກງານປຸງແຕ່ງອາຫານ ຕ້ອງໃສ່ຖົງມື ແລະ ປ່ຽນໃໝ່ທຸກຄັ້ງໃນກໍລະນີດັ່ງນີ້:<br>- ຖ້າເຫັນວ່າເປື້ອນ ຫຼື ຈີກຂາດ ໃຫ້ປ່ຽນໃໝ່ທັນທີ;<br>- ຖ້າຈັບບາຍວັດຖຸສິ່ງຂອງອື່ນ ຕົວຢ່າງ: ຈັບບາຍເງິນ, ໂທລະສັບ.......ແມ່ນໃຫ້ປ່ຽນທັນທີ<br>• ສໍາລັບພະນັກງານເສີບ ຫຼື ຜູ້ຊ່ວຍປຸງແຕ່ງອາຫານ ຕ້ອງໃສ່ຖົງມື ແລະ ປ່ຽນໃໝ່ທຸກຄັ້ງທີ່ເຫັນວ່າເປື້ອນ ຫຼື ມີການຈີກຂາດ. |
|   | **ການປະຕິບັດຕົນໃນເວລາ ໄອ-ຈາມ**<br>• ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ແຂນສອກ, ຫຼັງຈາກນັ້ນໃຫ້ລ້າງມືດ້ວຍນໍ້າສະອາດໃສ່ສະບູ, ເຈວລ້າງມື ຫຼື ເຫຼົ້າ 70% ຂຶ້ນໄປ;<br>• ຖ້ານໍາໃຊ້ຜ້າອັດປາກ-ດັງ ທີ່ໃຊ້ຄັ້ງດຽວ ແມ່ນໃຫ້ປ່ຽນໃໝ່ທຸກໆຄັ້ງ ເມື່ອເຫັນວ່າມີຄວາມປຽກຊຸ່ມ ແລະ ເປິເປື້ອນ;<br>• ກໍລະນີນໍາໃຊ້ຜ້າອັດປາກ-ດັງ ຊະນິດ ຜ້າແພ ຖ້ານໍາມາໃຊ້ຄືນ ຕ້ອງຊັກດ້ວຍແຟັບ, ລ້າງດ້ວຍນໍ້າສະອາດແລ້ວຕາກແດດໃຫ້ແຫ້ງ, ລີດດ້ວຍຄວາມຮ້ອນ ຫຼື ຕົ້ມໃຫ້ຟົດໃຊ້ເວລາ 20 - 30 ນາທີທຸກຄັ້ງ;<br>• ຕ້ອງຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ໃນຖົງຢາງມັດປາກຖົງໃຫ້ແໜ້ນແລ້ວຖິ້ມໃສ່ຖັງຂີ້ເຫຍື້ອທີ່ມີຝາປິດ. |
|  | **ການຮັກສາໄລຍະຫ່າງ 1 ແມັດ**<br>• ທຸກສະຖານທີ່ ຕ້ອງມີການກໍານົດການຮັກສາໄລຍະຫ່າງ;<br>• ໝາຍສັນຍາລັກໃສ່ພື້ນທີ່ພາຍໃນ ແລະ ພາຍນອກ ໃຫ້ຊັດເຈນ, ໃຫ້ລູກຄ້າເຫັນວ່າເຂົາເຈົ້າຄວນຢືນ ຫຼື ນັ່ງຢູ່ ຈຸດໃດ;<br>• ການຈັດວາງໂຕະ, ຕັ່ງ ໃຫ້ເໝາະສົມກັບສະຖານທີ່ ແລະ ຮັກສາໄລຍະຫ່າງຕາມມາດຕະການ<br>• ໃຫ້ມີການຈໍາກັດຈໍານວນລູກຄ້າພ້ອມທັງຈັດວາງສິນຄ້າພາຍໃນຮ້ານ ໃຫ້ມີຄວາມເໝາະສົມເພື່ອຮັກສາໄລຍະຫ່າງ<br>• ຕ້ອງໃຊ້ແນວຂັ້ນລະຫວ່າງພະນັກງານຂາຍ ແລະ ລູກຄ້າ<br>• ຫຼີກລ້ຽງການໄປສະຖານທີ່ຊຸມຊົນແອອັດ ຫຼື ເຂດທີ່ມີຄວາມສ່ຽງ<br>• ຖ້າສະຖານທີ່ນັ້ນຢູ່ໃນເຂດທີ່ມີຄວາມສ່ຽງໃນການຕິດເຊື້ອຕ້ອງປິດການບໍລິການທັນທີ |

| | |
|---|---|
|  | **ການອະນາໄມ ແລະ ຂ້າເຊື້ອ**<br>• ຕ້ອງອະນາໄມສະຖານທີ່ດັ່ງກ່າວ ໃຫ້ມີຄວາມສະອາດຕະຫຼອດເວລາ:<br>- ອະນາໄມດ້ວຍນ້ຳແຟັບ ແລະ ຂ້າເຊື້ອດ້ວຍນ້ຳຢາຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນ 0,1% ຫຼື ນ້ຳຢາຊັກຜ້າຂາວຕາມອັດຕາສ່ວນທີ່ກຳນົດໄວ້ໃນຜະລິດຕະພັນ;<br>- ສຳລັບພື້ນທີ່ຄັບແຄບ ຫຼື ມູມຫ້ອງ ໃຫ້ໃຊ້ເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ;<br>- ບໍ່ຄວນນຳໃຊ້ບັ້ງສີດ ທີ່ມີຄວາມດັນສູງສີດໃສ່ພື້ນໂດຍກົງເພື່ອຫຼີກລ່ຽງການກະຈາຍຂອງເຊື້ອພະຍາດ ແຕ່ລຸ່ມຂຶ້ນເທິງ<br>• ອະນາໄມ ແລະ ຂ້າເຊື້ອ ວັດຖຸ ສິ່ງຂອງ ຫຼື ບ່ອນທີ່ມີການສຳຜັດເລື້ອຍໆເຊັ່ນ: ບ່ອນຮັບຕ້ອນ, ໂຕະ, ຕັ່ງ, ປຸ່ມກົດລິບ, ກະຕ່າ-ລໍ້ຍູ້ເຄື່ອງ, ຊິງຊັ່ງ, ລູກບິດປະຕູ, ຮາວຈັບປະຕູ, ຮາວຂັ້ນໄດ, ຫ້ອງນ້ຳ ແລະ ອື່ນໆ...<br>• ອະນາໄມ ແລະ ຂ້າເຊື້ອ ເຄື່ອງລະບາຍອາກາດເປັນປະຈຳເຊັ່ນ: ເຄື່ອງປັບອາກາດ (ແອ), ພັດລົມ ແລະ ເຄື່ອງດູດອາກາດ;<br>• ຫຸ້ມຫໍ່ຣີໂມດທຸກປະເພດເຊັ່ນ: ຣີໂມດໂທລະພາບ, ແອ...ດ້ວຍພຣາດສະຕິກ ເພື່ອສະດວກໃນການອະນາໄມ ແລະ ຂ້າເຊື້ອ;<br>• ປະເພດຜ້າຕ່າງໆ ຕ້ອງຊັກດ້ວຍແຟັບ ແລະ ນ້ຳຮ້ອນ 100 ອົງສາ ຂຶ້ນໄປ, ເມື່ອໃຊ້ນ້ຳເຢັນຊັກ ຕ້ອງໃຊ້ນ້ຳຢາຊັກຜ້າຂາວ ທີ່ໄດ້ເຈືອຈາງກັບນ້ຳສະອາດ(ກໍລະນີອະນາໄມຂ້າເຊື້ອທົ່ວໄປ ໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,05%, ກໍລະນີທີ່ສົງໃສວ່າຕິດເຊື້ອໂຄວິດ-19 ໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,1%,);<br>• ພະນັກງານອະນາໄມ ຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບການປ້ອງກັນຕົນເອງ ແລະ ຫຼັກການອະນາໄມ-ຂ້າເຊື້ອ;<br>• ພະນັກງານອະນາໄມ ຕ້ອງໃສ່ຜ້າອັດປາກ-ດັງ, ແວ່ນປ້ອງກັນຕາ, ຖົງມື, ຜ້າກັນເປື້ອນ, ໝວກ, ເກີບໂບກ ໃນເວລາເຮັດອະນາໄມທຸກຄັ້ງ;<br>• ອຸປະກອນ, ພາຊະນະ ທີ່ໃຊ້ໃນການປຸງແຕ່ງ ແລະ ບັນຈຸອາຫານ ພ້ອມທັງເຄື່ອງໃຊ້ອື່ນໆ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອ ຕ້ອງລ້າງໃຫ້ສະອາດ, ອະນາໄມ ແລະ ຂ້າເຊື້ອ ເປັນປະຈຳ;<br>• ຖ້າກໍລະນີສົງໃສວ່າມີການຕິດເຊື້ອພະຍາດ ໂຄວິດ-19 ຢູ່ສະຖານທີ່ໃດນຶ່ງແມ່ນໃຫ້ປະຕິບັດຕາມຫຼັກການອະນາໄມ ແລະ ຂ້າເຊື້ອ ໃນພາກທີ 3 ຂອງປຶ້ມຄູ່ມືສະບັບນີ້. |
|  | **ສະພາບການລະບາຍອາກາດ**<br>• ເປີດປະຕູ ແລະ ປ່ອງຢ້ຽມ ເພື່ອໃຫ້ອາກາດໃນຫ້ອງ ແລະ ອາຄານ ຖ່າຍເທໄດ້ດີ;<br>• ອະນາໄມ ແລະ ຂ້າເຊື້ອ ເຄື່ອງປັບອາກາດ (ແອ), ພັດລົມ ແລະ ເຄື່ອງດູດອາກາດ ເປັນປະຈຳ. |
|  | **ການກັ່ນກອງດ້ວຍການວັດແທກອຸນຫະພູມ**<br>• ໃຫ້ມີຈຸດກັ່ນກອງ, ມີພະນັກງານຮັບຜິດຊອບ ແລະ ມີຈຸດແຍກປ່ຽວຊົ່ວຄາວ<br>• ກໍລະນີພົບບຸກຄົນໃດທີ່ມີອຸນຫະພູມຮ່າງກາຍເກີນ 37.5 ອົງສາເຊ ແລະ ມີອາການ: ໄຂ້, ນ້ຳມູກຍ້ອຍ, ເຈັບຄໍ, ໄອ, ຈາມ, ດັງບໍ່ໄດ້ກິ່ນ, ລີ້ນບໍ່ໄດ້ລົດຊາດ, ບໍ່ອະນຸຍາດໃຫ້ຜູ້ກ່ຽວເຂົ້າໃນ |

| | |
|---|---|
| | ສະຖານທີ່ດັ່ງກ່າວ ແລະ ຕ້ອງແຍກອອກຈາກກຸ່ມຄົນທົ່ວໄປ ແລ້ວໃຫ້ຕິດຕໍ່ຫາໜ່ວຍງານ ສະເພາະກິດ ໂທຫາສາຍດ່ວນ 165/166 ຫຼື ໂທ 020 54066777 |
| <br> | **ການປະຈຳການ ຂອງພະນັກງານ**<br>• ໃຫ້ມີມາດຕະການປ້ອງກັນ ແລະ ຮັກສາໄລຍະຫ່າງຢ່າງໜ້ອຍ 1 ແມັດ ຫຼື ມີການສັບປ່ຽນ ພະນັກງານປະຈຳການເພື່ອຫຼຸດຜ່ອນຄວາມແອອັດ;<br>• ແຕ່ງຕັ້ງພະນັກງານຕິດຕາມໃນການຈັດຕັ້ງປະຕິບັດ ມາດຕະການ ກັນ ແລະ ຄວບຄຸມການ ຕິດເຊື້ອພະຍາດໂຄວິດ-19;<br>• ຕ້ອງມີຂໍ້ມູນຂ່າວສານ ເພື່ອໃຫ້ຄວາມຮູ້ແກ່ພະນັກງານ ແລະ ລູກຄ້າທີ່ມາບໍລິການກ່ຽວກັບມາດ ຕະການປ້ອງກັນຕົນເອງຈາກການລະບາດພະຍາດ COVID-19;<br>• ມີການປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການນຳສົ່ງ ກໍລະນີສົງໃສ ໄປສະຖານທີ່ ແຍກປ່ຽວ ຫຼື ປິ່ນປົວ;<br>• ການສຳລະເງິນ ແມ່ນໃຫ້ໃຊ້ວິທີການໂອນເງິນຜ່ານບັນຊີ ຫຼື ຈ່າຍດ້ວຍບັດ ເພື່ອຫຼຸດຜ່ອນການ ສຳຜັດໂດຍກົງ. |
| **ເຮືອນ** | **ການອະນາໄມ ແລະ ຂ້າເຊື້ອ ຫຼັງກັບຮອດເຮືອນ**<br><br>• ເມື່ອທຸກຄົນກັບຮອດເຮືອນ ຕ້ອງລ້າງມືໃຫ້ສະອາດ, ປ່ຽນເຄື່ອງນຸ່ງ ແລະ ນຳໄປແຊ່ດ້ວຍນໍ້າ ແຟັບ ຫຼື ນໍ້າຢາຊັກຜ້າຂາວ (ໄຮເຕີ) ຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ ຫຼື ຕົ້ມດ້ວຍນໍ້າຮ້ອນໃຫ້ ຟົດ ເວລາ 20 - 30 ນາທີ<br>• ຂ້າເຊື້ອ ເຄື່ອງໃຊ້ສ່ວນຕົວຂອງທ່ານທຸກຄັ້ງທີ່ກັບຮອດເຮືອນເຊັ່ນ: ໂທລະສັບມືຖື, ກະແຈລົດ, ແວ່ນຕາ, ໂມງ, ແຫວນ ແລະ ອື່ນໆ ດ້ວຍເຫຼົ້າ 70% ຫຼື ນໍ້າຢາຂ້າເຊື້ອ. |

### 6. ການອະນາໄມ ແລະ ຂ້າເຊື້ອສະຖານທີ່ ດ່ານສາກົນທາງບົກ, ດ່ານສະໜາມບິນສາກົນ ແລະ ພາຍໃນ

| | |
|---|---|
|  | **ການອະນາໄມມື**<br>• ຕ້ອງຈັດໃຫ້ມີຈຸດລ້າງມື ແລະ ສະໜອງສິ່ງອຳນວຍຄວາມສະດວກເຊັ່ນ: ນ້ຳສະອາດ, ສະບູ, ເຈ້ຍເຊັດມື ແລະ ເຈວລ້າງມື ຫຼື ເຫຼົ້າ 70% ເພື່ອລ້າງມືຢູ່ບໍລິເວນ ໜ້າທາງເຂົ້າ-ອອກ, ບ່ອນແຈ້ງປີ້, ບ່ອນແຈ້ງຄົນເຂົ້າ-ອອກເມືອງ, ຫ້ອງລໍຖ້າ, ບໍລິເວນໃກ້ລິບ, ຮ້ານອາຫານ ແລະ ຫ້ອງນ້ຳ.<br>• ທຸກຄົນທີ່ເຂົ້າມາໃນດ່ານ ຫຼື ສະໜາມບິນ ຕ້ອງລ້າງມືໃສ່ສະບູ ຫຼື ເຈວຂ້າເຊື້ອ ກ່ອນ ເຂົ້າ - ອອກ, ກ່ອນ - ຫຼັງກິນອາຫານ, ກ່ອນ - ຫຼັງ ປຸງແຕ່ງອາຫານ, ຫຼັງຈາກໃຊ້ຫ້ອງນ້ຳ ແລະ ຫຼັງຈາກສຳຜັດ ຈັບບາຍວັດຖຸສິ່ງຂອງອື່ນໆ. |
| <br> | **ການໃສ່ຜ້າອັດປາກ-ດັງ ແລະ ການປະຕິບັດຕົນໃນເວລາ ໄອ - ຈາມ**<br>• ທຸກຄົນທີ່ເຂົ້າມາໃຊ້ບໍລິການຕ້ອງໃສ່ຜ້າອັດປາກ-ດັງ ທຸກຄັ້ງ;<br>• ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ແຂນສອກ, ຫຼັງຈາກນັ້ນໃຫ້ລ້າງມືດ້ວຍນ້ຳສະອາດໃສ່ສະບູ, ເຈວລ້າງມື ຫຼື ເຫຼົ້າ 70%;<br>• ຖ້ານຳໃຊ້ຜ້າອັດປາກ-ດັງ ທີ່ໃຊ້ຄັ້ງດຽວ ແມ່ນໃຫ້ປ່ຽນໃໝ່ທຸກໆຄັ້ງ ເມື່ອເຫັນວ່າມີຄວາມປຽກຊຸ່ມ ແລະ ເປິເປື້ອນ;<br>• ກໍລະນີນຳໃຊ້ຜ້າອັດປາກ-ດັງ ຊະນິດ ຜ້າແພ ຖ້ານຳມາໃຊ້ຄືນ ຕ້ອງຊັກດ້ວຍແຟັບ, ລ້າງດ້ວຍນ້ຳສະອາດແລ້ວຕາກແດດໃຫ້ແຫ້ງ, ລີດດ້ວຍຄວາມຮ້ອນ ຫຼື ຕົ້ມໃຫ້ຟົດໃຊ້ເວລາ 20 - 30 ນາທີ ທຸກຄັ້ງ;<br>• ຕ້ອງຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ໃນຖັງຂີ້ເຫຍື້ອທີ່ມີຝາປິດ. |
|  | **ການຮັກສາໄລຍະຫ່າງ 1 ແມັດ**<br>• ທຸກສະຖານທີ່ ຕ້ອງມີການກຳນົດການຮັກສາໄລຍະຫ່າງ;<br>• ໝາຍສັນຍາລັກໃສ່ພື້ນທີ່ພາຍໃນ ແລະ ພາຍນອກ ໃຫ້ຊັດເຈນ, ໃຫ້ຄົນເຂົ້າ-ອອກ ເຫັນວ່າເຂົາເຈົ້າຄວນຢືນ ຫຼື ນັ່ງຢູ່ ຈຸດໃດ;<br>• ໃຫ້ມີການຈຳກັດຈຳນວນຜູ້ໂດຍສານ ແລະ ບຸກຄົນ ທີ່ເຂົ້າ-ອອກດ່ານ ໃຫ້ເໝາະສົມ;<br>• ຖ້າບໍ່ສາມາດປະຕິບັດການຮັກສາໄລຍະຫ່າງ:<br>- ຕ້ອງໃຊ້ແນວຂັ້ນລະຫວ່າງພະນັກງານ ແລະ ຜູ້ມາບໍລິການ<br>- ຕ້ອງປິດການບໍລິການບາງປະເພດທີ່ມີຄວາມສ່ຽງເຊັ່ນ: ຮ້ານຂາຍເຄື່ອງຍ່ອຍ, ຮ້ານອາຫານ, ທະນາຄານ, ບ່ອນແລກປ່ຽນເງິນຕາ ແລະ ອື່ນໆ ທີ່ມີຄວາມສ່ຽງ..... |
| | • ອະນາໄມ ແລະ ຂ້າເຊື້ອ ວັດຖຸ ສິ່ງຂອງ ຫຼື ບ່ອນທີ່ມີການສຳຜັດເລື້ອຍໆເຊັ່ນ: ບ່ອນຮັບຕ້ອນ, ໂຕະ, ຕັ່ງ, ປຸ່ມເປີດ-ປິດ ດອກໄຟ, ປຸ່ມກົດລິບ, ລູກບິດປະຕູ, ຮາວຈັບປະຕູ, ຮາວຂັ້ນໄດ, ອຸປະກອນການອອກກຳລັງກາຍທຸກຊະນິດກ່ອນປ່ຽນໃຫ້ຄົນອື່ນນຳໃຊ້, ຫ້ອງນ້ຳ ແລະ ອື່ນໆ...<br>• ຫຸ້ມຫໍ່ຣີໂມດທຸກປະເພດເຊັ່ນ: ຣີໂມດໂທລະພາບ, ແອ...ດ້ວຍພຣາດສະຕິກ ທີ່ງ່າຍໃນການເຊັດຂ້າເຊື້ອ;<br>• ຜ້າຕ່າງໆ ທີ່ໃຊ້ໃນສະຖານທີ່ອອກກຳລັງກາຍ ຕ້ອງຊັກດ້ວຍແຟັບ ແລະ ນ້ຳຮ້ອນ 100 ອົງສາຂຶ້ນໄປ, ເມື່ອໃຊ້ນ້ຳເຢັນຊັກ ຕ້ອງໃຊ້ນ້ຳຢາຊັກຜ້າຂາວ ທີ່ໄດ້ເຈືອຈາງກັບນ້ຳສະອາດ(ກໍລະນີອະນາໄມຂ້າເຊື້ອທົ່ວໄປ ໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,05%, ກໍລະນີທີ່ສົງໃສວ່າຕິດເຊື້ອໂຄວິດ-19 ໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,1%,);<br>• ພະນັກງານອະນາໄມ ຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບ ຫຼັກການອະນາໄມ ແລະ ຂ້າເຊື້ອ;<br>• ພະນັກງານອະນາໄມຕ້ອງໃສ່ຜ້າອັດປາກ-ດັງ, ແວ່ນປ້ອງກັນຕາ, ຖົງມື, ຜ້າກັນເປື້ອນ, ໝວກ, ເກີບໂບກ ໃນເວລາປະຕິບັດໜ້າທີ່;<br>• ຖ້າກໍລະນີສົງໃສວ່າມີການຕິດເຊື້ອພະຍາດ ໂຄວິດ-19 ແມ່ນໃຫ້ປະຕິບັດຕາມຫຼັກການອະນາໄມ ແລະ ຂ້າເຊື້ອ ໃນພາກທີ 3 ຂອງປື້ມຄູ່ມືສະບັບນີ້ຢ່າງເຄັ່ງຄັດ. |
|   | **ການລະບາຍອາກາດ**<br><br>• ເປີດປະຕູ ແລະ ປ່ອງຢ້ຽມ ເພື່ອໃຫ້ອາກາດໃນຫ້ອງ ແລະ ອາຄານ ຖ່າຍເທໄດ້ດີ;<br>• ອະນາໄມ ແລະ ຂ້າເຊື້ອເຄື່ອງປັບອາກາດ (ແອ), ພັດລົມ ແລະ ເຄື່ອງດູດອາກາດ ເປັນປະຈຳ. |
|  | **ການກັ່ນກອງດ້ວຍການວັດແທກອຸນຫະພູມ**<br><br>• ຕ້ອງວັດແທກອຸນຫະພູມຮ່າງກາຍຂອງພະນັກງານ ແລະ ຜູ້ມາອອກກຳລັງກາຍທຸກຄົນ ໂດຍນຳໃຊ້ເຄື່ອງກວດອຸນຫະພູມແບບອິນຟາເຣດ (infrared thermometer);<br>• ໃຫ້ມີຈຸດກັ່ນກອງ, ມີພະນັກງານຮັບຜິດຊອບ, ມີຫ້ອງແຍກປ່ຽວຊົ່ວຄາວ;<br>• ກໍລະນີພົບບຸກຄົນໃດທີ່ມີອຸນຫະພູມຮ່າງກາຍເກີນ 37.5 ອົງສາເຊ ແລະ ມີອາການ: ໄຂ້, ນ້ຳມູກຍ້ອຍ, ເຈັບຄໍ, ໄອ, ຈາມ, ດັງບໍ່ໄດ້ກິ່ນ, ລີ້ນບໍ່ໄດ້ລົດຊາດ, ບໍ່ອະນຸຍາດໃຫ້ຜູ້ກ່ຽວເຂົ້າໃນສະຖານທີ່ດັ່ງກ່າວ ແລະ ຕ້ອງແຍກອອກຈາກກຸ່ມຄົນທົ່ວໄປ ແລ້ວໃຫ້ຕິດຕໍ່ຫາໜ່ວຍງານສະເພາະກິດ ໂທຫາສາຍດ່ວນ 165/166 ຫຼື ໂທ 020 54066777. |
|   | **ການວາງແຜນ, ຄຸ້ມຄອງ ແລະ ຕິດຕາມ ການປະຕິບັດມາດຕະການ**<br>• ມີການສັບປ່ຽນພະນັກງານໃນການເຮັດວຽກ ແລະ ປະຈຳການ ເພື່ອຮັບປະກັນມາດຕະການຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ;<br>• ແຕ່ງຕັ້ງພະນັກງານຕິດຕາມໃນການຈັດຕັ້ງປະຕິບັດ ມາດຕະການ ກັນ ແລະ ຄວບຄຸມການຕິດເຊື້ອພະຍາດໂຄວິດ-19;<br>• ຕ້ອງມີການໃຫ້ຂໍ້ມູນຂ່າວສານປະຈຳວັນ ແລະ ໃຫ້ຄວາມຮູ້ແກ່ຜູ້ມາອອກກຳລັງກາຍ ເຊັ່ນ: ຕິດຕັ້ງເຄື່ອງກະຈາຍສຽງ, ຈໍໂທລະພາບ, ໂປສເຕີຕ່າງໆ ຫຼື ພະນັກງານຜູ້ຮັບຜິດຊອບຕ້ອງໂຄສະນາ - ສຸຂະສຶກສາກັບທີ່ ກ່ຽວກັບມາດຕະການປ້ອງກັນຕົນເອງຈາກການລະບາດພະຍາດ COVID-19; |

| | |
|---|---|
| | • ມີການປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການນຳສົ່ງ ກໍລະນີສົງໃສ ໄປສະຖານທີ່ແຍກປ່ຽວ ຫຼື ປິ່ນປົວ;<br>• ການສຳລະເງິນ ແມ່ນຫຼຸດຜ່ອນ ຫຼື ຫຼີກລ່ຽງການນຳໃຊ້ເງິນສົດ ໂດຍໃຊ້ວິທີການໂອນເງິນຜ່ານບັນຊີ ຫຼື ຈ່າຍດ້ວຍບັດ ເພື່ອຫຼຸດຜ່ອນການສຳຜັດໂດຍກົງ. |
|  | **ການອະນາໄມຂ້າເຊື້ອຫຼັງຈາກກັບຮອດເຮືອນ**<br><br>• ເມື່ອທຸກຄົນກັບຮອດເຮືອນ ຕ້ອງລ້າງມືໃຫ້ສະອາດ, ປ່ຽນເຄື່ອງນຸ່ງ ແລະ ນຳໄປແຊ່ດ້ວຍນ້ຳແຟັບ ຫຼື ນ້ຳຢາຊັກຜ້າຂາວ (ໄຮເຕີ) ຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ ຫຼື ຕົ້ມດ້ວຍນ້ຳຮ້ອນໃຫ້ຟົດ ເວລາ 20 - 30 ນາທີ<br>• ຂ້າເຊື້ອ ເຄື່ອງໃຊ້ສ່ວນຕົວຂອງທ່ານທຸກຄັ້ງທີ່ກັບຮອດເຮືອນເຊັ່ນ: ໂທລະສັບມືຖື, ກະແຈລົດ, ແວ່ນຕາ, ໂມງ, ແຫວນ ແລະ ອື່ນໆ ດ້ວຍເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ. |

## 15. ການອະນາໄມ ແລະ ຂ້າເຊື້ອ ໃນໂຮງງານ

| | |
|---|---|
|   | **ການອະນາໄມມື**<br>• ຕ້ອງຈັດໃຫ້ມີຈຸດລ້າງມື ແລະ ສະໜອງສິ່ງອຳນວຍຄວາມສະດວກເຊັ່ນ: ນ້ຳສະອາດ, ສະບູ, ເຈ້ຍເຊັດມື ແລະ ເຈວລ້າງມື ຫຼື ເຫຼົ້າ 70% ເພື່ອລ້າງມືຢູ່ບໍລິເວນ ໜ້າທາງເຂົ້າ-ອອກ, ບ່ອນຮັບຕ້ອນແຂກ, ບໍລິເວນລໍຖ້າ, ບໍລິເວນໃກ້ລິບ, ສະຖານທີ່ເຮັດວຽກ, ຮ້ານອາຫານ ແລະ ຫ້ອງນ້ຳ.<br>• ທຸກຄົນທີ່ເຂົ້າມາໃນໂຮງງານ ຕ້ອງລ້າງມືໃສ່ສະບູ ຫຼື ເຈວຂ້າເຊື້ອ ກ່ອນ ເຂົ້າ - ອອກບ່ອນເຮັດວຽກ, ກ່ອນ - ຫຼັງ ກິນອາຫານ, ຫຼັງຈາກໃຊ້ຫ້ອງນ້ຳ ແລະ ຫຼັງຈາກສຳຜັດ ຈັບບາຍວັດຖຸສິ່ງຂອງອື່ນໆ. |
|   | **ການໃສ່ຜ້າອັດປາກ-ດັງ ແລະ ການປະຕິບັດຕົນໃນເວລາ ໄອ - ຈາມ**<br>• ທຸກຄົນທີ່ເຂົ້າມາໃນໂຮງງານຕ້ອງໃສ່ຜ້າອັດປາກ-ດັງ ຕະຫຼອດເວລາ;<br>• ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ແຂນສອກ, ຫຼັງຈາກນັ້ນໃຫ້ລ້າງມືດ້ວຍນ້ຳສະອາດໃສ່ສະບູ, ເຈວລ້າງມື ຫຼື ເຫຼົ້າ 70% ຂຶ້ນໄປ;<br>• ຖ້ານຳໃຊ້ຜ້າອັດປາກ-ດັງ ທີ່ໃຊ້ຄັ້ງດຽວ ແມ່ນໃຫ້ປ່ຽນໃໝ່ທຸກໆຄັ້ງ ເມື່ອເຫັນວ່າມີຄວາມປຽກຊຸ່ມ ແລະ ເປິເປື້ອນ;<br>• ກໍລະນີນຳໃຊ້ຜ້າອັດປາກ-ດັງ ຊະນິດ ຜ້າແພ ຖ້ານຳມາໃຊ້ຄືນ ຕ້ອງຊັກດ້ວຍແຟັບ, ລ້າງດ້ວຍນ້ຳສະອາດແລ້ວຕາກແດດໃຫ້ແຫ້ງ, ລີດດ້ວຍຄວາມຮ້ອນ ຫຼື ຕົ້ມໃຫ້ຟົດໃຊ້ເວລາ 20 - 30 ນາທີທຸກຄັ້ງ;<br>• ຕ້ອງຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ໃນຖົງຢາງມັດປາກຖົງໃຫ້ແໜ້ນແລ້ວຖິ້ມໃສ່ຖັງຂີ້ເຫຍື້ອທີ່ມີຝາປິດ. |
| | **ການຮັກສາໄລຍະຫ່າງ 1ແມັດ**<br>• ທຸກສະຖານທີ່ ຕ້ອງມີການກຳນົດການຮັກສາໄລຍະຫ່າງ;<br>• ໝາຍສັນຍາລັກໃສ່ພື້ນທີ່ພາຍໃນ ແລະ ພາຍນອກ ໃຫ້ຊັດເຈນ, ໃຫ້ທຸກຄົນເຫັນວ່າເຂົາເຈົ້າຄວນຢືນ ຫຼື ນັ່ງຢູ່ ຈຸດໃດ;<br>• ມີການສັບປ່ຽນຊົ່ວໂມງການເຮັດວຽກຂອງພະນັກງານ ໄລຍະເວລາກິນເຂົ້າສວາຍ, ໄລຍະເວລາພັກຜ່ອນ ເພື່ອຫຼຸດຜ່ອນຄວາມແອອັດ;<br>• ຖ້າບໍ່ສາມາດປະຕິບັດການຮັກສາໄລຍະຫ່າງໄດ້ ຕ້ອງໃຫ້ມີແນວຂັ້ນລະຫວ່າງບຸກຄົນຕໍ່ບຸກຄົນ. |
|   | **ການອະນາໄມ ແລະ ຂ້າເຊື້ອ**<br>• ຕ້ອງອະນາໄມທຸກພື້ນທີ່ ທຸກຈຸດ ຂອງໂຮງງານເປັນປະຈຳ:<br>- ອະນາໄມດ້ວຍນ້ຳແຟັບ ແລະ ຂ້າເຊື້ອດ້ວຍນ້ຳຢາຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນ 0,1% ຫຼື ນ້ຳຢາຊັກຜ້າຂາວຕາມອັດຕາສ່ວນທີ່ກຳນົດໄວ້ໃນຜະລິດຕະພັນ;<br>- ສຳລັບພື້ນທີ່ຄັບແຄບ ຫຼື ມູມຫ້ອງ ໃຫ້ໃຊ້ເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ ເຊັດຖູ;<br>- ບໍ່ຄວນນຳໃຊ້ບັ້ງສີດ ທີ່ມີຄວາມດັນສູງ ສີດໃສ່ພື້ນໂດຍກົງເພື່ອຫຼີກລ່ຽງການກະຈາຍຂອງເຊື້ອພະຍາດ ແຕ່ລຸ່ມຂຶ້ນເທິງ<br>• ອະນາໄມ ແລະ ຂ້າເຊື້ອ ວັດຖຸ ອຸປະກອນ ແລະ ສິ່ງຂອງ ຫຼື ບ່ອນທີ່ມີການສຳຜັດເລື້ອຍໆ ເຊັ່ນ: ອຸປະກອນ, ເຄື່ອງມື, ແນວຂັ້ນ, ໂຕະ, ຕັ່ງ, ປຸ່ມກົດຕ່າງໆ, ລູກບິດປະຕູ, ຮາວຈັບປະຕູ, ຫ້ອງນ້ຳ ແລະ ອື່ນໆ... |

| | |
|---|---|
| | • ຫຸ້ມຫໍ່ຣີໂມດທຸກປະເພດເຊັ່ນ: ຣີໂມດໂທລະພາບ, ແອ...ດ້ວຍພຣາດສະຕິກ ທີ່ງ່າຍໃນການເຊັດຂ້າເຊື້ອ;<br>• ຕ້ອງເຮັດອະນາໄມ-ຂ້າເຊື້ອ ຫຼັງຈາກມີການສັບປ່ຽນພະນັກງານ;<br>• ຜ້າຕ່າງໆ ທີ່ໃຊ້ໃນບ່ອນເຮັດວຽກ ຕ້ອງຊັກດ້ວຍແຟັບ ແລະ ນ້ຳຮ້ອນ 100 ອົງສາ ຂຶ້ນໄປ, ເມື່ອໃຊ້ນ້ຳເຢັນຊັກ ຕ້ອງໃຊ້ນ້ຳຢາຊັກຜ້າຂາວ ທີ່ໄດ້ເຈືອຈາງກັບນ້ຳສະອາດ(ກໍລະນີອະນາໄມຂ້າເຊື້ອທົ່ວໄປ ໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,05%, ກໍລະນີທີ່ສົງໃສວ່າຕິດເຊື້ອໂຄວິດ-19 ໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,1%,);<br>• ພະນັກງານເຮັດອະນາໄມ ແລະ ຂ້າເຊື້ອຕ້ອງໄດ້ຜ່ານການຝຶກອົບຮົມ ຫຼັກການອະນາໄມ ແລະ ຂ້າເຊື້ອ ພ້ອມທັງມາດຕະການປ້ອງກັນຕົນເອງ;<br>• ພະນັກງານອະນາໄມ ຕ້ອງໃສ່ຜ້າອັດປາກ-ດັງ, ແວ່ນປ້ອງກັນຕາ, ຖົງມື, ຜ້າກັນເປື້ອນ, ໝວກ, ເກີບໂບກ ໃນເວລາເຮັດອະນາໄມທຸກຄັ້ງ;<br>• ຖ້າກໍລະນີສົງໃສວ່າມີການຕິດເຊື້ອພະຍາດ ໂຄວິດ-19 ຢູ່ສະຖານທີ່ໃດນຶ່ງແມ່ນໃຫ້ປະຕິບັດຕາມຫຼັກການອະນາໄມ ແລະ ຂ້າເຊື້ອ ໃນພາກທີ 3 ຂອງປຶ້ມຄູ່ມືສະບັບນີ້. |
|   | **ການລະບາຍອາກາດ**<br>• ເປີດປະຕູ ແລະ ປ່ອງຢ້ຽມ ເພື່ອໃຫ້ອາກາດໃນຫ້ອງ ແລະ ອາຄານ ຖ່າຍເທໄດ້ດີ;<br>• ໃຊ້ເຄື່ອງປັບອາກາດ (ແອ),ພັດລົມ ແລະ ເຄື່ອງດູດອາກາດ ເພື່ອໃຫ້ອາກາດ ພາຍໃນຖ່າຍເທ. |
|  | **ການກັ່ນກອງດ້ວຍການວັດແທກອຸນຫະພູມ**<br>• ຕ້ອງວັດແທກອຸນຫະພູມຮ່າງກາຍຂອງທຸກຄົນທີ່ເຂົ້າມາໃນໂຮງງານ ໂດຍນຳໃຊ້ເຄື່ອງວັດແທກອຸນຫະພູມແບບອິນຟາເຣດ (infrared thermometer);<br>• ໃຫ້ມີຈຸດກັ່ນກອງ, ມີພະນັກງານຮັບຜິດຊອບ, ມີຫ້ອງແຍກປ່ຽວຊົ່ວຄາວ;<br>• ກໍລະນີພົບບຸກຄົນໃດທີ່ມີອຸນຫະພູມຮ່າງກາຍເກີນ 37.5 ອົງສາເຊ ແລະ ມີອາການ: ໄຂ້, ນ້ຳມູກຍ້ອຍ, ເຈັບຄໍ, ໄອ, ຈາມ, ດັງບໍ່ໄດ້ກິ່ນ, ລີ້ນບໍ່ໄດ້ລົດຊາດ, ບໍ່ອະນຸຍາດໃຫ້ຜູ້ກ່ຽວເຂົ້າໃນສະຖານທີ່ດັ່ງກ່າວ ແລະ ຕ້ອງແຍກອອກຈາກກຸ່ມຄົນທົ່ວໄປ ແລ້ວໃຫ້ຕິດຕໍ່ຫາໜ່ວຍງານສະເພາະກິດ ໂທຫາສາຍດ່ວນ 165/166 ຫຼື ໂທ 020 54066777. |
|    | **ການວາງແຜນ, ຄຸ້ມຄອງ ແລະ ຕິດຕາມ ການປະຕິບັດມາດຕະການ**<br>• ມີການສັບປ່ຽນພະນັກງານໃນການເຮັດວຽກ ແລະ ປະຈຳການ ເພື່ອຮັບປະກັນມາດຕະການຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ;<br>• ແຕ່ງຕັ້ງພະນັກງານຕິດຕາມໃນການຈັດຕັ້ງປະຕິບັດ ມາດຕະການ ກັນ ແລະ ຄວບຄຸມການຕິດເຊື້ອພະຍາດໂຄວິດ-19;<br>• ໜ່ວຍງານທີ່ຮັບຜິດຊອບພະນັກງານຕ້ອງຊອກຮູ້ ຂໍ້ມູນຂ່າວສານ ແລະ ມີຂໍ້ມູນຂ່າວສານ ລ່າສຸດ ເພື່ອໃຫ້ຄວາມຮູ້ແກ່ພະນັກງານກ່ຽວກັບມາດຕະການປ້ອງກັນຕົນເອງຈາກການລະບາດພະຍາດ COVID-19;<br>• ມີການປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການນຳສົ່ງ ກໍລະນີສົງໃສ ໄປສະຖານທີ່ແຍກປ່ຽວ ຫຼື ປິ່ນປົວ; |

| | |
|---|---|
| | • ການສຳລະເງິນ ແມ່ນຫຼຸດຜ່ອນ ຫຼື ຫຼີກລ່ຽງການນຳໃຊ້ເງິນສົດ ໂດຍໃຊ້ວິທີການໂອນເງິນຜ່ານບັນຊີ ຫຼື ຈ່າຍດ້ວຍບັດ ເພື່ອຫຼຸດຜ່ອນການສຳຜັດໂດຍກົງ. |
| | **ການອະນາໄມຂ້າເຊື້ອຫຼັງຈາກກັບຮອດເຮືອນ**<br><br>• ເມື່ອທຸກຄົນກັບຮອດເຮືອນ ຕ້ອງລ້າງມືໃຫ້ສະອາດ, ປ່ຽນເຄື່ອງນຸ່ງ ແລະ ນຳໄປແຊ່ດ້ວຍນ້ຳແຟັບ ຫຼື ນ້ຳຢາຊັກຜ້າຂາວ (ໄຮເຕີ) ຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ ຫຼື ຕົ້ມດ້ວຍນ້ຳຮ້ອນໃຫ້ຟົດ ເວລາ 20 - 30 ນາທີ<br>• ຂ້າເຊື້ອ ເຄື່ອງໃຊ້ສ່ວນຕົວຂອງທ່ານທຸກຄັ້ງທີ່ກັບຮອດເຮືອນເຊັ່ນ: ໂທລະສັບມືຖື, ກະແຈລົດ, ແວ່ນຕາ, ໂມງ, ແຫວນ ແລະ ອື່ນໆ ດ້ວຍເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ. |

## 16. ການອະນາໄມ ແລະ ຂ້າເຊື້ອ ຢູ່ໂຮງຂ້າສັດ

| | |
|---|---|
|   | **ການອະນາໄມມື**<br>• ຕ້ອງຈັດໃຫ້ມີຈຸດລ້າງມື ແລະ ສະໜອງສິ່ງອຳນວຍຄວາມສະດວກເຊັ່ນ: ນ້ຳສະອາດ, ສະບູ, ເຈ້ຍເຊັດມື ແລະ ເຈວຂ້າເຊື້ອມື ຫຼື ເຫຼົ້າ 70% ຢູ່ບໍລິເວນ ໜ້າທາງເຂົ້າ-ອອກ.<br>• ທຸກຄົນທີ່ເຂົ້າມາໃນໂຮງຂ້າສັດ ຕ້ອງລ້າງມືໃສ່ສະບູ ຫຼື ເຈວຂ້າເຊື້ອມື ກ່ອນ ເຂົ້າ - ອອກ, ກ່ອນ - ຫຼັງກິນອາຫານ, ຫຼັງຈາກໃຊ້ຫ້ອງນ້ຳ ແລະ ຫຼັງຈາກສຳຜັດ ຈັບບາຍວັດຖຸສິ່ງຂອງອື່ນໆ. |
|   | **ການໃສ່ຜ້າອັດປາກ-ດັງ ແລະ ການປະຕິບັດຕົນໃນເວລາ ໄອ - ຈາມ**<br>• ທຸກຄົນທີ່ເຂົ້າມາໃນໂຮງຂ້າສັດ ຕ້ອງໃສ່ຜ້າອັດປາກ-ດັງ ຕະຫຼອດເວລາ ແລະ ໃສ່ໜ້າກາກໃສ ເວລາປະຕິບັດໜ້າທີ່;<br>• ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ແຂນສອກ, ຫຼັງຈາກນັ້ນໃຫ້ລ້າງມືດ້ວຍນ້ຳສະອາດໃສ່ສະບູ, ເຈວຂ້າເຊື້ອມື ຫຼື ເຫຼົ້າ 70%;<br>• ຖ້ານຳໃຊ້ຜ້າອັດປາກ-ດັງ ທີ່ໃຊ້ຄັ້ງດຽວ ແມ່ນໃຫ້ປ່ຽນໃໝ່ທຸກໆຄັ້ງ ເມື່ອເຫັນວ່າມີຄວາມປຽກຊຸ່ມ ແລະ ເປິເປື້ອນ;<br>• ກໍລະນີນຳໃຊ້ຜ້າອັດປາກ-ດັງ ຊະນິດ ຜ້າແພ ຖ້ານຳມາໃຊ້ຄືນ ຕ້ອງຊັກດ້ວຍແຟັບ, ລ້າງດ້ວຍນ້ຳສະອາດແລ້ວຕາກແດດໃຫ້ແຫ້ງ, ລີດດ້ວຍຄວາມຮ້ອນ ຫຼື ຕົ້ມໃຫ້ຟົດໃຊ້ເວລາ 20 - 30 ນາທີ ທຸກຄັ້ງ;<br>• ຕ້ອງຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ໃນຖົງຢາງ ມັດປາກຖົງໃຫ້ແໜ້ນ ແລ້ວຖິ້ມໃສ່ຖັງຂີ້ເຫຍື້ອທີ່ມີຝາປິດ. |
| | **ການຮັກສາໄລຍະຫ່າງ 1 ແມັດ**<br>• ທຸກສະຖານທີ່ພາຍໃນ ແລະ ພາຍນອກ ໂຮງຂ້າສັດ ຕ້ອງມີການກຳນົດ ການຮັກສາໄລຍະຫ່າງ;<br>• ໝາຍສັນຍາລັກ ໃສ່ແຕ່ລະພື້ນທີ່ໃຫ້ຊັດເຈນ ເພື່ອໃຫ້ເຫັນວ່າຄວນນັ່ງ ຫຼື ຢືນຢູ່ຈຸດໃດ;<br>• ໃຫ້ມີການຈຳກັດຈຳນວນຄົນເຂົ້າ-ອອກ ໃຫ້ເໝາະສົມ ເພື່ອຮັກສາໄດ້ໄລຍະຫ່າງຕາມມາດຕະຖານຢ່າງໜ້ອຍ 1 ແມັດ;<br>• ຖ້າບໍ່ສາມາດປະຕິບັດການຮັກສາໄລຍະຫ່າງ:<br>- ຕ້ອງໃຊ້ແນວຂັ້ນລະຫວ່າງບຸກຄົນ ຕໍ່ບຸກຄົນ<br>- ຈັດສັນເວລາ ແລະ ລຳດັບ ຂອງການດຳເນີນແຕ່ລະກິດຈະກຳ<br>- ຖ້າເຂດພື້ນທີ່ດັ່ງກ່າວມີການຕິດເຊື້ອແມ່ນຕ້ອງໄດ້ປິດຊົ່ວຄາວ. |
|   | **ການອະນາໄມ ແລະ ຂ້າເຊື້ອ**<br>• ຕ້ອງອະນາໄມ ແລະ ຂ້າເຊື້ອ ທຸກພື້ນທີ່ຂອງໂຮງຂ້າສັດ ຫຼັງຈາກປິດບໍລິການປະຈຳວັນ:<br>- ອະນາໄມດ້ວຍນ້ຳແຟັບ ແລະ ຂ້າເຊື້ອ ດ້ວຍນ້ຳຢາຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນ 0,1% ຫຼື ນ້ຳຢາຊັກຜ້າຂາວຕາມອັດຕາສ່ວນທີ່ກຳນົດໄວ້ໃນຜະລິດຕະພັນ;<br>- ສຳລັບພື້ນທີ່ຄັບແຄບ ຫຼື ມູມຫ້ອງໃຫ້ໃຊ້ເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອເຊັດເພື່ອອະນາໄມ ແລະ ຂ້າເຊື້ອ; |

| | |
|---|---|
| | • ອະນາໄມ ແລະ ຂ້າເຊື້ອ ວັດຖຸ ສິ່ງຂອງ ຫຼື ບ່ອນທີ່ມີການສໍາຜັດເລື້ອຍໆ ເຊັ່ນ: ອຸປະກອນຂ້າສັດ , ອຸປະກອນຄົວຊີ້ນ, ໂຕະ, ຕັ່ງ, ບ່ອນວາງຊີ້ນ, ລໍ້ຍູ້, ບໍລິເວນຫ້ອງນ້ຳ, ບ່ອນທ້ອນໂຮມຂີ້ເຫຍື້ອ, ຮ່ອງລະບາຍນ້ຳເປື້ອນ ແລະ ອື່ນໆ.<br>• ສໍາລັບຂີ້ເຫຍື້ອ ຫຼື ສິ່ງເສດເຫຼືອຕ່າງໆ ຕ້ອງໃສ່ຖົງຢາງມັດປາກຖົງໃຫ້ແໜ້ນ ແລ້ວນໍາໄປມ້ຽນຢູ່ບ່ອນທ້ອນໂຮມຂີ້ເຫຍື້ອທີ່ໄດ້ກໍານົດໄວ້ ພ້ອມທັງພົ່ນຂ້າເຊື້ອດ້ວຍນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0.1%<br>• ປະເພດຜ້າແພຕ່າງໆລວມທັງເຄື່ອງນຸ່ງຫົ່ມຂອງຜູ້ຂ້າ ແລະ ຜູ້ຄົວສັດ ຕ້ອງຊັກດ້ວຍແຟັບ ແລະ ນ້ຳຮ້ອນ 100 ອົງສາ ຂຶ້ນໄປ, ເມື່ອໃຊ້ນ້ຳເຢັນຊັກ ຕ້ອງໃຊ້ນ້ຳຢາຊັກຜ້າຂາວ ທີ່ໄດ້ເຈືອຈາງກັບນ້ຳສະອາດ(ກໍລະນີອະນາໄມຂ້າເຊື້ອທົ່ວໄປ ໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,05%, ກໍລະນີທີ່ສົງໃສວ່າຕິດເຊື້ອໂຄວິດ-19 ໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,1%,);<br>• ພະນັກງານຜູ້ເຮັດອະນາໄມ ແລະ ຂ້າເຊື້ອ ປະຈໍາໂຮງຂ້າສັດ ຕ້ອງໄດ້ຮັບການຝຶກອົບຮົມຫຼັກການອະນາໄມ ແລະ ຂ້າເຊື້ອ;<br>• ພະນັກງານອະນາໄມ ແລະ ຂ້າເຊື້ອ ຕ້ອງໃສ່ຜ້າອັດປາກ-ດັງ, ແວ່ນປ້ອງກັນຕາ, ຖົງມື, ຜ້າກັນເປື້ອນ, ໝວກ, ເກີບໂບກ ໃນເວລາປະຕິບັດໜ້າທີ່;<br>• ຖ້າກໍລະນີສົງໃສວ່າມີການຕິດເຊື້ອພະຍາດ ໂຄວິດ-19 ຢູ່ສະຖານທີ່ໃດນຶ່ງແມ່ນໃຫ້ປະຕິບັດຕາມຫຼັກການອະນາໄມ ແລະ ຂ້າເຊື້ອ ໃນພາກທີ 3 ຂອງປຶ້ມຄູ່ມືສະບັບນີ້ຢ່າງເຄັ່ງຄັດ. |
|   | **ການລະບາຍອາກາດ**<br>• ຈັດສັນບ່ອນວາງຊີ້ນ ໃຫ້ມີອາກາດຖ່າຍເທໄດ້ດີ;<br>• ອະນາໄມ ແລະ ຂ້າເຊື້ອ ເຄື່ອງປັບອາກາດ (ແອ), ພັດລົມ ແລະ ເຄື່ອງດູດອາກາດ ເປັນປະຈໍາ. |
|  | **ການກັ່ນກອງດ້ວຍການວັດແທກອຸນຫະພູມ**<br>• ຕ້ອງວັດແທກອຸນຫະພູມຮ່າງກາຍຂອງທຸກຄົນທີ່ຈະເຂົ້າມາໂຮງຂ້າສັດ ໂດຍນໍາໃຊ້ເຄື່ອງກວດອຸນຫະພູມແບບອິນຟາເຣດ (infrared thermometer);<br>• ໃຫ້ມີຈຸດກັ່ນກອງ, ມີພະນັກງານຮັບຜິດຊອບ, ມີສະຖານທີ່ແຍກປ່ຽວຊົ່ວຄາວ;<br>• ກໍລະນີພົບບຸກຄົນໃດທີ່ມີອຸນຫະພູມຮ່າງກາຍເກີນ 37.5 ອົງສາເຊ ແລະ ມີອາການ: ໄຂ້, ນ້ຳມູກຍ້ອຍ, ເຈັບຄໍ, ໄອ, ຈາມ, ດັງບໍ່ໄດ້ກິ່ນ, ລີ້ນບໍ່ໄດ້ລົດຊາດ, ບໍ່ອະນຸຍາດໃຫ້ຜູ້ກ່ຽວເຂົ້າໃນສະຖານທີ່ດັ່ງກ່າວ ແລະ ຕ້ອງແຍກອອກຈາກກຸ່ມຄົນທົ່ວໄປ ແລ້ວໃຫ້ຕິດຕໍ່ຫາໜ່ວຍງານສະເພາະກິດ ໂທຫາສາຍດ່ວນ 165/166 ຫຼື ໂທ 020 54066777. |
|    | **ການວາງແຜນ, ຄຸ້ມຄອງ ແລະ ຕິດຕາມ ການປະຕິບັດມາດຕະການ**<br>• ຕ້ອງກໍານົດ ທາງເຂົ້າ - ອອກ ໂຮງຂ້າສັດ ໂດຍການໃສ່ແນວກັ້ນໃຫ້ເປັນລະບົບ<br>• ສັບປ່ຽນພະນັກງານໃນການເຮັດວຽກປະຈໍາວັນ ເພື່ອຮັບປະກັນມາດຕະການຮັກສາໄລຍະຫ່າງຢ່າງໜ້ອຍ 1 ແມັດ;<br>• ແຕ່ງຕັ້ງພະນັກງານຕິດຕາມໃນການຈັດຕັ້ງປະຕິບັດ ມາດຕະການ ກັນ ແລະ ຄວບຄຸມການຕິດເຊື້ອພະຍາດໂຄວິດ-19;<br>• ຕ້ອງມີການໃຫ້ຂໍ້ມູນຂ່າວສານປະຈໍາວັນ ແລະ ໃຫ້ຄວາມຮູ້ແກ່ ພະນັກງານ ແລະ ບຸກຄົນເຂົ້າ-ອອກ ໂຮງຂ້າສັດ ເຊັ່ນ: ຕິດຕັ້ງເຄື່ອງກະຈາຍສຽງ, ຕິດສື່ໂຄສະນາ ຕ່າງໆ ໄວ້ບ່ອນທີ່ເຫັນໄດ້ |

| | |
|---|---|
| | ງ່າຍ ຫຼື ພະນັກງານຜູ້ຮັບຜິດຊອບຕ້ອງໂຄສະນາ - ສຸຂະສຶກສາກັບທີ່ ກ່ຽວກັບມາດຕະການປ້ອງກັນຕົນເອງຈາກການລະບາດພະຍາດ COVID-19;<br>• ພະນັກງານ ຂ້າສັດ ຕ້ອງໃສ່ຊຸດປ້ອງກັນເອງໃນເວລາປະຕິບັດໜ້າທີ່ເຊັ່ນ: ເສື້ອຄຸມ, ໝວກ, ຖົງມື, ຜ້າອັດປາກ-ດັງ, ແຜ່ນຢາງໃສບັງໜ້າ, ເກີບໂບກ ( ຖ້າຖົງມືມີການຈີກຂາດ ແລະ ໃຊ້ງານດົນ ໃຫ້ປ່ຽນໃໝ່ທັນທີ )<br>• ການສຳລະເງິນ ແມ່ນໃຫ້ໃຊ້ວິທີການໂອນເງິນຜ່ານບັນຊີ ເພື່ອຫຼຸດຜ່ອນການສຳຜັດໂດຍກົງ.<br>• ມີການປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການນຳສົ່ງ ກໍລະນີສົງໃສ ໄປສະຖານທີ່ແຍກປ່ຽວ ຫຼື ປິ່ນປົວ; |
| | **ການອະນາໄມຂ້າເຊື້ອຫຼັງຈາກກັບຮອດເຮືອນ**<br><br>• ເມື່ອທຸກຄົນກັບຮອດເຮືອນ ຕ້ອງລ້າງມືໃຫ້ສະອາດ, ປ່ຽນເຄື່ອງນຸ່ງ ແລະ ນຳໄປແຊ່ດ້ວຍນ້ຳແຟັບ ຫຼື ນ້ຳຢາຊັກຜ້າຂາວ (ໄຮເຕີ) ຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ ຫຼື ຕົ້ມດ້ວຍນ້ຳຮ້ອນໃຫ້ຟົດ ເວລາ 20 - 30 ນາທີ;<br>• ຂ້າເຊື້ອ ເຄື່ອງໃຊ້ສ່ວນຕົວຂອງທ່ານທຸກຄັ້ງທີ່ກັບຮອດເຮືອນເຊັ່ນ: ໂທລະສັບມືຖື, ກະແຈລົດ, ແວ່ນຕາ, ໂມງ, ແຫວນ ແລະ ອື່ນໆ ດ້ວຍເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ. |

## 17. ການອະນາໄມ ແລະ ຂ້າເຊື້ອ ຢູ່ສະຖານທີ່ ປະຕິບັດທາງດ້ານ ສາດສະໜາ ແລະ ຮີດຄອງປະເພນີ

| | |
|---|---|
|  | **ການອະນາໄມມື**<br>• ຕ້ອງຈັດໃຫ້ມີຈຸດລ້າງມື ແລະ ສະໜອງສິ່ງອຳນວຍຄວາມສະດວກເຊັ່ນ: ນ້ຳສະອາດ, ສະບູ, ເຈ້ຍເຊັດມື ແລະ ເຈວຂ້າເຊື້ອມື ຫຼື ເຫຼົ້າ 70% ຢູ່ບໍລິເວນ ໜ້າທາງເຂົ້າ-ອອກ ວັດ, ຫໍແຈກ, ສາລາໂຮງທຳ, ສິມ, ກຸດຕິ, ໂບດ, ໂຮງອາຫານ ແລະ ຫ້ອງນ້ຳ.<br>• ທຸກຄົນທີ່ເຂົ້າມາໃນສະຖານດັ່ງກ່າວ ຕ້ອງລ້າງມືໃສ່ສະບູ ຫຼື ເຈວຂ້າເຊື້ອ ກ່ອນ ເຂົ້າ - ອອກ, ກ່ອນ - ຫຼັງກິນອາຫານ, ຫຼັງຈາກໃຊ້ຫ້ອງນ້ຳ ແລະ ຫຼັງຈາກສຳຜັດ ຈັບບາຍວັດຖຸສິ່ງຂອງອື່ນໆ. |
| <br> | **ການໃສ່ຜ້າອັດປາກ-ດັງ ແລະ ການປະຕິບັດຕົນໃນເວລາ ໄອ - ຈາມ**<br>• ທຸກຄົນທີ່ເຂົ້າມາບໍລິເວນດັ່ງກ່າວ ຕ້ອງໃສ່ຜ້າອັດປາກ-ດັງ ຕະຫຼອດເວລາ<br>• ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ຂໍ້ພັບແຂນສອກ, ຫຼັງຈາກນັ້ນໃຫ້ລ້າງມືດ້ວຍນ້ຳສະອາດໃສ່ສະບູ, ເຈວລ້າງມື ຫຼື ເຫຼົ້າ 70% ຂຶ້ນໄປ;<br>• ຖ້ານຳໃຊ້ຜ້າອັດປາກ-ດັງ ທີ່ໃຊ້ຄັ້ງດຽວ ແມ່ນໃຫ້ປ່ຽນໃໝ່ທຸກໆຄັ້ງ ເມື່ອເຫັນວ່າມີຄວາມປຽກ ຊຸ່ມ ແລະ ເປິເປື້ອນ;<br>• ກໍລະນີນຳໃຊ້ຜ້າອັດປາກ-ດັງ ຊະນິດ ຜ້າແພ ຖ້ານຳມາໃຊ້ຄືນ ຕ້ອງຊັກດ້ວຍແຟັບ, ລ້າງດ້ວຍນ້ຳ ສະອາດແລ້ວຕາກແດດໃຫ້ແຫ້ງ, ລີດດ້ວຍຄວາມຮ້ອນ ຫຼື ຕົ້ມໃຫ້ຟົດໃຊ້ເວລາ 20 - 30 ນາທີ ທຸກຄັ້ງ;<br>• ຕ້ອງຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ໃນຖົງຢາງ ແລ້ວມັດປາກຖົງໃຫ້ແໜ້ນ ແລ້ວຖິ້ມໃສ່ຖັງຂີ້ເຫຍື້ອທີ່ມີຝາປິດ. |
| | **ການຮັກສາໄລຍະຫ່າງ 1 ແມັດ**<br>• ທຸກສະຖານທີ່ ຕ້ອງມີການກຳນົດການຮັກສາໄລຍະຫ່າງ;<br>• ໝາຍສັນຍາລັກໃສ່ພື້ນທີ່ ພາຍໃນ ວັດ, ຫໍແຈກ, ສາລາໂຮງທຳ, ສິມ, ກຸດຕິ, ໂບດ, ໂຮງ ອາຫານ ໃຫ້ຊັດເຈນ, ໃຫ້ຄົນທີ່ເຂົ້າມາສະຖານທີ່ດັ່ງກ່າວເຫັນວ່າຄວນຢືນ ຫຼື ນັ່ງຢູ່ຈຸດໃດ;<br>• ໃຫ້ມີການຈຳກັດຈຳນວນຄົນເຂົ້າມາໃນສະຖານທີ່ດັ່ງກ່າວໃຫ້ເໝາະສົມ ເພື່ອຮັກສາໄດ້ໄລຍະ ຫ່າງຕາມມາດຕະຖານຢ່າງໜ້ອຍ 1 ແມັດ. |
|   | **ການອະນາໄມ ແລະ ຂ້າເຊື້ອ**<br>• ຕ້ອງອະນາໄມ ແລະ ຂ້າເຊື້ອ ທຸກພື້ນທີ່ໃນ ວັດ, ໂບດ ເປັນປະຈຳ:<br>- ອະນາໄມດ້ວຍນ້ຳແຟັບ ແລະ ຂ້າເຊື້ອ ດ້ວຍນ້ຳຢາຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນ 0,1% ຫຼື ນ້ຳຢາ ຊັກຜ້າຂາວຕາມອັດຕາສ່ວນທີ່ກຳນົດໄວ້ໃນຜະລິດຕະພັນ;<br>- ສຳລັບພື້ນທີ່ຄັບແຄບ ຫຼື ມູມຫ້ອງ ໃຫ້ໃຊ້ເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ;<br>- ສຳລັບພາຍໃນອາຄານ ບໍ່ຄວນນຳໃຊ້ບັ້ງສີດ ທີ່ມີຄວາມດັນສູງສີດໃສ່ພື້ນໂດຍກົງ ເພື່ອຫຼີກລ່ຽງ ການກະຈາຍຂອງເຊື້ອພະຍາດ ແຕ່ລຸ່ມຂຶ້ນເທິງ ແຕ່ສຳລັບເດີ່ນວັດ, ໂບດ ແມ່ນສາມາດນຳໃຊ້ ບັ້ງສີດ ເພື່ອພົ່ນຢາຂ້າເຊື້ອຕາມຫຼັກການ;<br>• ອະນາໄມ ແລະ ຂ້າເຊື້ອ ວັດຖຸ ສິ່ງຂອງ ຫຼື ບ່ອນທີ່ມີການສຳຜັດເລື້ອຍໆ ເຊັ່ນ: ອຸປະກອນທີ່ໃຊ້ ໃນການບູຊາ ຫຼື ທຳພິທີທາງສາສະໜາ, ຄ້ອນຕີຄ້ອງ, ບັ້ງສຽງຊີ, ຕູ້ບໍລິຈາກ, ໂຕະ, ຕັ່ງ, ປຸ່ມກົດ ບ່ອນປິດ-ເປີດໄຟ, ໂທລະສັບ, ຮາວຂັ້ນໄດ, ລູກບິດປະຕູ, ມືຈັບປະຕູ, ໄລກອນ, ກະແຈ ແລະ ລູກກະແຈ, ຫ້ອງນ້ຳ ແລະ ອື່ນໆ... |

| | |
|---|---|
| | • ຫຸ້ມຫໍ່ ຣີໂມດທຸກປະເພດເຊັ່ນ: ຣີໂມດໂທລະພາບ, ແອ...ດ້ວຍພຣາດສະຕິກ ທີ່ງ່າຍໃນການເຊັດຂ້າເຊື້ອ;<br>• ຜ້າແພຕ່າງໆ ທີ່ໃຊ້ໃນວັດ, ໂບດ ຕ້ອງຊັກດ້ວຍແຟັບ ແລະ ນໍ້າຮ້ອນ 100 ອົງສາ ຂຶ້ນໄປ, ເມື່ອໃຊ້ນໍ້າເຢັນຊັກ ຕ້ອງໃຊ້ນໍ້າຢາຊັກຜ້າຂາວ ທີ່ໄດ້ເຈືອຈາງກັບນໍ້າສະອາດ ( ກໍລະນີອະນາໄມຂ້າເຊື້ອທົ່ວໄປ ໃຫ້ໃຊ້ນໍ້າຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,05%, ກໍລະນີທີ່ສົງໃສວ່າຕິດເຊື້ອໂຄວິດ-19 ໃຫ້ໃຊ້ນໍ້າຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,1%,);<br>• ຜູ້ເຮັດອະນາໄມ - ຂ້າເຊື້ອ ຕ້ອງໄດ້ຮັບການຝຶກອົບຮົມຄວາມຮູ້ພື້ນຖານ ກ່ຽວກັບຫຼັກການອະນາໄມ, ຂ້າເຊື້ອ ແລະ ການປ້ອງກັນຕົນເອງ;<br>• ຜູ້ເຮັດອະນາໄມ - ຂ້າເຊື້ອ ຕ້ອງໄດ້ໃສ່ຜ້າອັດປາກ-ດັງ, ແວ່ນປ້ອງກັນຕາ, ຖົງມື, ຜ້າກັນເປື້ອນ, ໝວກ, ເກີບໂບກ ໃນເວລາປະຕິບັດໜ້າທີ່;<br>• ຖ້າກໍລະນີສົງໃສວ່າມີການຕິດເຊື້ອພະຍາດ ໂຄວິດ-19 ຢູ່ສະຖານທີ່ໃດນຶ່ງແມ່ນໃຫ້ປະຕິບັດຕາມຫຼັກການອະນາໄມ ແລະ ຂ້າເຊື້ອ ໃນພາກທີ 3 ຂອງປຶ້ມຄູ່ມືສະບັບນີ້ຢ່າງເຄັ່ງຄັດ. |
|   | **ການລະບາຍອາກາດ**<br>• ເປີດປະຕູ ແລະ ປ່ອງຢ້ຽມ ເພື່ອໃຫ້ອາກາດໃນຫ້ອງ ແລະ ອາຄານ ຖ່າຍເທໄດ້ດີ;<br>• ອະນາໄມ ແລະ ຂ້າເຊື້ອ ເຄື່ອງປັບອາກາດ (ແອ), ພັດລົມ ແລະ ເຄື່ອງດູດອາກາດ ເປັນປະຈໍາ. |
|  | **ການກັ່ນກອງດ້ວຍການແທກອຸນຫະພູມ**<br>• ຕ້ອງແທກອຸນຫະພູມຮ່າງກາຍທຸກຄົນທີ່ເຂົ້າມາໃນສະຖານທີ່ດັ່ງກ່າວ, ພ້ອມດ້ວຍ ນັກບວດຢູ່ໃນວັດ, ໂບດ ໂດຍນໍາໃຊ້ເຄື່ອງກວດອຸນຫະພູມແບບອິນຟາເຣດ (infrared thermometer);<br>• ໃຫ້ມີຈຸດກັ່ນກອງ, ມີຜູ້ຮັບຜິດຊອບ, ມີສະຖານທີ່ແຍກປ່ຽວຊົ່ວຄາວ;<br>• ກໍລະນີພົບບຸກຄົນໃດ ຫຼື ນັກບວດ ທີ່ມີອຸນຫະພູມຮ່າງກາຍເກີນ 37.5 ອົງສາເຊ ແລະ ມີອາການ: ໄຂ້, ນໍ້າມູກຍ້ອຍ, ເຈັບຄໍ, ໄອ, ຈາມ, ດັງບໍ່ໄດ້ກິ່ນ, ລີ້ນບໍ່ໄດ້ລົດຊາດ, ບໍ່ອະນຸຍາດໃຫ້ຜູ້ກ່ຽວເຂົ້າໃນສະຖານທີ່ດັ່ງກ່າວ ແລະ ຕ້ອງແຍກອອກຈາກກຸ່ມຄົນທົ່ວໄປ ແລ້ວໃຫ້ຕິດຕໍ່ຫາໜ່ວຍງານສະເພາະກິດ ໂທຫາສາຍດ່ວນ 165/166 ຫຼື ໂທ 020 54066777. |
|    | **ການວາງແຜນ, ຄຸ້ມຄອງ ແລະ ຕິດຕາມ ການປະຕິບັດມາດຕະການ**<br>• ແຕ່ງຕັ້ງຜູ້ຮັບຜິດຊອບ ໃນການຈັດຕັ້ງປະຕິບັດ ມາດຕະການ ກັນ ແລະ ຄວບຄຸມການຕິດເຊື້ອພະຍາດໂຄວິດ-19;<br>• ຕ້ອງໃຫ້ຂໍ້ມູນຂ່າວສານ ເຊັ່ນ: ຕິດຕັ້ງເຄື່ອງກະຈາຍສຽງ, ຕິດສື່ໂຄສະນາ ຕ່າງໆໃສ່ບ່ອນທີ່ເຫັນໄດ້ງ່າຍ ຫຼື ຜູ້ຮັບຜິດຊອບຕ້ອງໂຄສະນາ - ສຸຂະສຶກສາກັບທີ່ ກ່ຽວກັບມາດຕະການປ້ອງກັນຕົນເອງຈາກການລະບາດພະຍາດ COVID-19;<br>• ຈັດສັນເວລາ ແລະ ຈໍາກັດຈໍານວນຄົນ ໃນການເຮັດພິທີທາງສາສະໜາເຊັ່ນ: ສູດຮົດນໍ້າ, ສວດມົນ ແລະ ອື່ນໆ.....<br>• ຖ້າມີການລະບາດຢູ່ໃນພື້ນທີ່ດັ່ງກ່າວ ແມ່ນໃຫ້ປະຕິບັດຕາມຄໍາສັ່ງ, ແຈ້ງການ ຂອງຄະນະສະເພາະກິດແຕ່ລະໄລຍະ; |

| | |
|---|---|
| | • ມີການປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການນໍາສິ່ງ ກໍລະນີສົງໃສ ໄປສະຖານທີ່ແຍກປ່ຽວ ຫຼື ປິ່ນປົວ. |
|  | **ການອະນາໄມຂ້າເຊື້ອຫຼັງຈາກກັບຮອດເຮືອນ**<br><br>• ເມື່ອທຸກຄົນກັບຮອດເຮືອນ ຕ້ອງລ້າງມືໃຫ້ສະອາດ, ປ່ຽນເຄື່ອງນຸ່ງ ແລະ ນໍາໄປແຊ່ດ້ວຍນໍ້າແຟັບ ຫຼື ນໍ້າຢາຊັກຜ້າຂາວ (ໄຮເຕີ) ຕາມອັດຕາສ່ວນທີ່ໄດ້ກໍານົດໄວ້ ຫຼື ຕົ້ມດ້ວຍນໍ້າຮ້ອນໃຫ້ຟົດ ເວລາ 20 - 30 ນາທີ;<br>• ຂ້າເຊື້ອ ເຄື່ອງໃຊ້ສ່ວນຕົວຂອງທ່ານທຸກຄັ້ງທີ່ກັບຮອດເຮືອນເຊັ່ນ: ຂັນໃສ່ບາດ, ກ່ອງຢາດນໍ້າ, ໂທລະສັບມືຖື, ກະແຈລົດ, ແວ່ນຕາ, ໂມງ, ແຫວນ ແລະ ອື່ນໆ ດ້ວຍເຫຼົ້າ 70% ຫຼື ນໍ້າຢາຂ້າເຊື້ອ. |

## 18. ການອະນາໄມ ແລະ ຂ້າເຊື້ອ ຢູ່ ຄ້າຍຄຸມຂັງ - ດັດສ້າງ



**ການອະນາໄມມື**

- ຕ້ອງຈັດໃຫ້ມີຈຸດລ້າງມື ແລະ ສະໜອງສິ່ງອໍານວຍຄວາມສະດວກເຊັ່ນ: ນໍ້າສະອາດ, ສະບູ, ເຈ້ຍເຊັດມື ແລະ ເຈວຂ້າເຊື້ອມື ຫຼື ເຫຼົ້າ 70% ເພື່ອລ້າງມືຢູ່ບໍລິເວນ ປະຕູທາງເຂົ້າ-ອອກ ແຕ່ລະຈຸດ ແລະ ໜ້າຫ້ອງກັກຂັງ.
- ທຸກຄົນທີ່ເຂົ້າມາພົວພັນປະສານງານໃນສະຖານທີ່ຄຸມຂັງ-ດັດສ້າງ ຕ້ອງລ້າງມືໃສ່ສະບູ ຫຼື ເຈວຂ້າເຊື້ອມື ກ່ອນ ເຂົ້າ - ອອກ, ກ່ອນ - ຫຼັງກິນອາຫານ, ຫຼັງຈາກໃຊ້ຫ້ອງນໍ້າ ແລະ ຫຼັງຈາກສໍາຜັດຈັບບາຍວັດຖຸສິ່ງຂອງອື່ນໆ.





**ການໃສ່ຜ້າອັດປາກ-ດັງ ແລະ ການປະຕິບັດຕົນໃນເວລາ ໄອ - ຈາມ**

- ທຸກຄົນທີ່ເຂົ້າມາໃນຄ້າຍຄຸມຂັງ - ດັດສ້າງ ຕ້ອງໃສ່ຜ້າອັດປາກ-ດັງ ຕະຫຼອດເວລາ
- ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ແຂນສອກ, ຫຼັງຈາກນັ້ນໃຫ້ລ້າງມືດ້ວຍນໍ້າສະອາດໃສ່ສະບູ, ເຈວຂ້າເຊື້ອມື ຫຼື ເຫຼົ້າ 70% ຂຶ້ນໄປ;
- ຖ້ານໍາໃຊ້ຜ້າອັດປາກ-ດັງ ທີ່ໃຊ້ຄັ້ງດຽວ ແມ່ນໃຫ້ປ່ຽນໃໝ່ທຸກໆຄັ້ງ ເມື່ອເຫັນວ່າມີຄວາມປຽກຊຸ່ມ ແລະ ເປິເປື້ອນ;
- ກໍລະນີນໍາໃຊ້ຜ້າອັດປາກ-ດັງ ຊະນິດ ຜ້າແພ ຖ້ານໍາມາໃຊ້ຄືນ ຕ້ອງຊັກດ້ວຍແຟັບ, ລ້າງດ້ວຍນໍ້າສະອາດແລ້ວຕາກແດດໃຫ້ແຫ້ງ, ລີດດ້ວຍຄວາມຮ້ອນ ຫຼື ຕົ້ມໃຫ້ຟົດໃຊ້ເວລາ 20 - 30 ນາທີທຸກຄັ້ງ;
- ຕ້ອງຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ຖົງຢາງມັດປາກຖົງໃຫ້ແໜ້ນແລ້ວຖິ້ມໃສ່ຖັງຂີ້ເຫຍື້ອທີ່ມີຝາປິດ.

**ການຮັກສາໄລຍະຫ່າງ 1 ແມັດ**

- ທຸກພື້ນທີ່ໃນຄ້າຍຄຸມຂັງ - ດັດສ້າງ ຕ້ອງມີການກໍານົດການຮັກສາໄລຍະຫ່າງ;
- ໝາຍສັນຍາລັກໃສ່ພື້ນທີ່ພາຍໃນ ແລະ ພາຍນອກ ໃຫ້ຊັດເຈນ ເພື່ອໃຫ້ເຈົ້າໜ້າທີ່, ຜູ້ທີ່ມາພົວພັນວຽກ, ຍາດພີ່ນ້ອງ ແລະ ນັກໂທດ ເຫັນວ່າຄວນຢືນ ຫຼື ນັ່ງຢູ່ຈຸດໃດ;
- ໃຫ້ມີການຈໍາກັດຈໍານວນຍາດພີ່ນ້ອງຂອງນັກໂທດທີ່ມາພົບ ເພື່ອຮັກສາໄດ້ໄລຍະຫ່າງຕາມມາດຕະຖານຢ່າງໜ້ອຍ 1 ແມັດ;
- ຖ້າບໍ່ສາມາດປະຕິບັດການຮັກສາໄລຍະຫ່າງໄດ້ ຕ້ອງໃຊ້ແນວຂັ້ນລະຫວ່າງບຸກຄົນ ຕໍ່ບຸກຄົນ;
- ຖ້າມີກໍລະນີຕິດເຊື້ອຢູ່ໃນສະຖານທີ່ດັ່ງກ່າວ ແມ່ນບໍ່ອະນຸຍາດໃຫ້ມີການພົບຍາດເດັດຂາດ.



**ການອະນາໄມ ແລະ ຂ້າເຊື້ອ**

- ຕ້ອງອະນາໄມທຸກພື້ນທີ່ຂອງຄ້າຍຄຸມຂັງ ແລະ ຫ້ອງຂັງນັກໂທດ ເປັນປະຈໍາ:
  - ອະນາໄມດ້ວຍນໍ້າແຟັບ ແລະ ຂ້າເຊື້ອດ້ວຍນໍ້າຢາຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນ 0,1% ຫຼື ນໍ້າຢາຊັກຜ້າຂາວຕາມອັດຕາສ່ວນທີ່ກໍານົດໄວ້ໃນຜະລິດຕະພັນ;
  - ສໍາລັບພື້ນທີ່ຄັບແຄບ ຫຼື ມູມຫ້ອງ ໃຫ້ໃຊ້ເຫຼົ້າ 70% ຫຼື ນໍ້າຢາຂ້າເຊື້ອ;
  - ບໍ່ຄວນນໍາໃຊ້ບັ້ງສີດ ທີ່ມີຄວາມດັນສູງສີດໃສ່ພື້ນໂດຍກົງເພື່ອຫຼີກລ່ຽງການກະຈາຍຂອງເຊື້ອພະຍາດ ແຕ່ລຸ່ມຂຶ້ນເທິງ

| | |
|---|---|
| | • ອະນາໄມ ແລະ ຂ້າເຊື້ອ ວັດຖຸ ສິ່ງຂອງ ຫຼື ບ່ອນທີ່ມີການສຳຜັດເລື້ອຍໆເຊັ່ນ: ບ່ອນຮັບຕ້ອນ, ໂຕະ, ຕັ່ງ, ໂທລະສັບ, ວິທະຍຸສື່ສານ, ເຄື່ອງກະຈາຍສຽງ, ລູກບິດປະຕູ, ຮາວຈັບປະຕູ, ຮາວຂັ້ນໄດ, ຫ້ອງນໍ້າ ແລະ ອື່ນໆ...<br>• ຫຸ້ມຫໍ່ຣີໂມດທຸກປະເພດເຊັ່ນ: ຣີໂມດໂທລະພາບ, ແອ...ດ້ວຍພຣາດສະຕິກ ທີ່ງ່າຍໃນການເຊັດຂ້າເຊື້ອ;<br>• ຜ້າແພຕ່າງໆ ຕ້ອງຊັກດ້ວຍແຟັບ ແລະ ນໍ້າຮ້ອນ 100 ອົງສາ ຂຶ້ນໄປ, ເມື່ອໃຊ້ນໍ້າເຢັນຊັກ ຕ້ອງໃຊ້ນໍ້າຢາຊັກຜ້າຂາວ ທີ່ໄດ້ເຈືອຈາງກັບນໍ້າສະອາດ(ກໍລະນີອະນາໄມຂ້າເຊື້ອທົ່ວໄປ ໃຫ້ໃຊ້ນໍ້າຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,05%, ກໍລະນີທີ່ສົງໃສວ່າຕິດເຊື້ອໂຄວິດ-19 ໃຫ້ໃຊ້ນໍ້າຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,1%,);<br>• ຜູ້ເຮັດອະນາໄມ ຕ້ອງໄດ້ຮັບການແນະນຳຫຼັກການອະນາໄມ - ຂ້າເຊື້ອ ພ້ອມທັງໃສ່ຊຸດປ່ອງກັນຕົນເອງເຊັ່ນ: ຜ້າອັດປາກ-ດັງ, ແວ່ນປ້ອງກັນຕາ, ຖົງມື, ຜ້າກັນເປື້ອນ, ໝວກ, ເກີບໂບກ ໃນເວລາເຮັດອະນາໄມ - ຂ້າເຊື້ອ;<br>• ຖ້າກໍລະນີສົງໃສວ່າມີການຕິດເຊື້ອພະຍາດ ໂຄວິດ-19 ຢູ່ສະຖານທີ່ໃດນຶ່ງແມ່ນໃຫ້ປະຕິບັດຕາມຫຼັກການອະນາໄມ ແລະ ຂ້າເຊື້ອ ໃນພາກທີ 3 ຂອງປຶ້ມຄູ່ມືສະບັບນີ້ຢ່າງເຄັ່ງຄັດ. |
|   | **ການລະບາຍອາກາດ**<br>• ເປີດປະຕູ ແລະ ປ່ອງຢ້ຽມ ເພື່ອໃຫ້ອາກາດໃນຫ້ອງ ແລະ ອາຄານ ຖ່າຍເທໄດ້ດີ;<br>• ອະນາໄມ ແລະ ຂ້າເຊື້ອເຄື່ອງປັບອາກາດ (ແອ), ພັດລົມ ແລະ ເຄື່ອງດູດອາກາດ ເພື່ອໃຫ້ອາກາດ ພາຍໃນຖ່າຍເທ. |
|  | **ການກັ່ນກອງດ້ວຍການວັດແທກອຸນຫະພູມ**<br>• ຕ້ອງວັດແທກອຸນຫະພູມຮ່າງກາຍຂອງທຸກຄົນເຂົ້າ - ອອກສະຖານທີ່ຄຸມຂັງ-ດັດສ້າງໂດຍນຳໃຊ້ເຄື່ອງກວດອຸນຫະພູມແບບອິນຟາເຣດ (infrared thermometer);<br>• ໃຫ້ມີຈຸດກັ່ນກອງ, ມີພະນັກງານຮັບຜິດຊອບ, ມີຫ້ອງແຍກປ່ຽວເພື່ອຕິດຕາມອາການກ່ອນສົ່ງຕໍ່;<br>• ກໍລະນີພົບບຸກຄົນໃດທີ່ມີອຸນຫະພູມຮ່າງກາຍເກີນ 37.5 ອົງສາເຊ ແລະ ມີອາການ: ໄຂ້, ນໍ້າມູກຍ້ອຍ, ເຈັບຄໍ, ໄອ, ຈາມ, ດັງບໍ່ໄດ້ກິ່ນ, ລີ້ນບໍ່ໄດ້ລົດຊາດ, ຕ້ອງແຍກອອກຈາກກຸ່ມຄົນທົ່ວໄປແລ້ວໃຫ້ປະສານງານຫາໜ່ວຍງານສະເພາະກິດສະກັດກັ້ນ ແລະ ຄວບຄຸມພະຍາດໂຄວິດ-19 ຂອງຄ້າຍຄຸມຂັງ. |
|    | **ການວາງແຜນ, ຄຸ້ມຄອງ ແລະ ຕິດຕາມ ການປະຕິບັດມາດຕະການ**<br>• ມີການສັບປ່ຽນເຈົ້າໜ້າທີ່ປະຈຳການ ເພື່ອຮັບປະກັນມາດຕະການຮັກສາໄລຍະຫ່າງ ຢ່າງໜ້ອຍ 1 ແມັດ;<br>• ແຕ່ງຕັ້ງພະນັກງານຕິດຕາມໃນການຈັດຕັ້ງປະຕິບັດ ມາດຕະການ ກັນ ແລະ ຄວບຄຸມການຕິດເຊື້ອພະຍາດໂຄວິດ-19;<br>• ຕ້ອງມີຂໍ້ມູນຂ່າວສານ ເພື່ອໃຫ້ຄວາມຮູ້ແກ່ເຈົ້າໜ້າທີ່, ຍາດພີ່ນ້ອງ ແລະ ຜູ້ຖືກຄຸມຂັງ ກ່ຽວກັບມາດຕະການປ້ອງກັນຕົນເອງຈາກການລະບາດພະຍາດ COVID-19;<br>• ຕ້ອງແຍກຜູ້ຖືກຄຸມຂັງທີ່ເຂົ້າມາໃໝ່ ແລະ ເກົ່າ ຢ່າງໜ້ອຍ 14 ວັນ; |

| | |
|---|---|
| | • ມີການປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການນໍາສິ່ງ ກໍລະນີສົງໃສ ໄປສະຖານທີ່ແຍກປ່ຽວ ຫຼື ປິ່ນປົວ; |
|  | **ການອະນາໄມຂ້າເຊື້ອຫຼັງຈາກກັບຮອດເຮືອນ**<br><br>• ເມື່ອທຸກຄົນກັບຮອດເຮືອນ ຕ້ອງລ້າງມືໃສ່ສະບູ ໃຫ້ສະອາດ, ປ່ຽນເຄື່ອງນຸ່ງ ແລະ ນໍາໄປແຊ່ດ້ວຍນ້ຳແຟັບ ຫຼື ນ້ຳຢາຊັກຜ້າຂາວ (ໄຮເຕີ) ຕາມອັດຕາສ່ວນທີ່ໄດ້ກໍານົດໄວ້ ຫຼື ຕົ້ມດ້ວຍນ້ຳຮ້ອນໃຫ້ຟົດ ເວລາ 20 - 30 ນາທີ<br>• ຂ້າເຊື້ອ ເຄື່ອງໃຊ້ສ່ວນຕົວຂອງທ່ານທຸກຄັ້ງທີ່ກັບຮອດເຮືອນເຊັ່ນ: ໂທລະສັບມືຖື, ກະແຈລົດ, ແວ່ນຕາ, ໂມງ, ແຫວນ ແລະ ອື່ນໆ ດ້ວຍເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ. |

## 19. ການອະນາໄມ ແລະ ຂ້າເຊື້ອ ຢູ່ຮ້ານເສີມຄວາມງາມ, ຮ້ານຕັດຜົມ, ຮ້ານນວດ ແລະ ສະປາ

<table>
<tr><td> </td><td>

**ການອະນາໄມມື**

- ຕ້ອງຈັດໃຫ້ມີຈຸດລ້າງມື ແລະ ສະໜອງສິ່ງອຳນວຍຄວາມສະດວກເຊັ່ນ: ນ້ຳສະອາດ, ສະບູ, ເຈ້ຍເຊັດມື ແລະ ເຈວຂ້າເຊື້ອມື ຫຼື ເຫຼົ້າ 70% ເພື່ອລ້າງມືຢູ່ບໍລິເວນ ໜ້າທາງເຂົ້າ-ອອກ ຮ້ານເສີມຄວາມງາມ, ຮ້ານຕັດຜົມ, ຮ້ານນວດ ແລະ ສະປາ.
- ທຸກຄົນທີ່ເຂົ້າມາໃນສະຖານທີ່ດັ່ງກ່າວ ຕ້ອງລ້າງມືໃສ່ສະບູ ຫຼື ເຈວຂ້າເຊື້ອມື ກ່ອນ ເຂົ້າ - ອອກ, ກ່ອນ - ຫຼັງກິນອາຫານ, ຫຼັງຈາກໃຊ້ຫ້ອງນ້ຳ ແລະ ຫຼັງຈາກສຳຜັດ ຈັບບາຍວັດຖຸສິ່ງຂອງອື່ນໆ.

</td></tr>
<tr><td> </td><td>

**ການໃສ່ຜ້າອັດປາກ-ດັງ ແລະ ການປະຕິບັດຕົນໃນເວລາ ໄອ - ຈາມ**

- ທຸກຄົນທີ່ເຂົ້າມາບໍລິເວນດັ່ງກ່າວ ຕ້ອງໃສ່ຜ້າອັດປາກ-ດັງ ຕະຫຼອດເວລາ;
- ພະນັກງານບໍລິການຕ້ອງໃສ່ໜ້າກາກໃສ ເວລາປະຕິບັດໜ້າທີ່;
- ເວລາ ໄອ-ຈາມ ທຸກຄັ້ງ ຕ້ອງອັດປາກ-ດັງ ດ້ວຍເຈ້ຍອະນາໄມ (Tissue) ຫຼື ແຂນສອກ, ຫຼັງຈາກນັ້ນໃຫ້ລ້າງມືດ້ວຍນ້ຳສະອາດໃສ່ສະບູ, ເຈວຂ້າເຊື້ອມື ຫຼື ເຫຼົ້າ 70% ຂຶ້ນໄປ;
- ຖ້ານຳໃຊ້ຜ້າອັດປາກ-ດັງ ທີ່ໃຊ້ຄັ້ງດຽວ ແມ່ນໃຫ້ປ່ຽນໃໝ່ທຸກໆຄັ້ງ ເມື່ອເຫັນວ່າມີຄວາມປຽກຊຸ່ມ ແລະ ເປິເປື້ອນ;
- ກໍລະນີນຳໃຊ້ຜ້າອັດປາກ-ດັງ ຊະນິດ ຜ້າແພ ຖ້ານຳມາໃຊ້ຄືນ ຕ້ອງຊັກດ້ວຍແຟັບ, ລ້າງດ້ວຍນ້ຳສະອາດແລ້ວຕາກແດດໃຫ້ແຫ້ງ, ລີດດ້ວຍຄວາມຮ້ອນ ຫຼື ຕົ້ມໃຫ້ຟົດໃຊ້ເວລາ 20 - 30 ນາທີ ທຸກຄັ້ງ;
- ຕ້ອງຖິ້ມຜ້າອັດປາກ-ດັງ ແລະ ເຈ້ຍອະນາໄມ ທີ່ໃຊ້ແລ້ວໃສ່ໃນຖົງຢາງ ມັດປາກຖົງໃຫ້ແໜ້ນ ແລ້ວຖິ້ມໃສ່ຖັງຂີ້ເຫຍື້ອທີ່ມີຝາປິດ.

</td></tr>
<tr><td></td><td>

**ການຮັກສາໄລຍະຫ່າງ 1 ແມັດ**

- ທຸກສະຖານທີ່ ຕ້ອງມີການກຳນົດການຮັກສາໄລຍະຫ່າງ;
- ໝາຍສັນຍາລັກໃສ່ພື້ນທີ່ພາຍໃນ ແລະ ພາຍນອກ ໃຫ້ຊັດເຈນ, ໃຫ້ພະນັກງານບໍລິການ ແລະ ລູກຄ້າເຫັນວ່າເຂົາເຈົ້າຄວນຢືນ ຫຼື ນັ່ງຢູ່ ຈຸດໃດ;
- ການຈັດວາງອຸປະກອນເຊັ່ນ: ໂຕະ, ຕັ່ງນັ່ງລໍຖ້າ, ຕັ່ງນັ່ງຕັດຜົມ, ຕຽງສັນຍາກຳ, ຕຽງສະຜົມ, ເສື່ອສຳລັບນວດ ແລະ ອື່ນໆ ໃຫ້ເໝາະສົມກັບສະຖານທີ່ ແລະ ຮັກສາໄລຍະຫ່າງຕາມມາດຕະການ;
- ໃຫ້ມີການຈຳກັດຈຳນວນລູກຄ້າ ໃຫ້ມີຄວາມເໝາະສົມເພື່ອຮັກສາໄລຍະຫ່າງ;
- ຕ້ອງໃຊ້ແຜ່ນຢາງໃສຂັ້ນລະຫວ່າງພະນັກງານບໍລິການ, ຕຽງ, ເສື່ອ ແລະ ຕັ່ງ ຕ່າງໆ;
- ຖ້າສະຖານທີ່ນັ້ນຢູ່ໃນເຂດທີ່ມີຄວາມສ່ຽງໃນການຕິດເຊື້ອຕ້ອງປິດການບໍລິການທັນທີ.

</td></tr>
<tr><td> </td><td>

**ການອະນາໄມ ແລະ ຂ້າເຊື້ອ**

- ຕ້ອງອະນາໄມ ແລະ ຂ້າເຊື້ອທຸກພື້ນທີ່ເປັນປະຈຳ:

\- ອະນາໄມດ້ວຍນ້ຳແຟັບ ແລະ ຂ້າເຊື້ອດ້ວຍນ້ຳຢາຂ້າເຊື້ອ ທີ່ມີຄວາມເຂັ້ມຂຸ້ນ 0,1% ຫຼື ນ້ຳຢາຊັກຜ້າຂາວຕາມອັດຕາສ່ວນທີ່ກຳນົດໄວ້ໃນຜະລິດຕະພັນ;<br>
\- ສຳລັບພື້ນທີ່ຄັບແຄບ ຫຼື ມູມຫ້ອງ ໃຫ້ໃຊ້ເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ;<br>
\- ບໍ່ຄວນນຳໃຊ້ບັ້ງສີດ ທີ່ມີຄວາມດັນສູງສີດໃສ່ພື້ນໂດຍກົງເພື່ອຫຼີກລ່ຽງການກະຈາຍຂອງເຊື້ອພະຍາດ ແຕ່ລຸ່ມຂຶ້ນເທິງ;

</td></tr>
</table>

| | |
|---|---|
| | • ອະນາໄມ ແລະ ຂ້າເຊື້ອ ວັດຖຸ ສິ່ງຂອງ ຫຼື ບ່ອນທີ່ມີການສຳຜັດເລື້ອຍໆເຊັ່ນ: ອຸປະກອນສຳລັບບໍລິການລູກຄ້າ, ລໍ້ໃສ່ອຸປະກອນ, ຮາວຈັບປະຕູ, ໂຕະ, ຕັ່ງ, ປຸ່ມກົດຕ່າງໆ, ລູກບິດປະຕູ , , ຫ້ອງນ້ຳ ແລະ ອື່ນໆ...<br>• ຫຸ້ມຫໍ່ຣີໂມດທຸກປະເພດເຊັ່ນ: ຣີໂມດໂທລະພາບ, ແອ...ດ້ວຍພຣາດສະຕິກ ທີ່ງ່າຍໃນການເຊັດຂ້າເຊື້ອ;<br>• ຜ້າຕ່າງໆ ທີ່ໃຊ້ໃນສະຖານທີ່ຕ່າງໆ ຕ້ອງຊັກດ້ວຍແຟັບ ແລະ ນ້ຳຮ້ອນ 100 ອົງສາ ຂຶ້ນໄປ, ເມື່ອໃຊ້ນ້ຳເຢັນຊັກ ຕ້ອງໃຊ້ນ້ຳຢາຊັກຜ້າຂາວ ທີ່ໄດ້ເຈືອຈາງກັບນ້ຳສະອາດ(ກໍລະນີອະນາໄມຂ້າເຊື້ອທົ່ວໄປ ໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,05%, ກໍລະນີທີ່ສົງໃສວ່າຕິດເຊື້ອໂຄວິດ-19 ໃຫ້ໃຊ້ນ້ຳຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນ 0,1%,);<br>• ຜູ້ເຮັດອະນາໄມ - ຂ້າເຊື້ອ ຕ້ອງໄດ້ຮັບການຝຶກອົບຮົມກ່ຽວກັບການປ້ອງກັນຕົນເອງ ແລະ ຫຼັກການ ອະນາໄມ-ຂ້າເຊື້ອ;<br>• ພະນັກງານອະນາໄມ ຕ້ອງໃສ່ຜ້າອັດປາກ-ດັງ, ແວ່ນປ້ອງກັນຕາ, ຖົງມື, ຜ້າກັນເປື້ອນ, ໝວກ, ເກີບໂບກ ໃນເວລາເຮັດອະນາໄມທຸກຄັ້ງ;<br>• ຖ້າກໍລະນີສົງໃສວ່າມີການຕິດເຊື້ອພະຍາດ ໂຄວິດ-19 ຢູ່ສະຖານທີ່ໃດນຶ່ງແມ່ນໃຫ້ປະຕິບັດຕາມຫຼັກການອະນາໄມ ແລະ ຂ້າເຊື້ອ ໃນພາກທີ 3 ຂອງປຶ້ມຄູ່ມືສະບັບນີ້ຢ່າງເຄັ່ງຄັດ. |
|   | **ການລະບາຍອາກາດ**<br><br>• ເປີດປະຕູ ແລະ ປ່ອງຢ້ຽມ ເພື່ອໃຫ້ອາກາດໃນຫ້ອງ ແລະ ອາຄານ ຖ່າຍເທໄດ້ດີ;<br>• ອະນາໄມເຄື່ອງປັບອາກາດ (ແອ), ພັດລົມ ແລະ ເຄື່ອງດູດອາກາດ ເປັນປະຈຳ. |
|  | **ການກັ່ນກອງດ້ວຍການວັດແທກອຸນຫະພູມ**<br><br>• ຕ້ອງວັດແທກອຸນຫະພູມຮ່າງກາຍຂອງພະນັກງານ ແລະ ລູກຄ້າທຸກຄົນທີ່ເຂົ້າມາໃຊ້ບໍລິການ ໂດຍນຳໃຊ້ເຄື່ອງກວດອຸນຫະພູມແບບອິນຟາເຣດ (infrared thermometer);<br>• ໃຫ້ມີຈຸດກັ່ນກອງ, ມີພະນັກງານຮັບຜິດຊອບ, ມີຫ້ອງແຍກປ່ຽວຊົ່ວຄາວ;<br>• ກໍລະນີພົບບຸກຄົນໃດທີ່ມີອຸນຫະພູມຮ່າງກາຍເກີນ 37.5 ອົງສາເຊ ແລະ ມີອາການ: ໄຂ້, ນ້ຳມູກຍ້ອຍ, ເຈັບຄໍ, ໄອ, ຈາມ, ດັງບໍ່ໄດ້ກິ່ນ, ລີ້ນບໍ່ໄດ້ລົດຊາດ, ບໍ່ອະນຸຍາດໃຫ້ຜູ້ກ່ຽວເຂົ້າໃນສະຖານທີ່ດັ່ງກ່າວ ແລະ ຕ້ອງແຍກອອກຈາກກຸ່ມຄົນທົ່ວໄປ ແລ້ວໃຫ້ຕິດຕໍ່ຫາໜ່ວຍງານສະເພາະກິດ ໂທຫາສາຍດ່ວນ 165/166 ຫຼື ໂທ 020 54066777. |
|   | **ການວາງແຜນ, ຄຸ້ມຄອງ ແລະ ຕິດຕາມ ການປະຕິບັດມາດຕະການ**<br>• ມີການສັບປ່ຽນພະນັກງານໃນການເຮັດວຽກ ເພື່ອຮັບປະກັນມາດຕະການຮັກສາໄລຍະຫ່າງຢ່າງໜ້ອຍ 1 ແມັດ;<br>• ແຕ່ງຕັ້ງພະນັກງານຕິດຕາມໃນການຈັດຕັ້ງປະຕິບັດ ມາດຕະການ ກັນ ແລະ ຄວບຄຸມການຕິດເຊື້ອພະຍາດໂຄວິດ-19;<br>• ຕ້ອງມີການໃຫ້ຂໍ້ມູນຂ່າວສານປະຈຳວັນ ແລະ ໃຫ້ຄວາມຮູ້ແກ່ ບຸກຄົນເຂົ້າ-ອອກໃນສະຖານທີ່ດັ່ງກ່າວ ເຊັ່ນ: ຕິດຕັ້ງເຄື່ອງກະຈາຍສຽງ, ໂປສເຕີຕ່າງໆ ຫຼື ພະນັກງານຜູ້ຮັບຜິດຊອບຕ້ອງໂຄສະນາ - ສຸຂະສຶກສາກັບທີ່ ກ່ຽວກັບມາດຕະການປ້ອງກັນຕົນເອງຈາກການລະບາດພະຍາດ COVID-19; |

| | |
|---|---|
| | • ມີການປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການນຳສິ່ງ ກໍລະນີສົງໃສ ໄປສະຖານທີ່ ແຍກປ່ຽວ ຫຼື ປິ່ນປົວ;<br>• ການສຳລະເງິນ ແມ່ນໃຫ້ໃຊ້ວິທີການໂອນເງິນຜ່ານບັນຊີ ຫຼື ຈ່າຍດ້ວຍບັດ ເພື່ອຫຼຸດຜ່ອນການ ສຳຜັດໂດຍກົງ. |
|  | **ການອະນາໄມຂ້າເຊື້ອຫຼັງຈາກກັບຮອດເຮືອນ**<br><br>• ເມື່ອທຸກຄົນກັບຮອດເຮືອນ ຕ້ອງລ້າງມືໃຫ້ສະອາດ, ປ່ຽນເຄື່ອງນຸ່ງ ແລະ ນຳໄປແຊ່ດ້ວຍນ້ຳ ແຟັບ ຫຼື ນ້ຳຢາຊັກຜ້າຂາວ (ໄຮເຕີ) ຕາມອັດຕາສ່ວນທີ່ໄດ້ກຳນົດໄວ້ ຫຼື ຕົ້ມດ້ວຍນ້ຳຮ້ອນໃຫ້ ຟົດ ເວລາ 20 - 30 ນາທີ<br>• ຂ້າເຊື້ອ ເຄື່ອງໃຊ້ສ່ວນຕົວຂອງທ່ານທຸກຄັ້ງທີ່ກັບຮອດເຮືອນເຊັ່ນ: ໂທລະສັບມືຖື, ກະແຈລົດ, ແວ່ນຕາ, ໂມງ, ແຫວນ ແລະ ອື່ນໆ ດ້ວຍເຫຼົ້າ 70% ຫຼື ນ້ຳຢາຂ້າເຊື້ອ. |

## ພາກທີ 5

## ການຄຸ້ມຄອງ - ກຳຈັດ ຂີ້ເຫຍື້ອ, ສິ່ງເສດເຫຼືອ ແລະ ນ້ຳເປື້ອນ ຕິດເຊື້ອ ໂຄວິດ-19

### 1. ປະເພດຂີ້ເຫຍື້ອອອກຈາກສະຖານທີ່ປິ່ນປົວຄົນເຈັບຕິດເຊື້ອໂຄວິດ-19

- ຊຸດປ້ອງກັນຕົນເອງ ( PPE ) ປະເພດທີ່ໃຊ້ຄັ້ງດຽວ ແລ້ວຖິ້ມເຊັ່ນ: ໝວກ, ຜ້າອັດປາກ-ດັງ, ຖົງມື, ເກີບ ແລະ ອຸປະກອນປິ່ນປົວຄົນເຈັບ ຫຼື ຜູ້ທີ່ມີຄວາມສ່ຽງ ໃນການຕິດເຊື້ອ ປະເພດຢາງ ແລະ ອື່ນໆ ກ່ອນຈະຖິ້ມ ຕ້ອງແຊ່ດ້ວຍນ້ຳຢາຂ້າເຊື້ອຄູໍລິນ ( Chlorine ) ທີ່ມີຄວາມເຂັ້ມຂຸ້ນ 0,5% ປະໄວ້ 30 ນາທີ ຫຼື ອົບຂ້າເຊື້ອດ້ວຍຄວາມຮ້ອນ 100 ອົງສາເຊ ຂຶ້ນໄປ ເວລາ 30 ນາທີ ແລ້ວຈິ່ງນຳໄປກຳຈັດໃຫ້ຖືກຕ້ອງຕາມຫຼັກການອະນາໄມ;
- ເຄື່ອງປ້ອງກັນຕົນເອງ ( PPE ) ປະເພດທີ່ສາມາດນາໃຊ້ຄືນໃໝ່ ເຊັ່ນ: ແວ່ນຕາ, ໝວກ, ແພ, ຖົງມືຢາວຊະນິດໜາ, ເກີບໂບກ ແລະ ອຸປະກອນປິ່ນປົວຄົນເຈັບ ປະເພດສະແຕນເລດ ແລະ ອື່ນໆ ຕ້ອງໄດ້ມີການອົບຂ້າເຊື້ອ ໃນອຸນຫະພູມ 100 ອົງສາເຊ ຂຶ້ນໄປ ໃນເວລາ 30 ນາທີ ຫຼື ແຊ່ຂ້າເຊື້ອດ້ວຍນ້ຳຢາຄູໍລິນ (Chlorine) ທີ່ມີຄວາມເຂັ້ມຂຸ້ນ 0,1%ໃນເວລາ 30 ນາທີ ຫຼັງຈາກນັ້ນຈິ່ງນຳມາຊັກດ້ວຍແຟັບ, ລ້າງດ້ວຍນ້ຳສະອາດ ແລະ ຕາກໃຫ້ແຫ້ງ;
- ວັດຖຸ, ອຸປະກອນ ການແພດ ທີ່ນຳໃຊ້ ໃນການປິ່ນປົວປະຈຳວັນ, ອຸປະກອນສຳລັບເກັບ ແລະ ສິ່ງຕົວຢ່າງ ຕ້ອງໄດ້ແຊ່ດ້ວຍນ້ຳຢາ ຄູໍລິນ (Chlorine) 0,5% ໃນເວລາ 30 ນາທີ ກ່ອນນາໄປຖິ້ມໃສ່ຖັງຂີ້ເຫຍື້ອຕິດເຊື້ອ;
- ສິ່ງເສດເຫຼືອອອກຈາກຄົນເຈັບ ເຊັ່ນ: ຂີ້ກະເທີະ, ຂີ້ມູກ, ນ້ຳລາຍ, ຮາກ, ເລືອດ, ອາຈົມ, ນ້ຳປັດສະວະ ແລະ ເຍື່ອເມືອກຕ່າງໆ ຕ້ອງໃສ່ຖົງຢາງ2ຊັ້ນມັດປາກຖົງໃຫ້ແໜ້ນ ແລ້ວພົ່ນຂ້າເຊື້ອ ດ້ວຍນ້ຳຢາຄູໍລິນປະໄວ້ 30 ນາທີ ຈິ່ງນຳໄປຖິ້ມໃສ່ຖັງຂີ້ເຫຍື້ອຕິດເຊື້ອ ທີ່ມີຝາປິດ;
- ນ້ຳເປື້ອນອອກຈາກສະຖານທີ່ປິ່ນປົວ ເປັນຕົ້ນ: ນ້ຳເປື້ອນຈາກຫ້ອງທົດລອງ, ຫ້ອງປິ່ນປົວຄົນເຈັບ, ຫ້ອງແຍກປ່ຽວ, ຫ້ອງຈຳກັດບໍລິເວນ, ຫ້ອງນ້ຳ, ຫ້ອງອາບນ້ຳ, ຫ້ອງສ່ອງໄຟຟ້າ ແລະ ຫ້ອງອື່ນໆ ຕ້ອງຂ້າເຊື້ອດ້ວຍນ້ຳຢາຄູໍລິນ ( Chlorine ) 0,5% ຕາມມາດຕະຖານການຄິດໄລ່ບໍລິມາດຂອງນ້ຳເປື້ອນ ແລ້ວຈິ່ງປ່ອຍລົງສູ່ລະບົບລະບາຍນ້ຳເປື້ອນ ( ຄູໍລິນຕົກຄ້າງແມ່ນໃຫ້ອີງຕາມຂໍ້ຕົກລົງວ່າດ້ວຍມາດຕະຖານອະນາໄມສິ່ງແວດລ້ອມຢູ່ໃນສະຖານທີ່ບໍລິການສາທາລະນະສຸກ )

### 2. ປະເພດຂີ້ເຫຍື້ອອອກຈາກສະຖານທີ່ພັກເຊົາຂອງພະນັກງານແພດໝໍ, ບ່ອນແຍກປ່ຽວ ແລະ ບ່ອນຈຳກັດບໍລິເວນ

- ຊຸດປ້ອງກັນຕົນເອງຂອງພະນັກງານ ແພດໝໍ, ພະນັກງານອະນາໄມ, ບຸກຄົນທົ່ວໄປ ທີ່ມີການແຍກປ່ຽວ ໂດຍສະເພາະເຄື່ອງນຸ່ງຫົ່ມ, ບ່ອນນອນ, ເຄື່ອງໃຊ້ປະຈຳວັນ ທຸກຊະນິດ ຕ້ອງແຊ່ດ້ວຍນ້ຳຢາ ຄູໍລິນ ( Chlorine ) 0,5% ປະໄວ້ 30 ນາທີ ຈິ່ງນາໄປຊັກ ແລະ ເຮັດຄວາມສະອາດ;
- ສິ່ງເສດເຫຼືອຕ່າງໆ ເຊັ່ນ: ຂີ້ກະເທີະ, ຂີ້ມູກ, ນ້ຳລາຍ, ຮາກ, ເລືອດ, ອາຈົມ, ນ້ຳປັດສະວະ ຕ້ອງມີການສີດພົ່ນຂ້າເຊື້ອດ້ວຍນ້ຳຢາ ຄູໍລິນ ( Chlorine ) 0,5% ປະໄວ້ 30 ນາທີ ກ່ອນນາໄປຈູດທ້ອນໂຮມ ແລະ ບ່ອນກຳຈັດ;
- ນ້ຳເປື້ອນອອກຈາກສະຖານທີ່ພັກເຊົາ ຂອງພະນັກງານແພດໝໍ ບ່ອນແຍກປ່ຽວ ແລະ ບ່ອນຈຳກັດບໍລິເວນ ຕ້ອງໄດ້ຂ້າເຊື້ອດ້ວຍນ້ຳຢາຄູໍລິນ (Chlorine) 0,1% ໃນເວລາ 30 ນາທີ ຕາມມາດຕະຖານການຄິດໄລ່ບໍລິມາດຂອງນ້ຳເປື້ອນ ແລ້ວຈິ່ງປ່ອຍລົງສູ່ລະບົບລະບາຍນ້ຳເປື້ອນ.

**3. ພາຊະນະບັນຈຸຂີ້ເຫຍື້ອ:**

ພາຊະນະບັນຈຸຂີ້ເຫຍື້ອຕ້ອງໃຫ້ພຽງພໍ, ມີຂະໜາດ ແລະ ລັກສະນະທີ່ເໝາະສົມ ກັບແຕ່ລະສະຖານທີ່. ຖົງຢາງຕ້ອງໃສ່ຊະນິດໜາ ທົນທານ, ບໍ່ມີການຮົ່ວຊຶມ ແລະ ຖັງບັນຈຸຂີ້ເຫຍື້ອຕ້ອງໜາ, ແຂງແຮງ, ທົນທານ, ບໍ່ມີການຮົ່ວຊຶມ ຕ້ອງເປັນປະເພດທີ່ບໍ່ໃຊ້ມືສໍາພັດໃນເວລາປິດ-ເປີດຖັງ.

**4. ການຕິດສະຫຼາກໃສ່ພາຊະນະ**

ພາຊະນະ ແລະ ຖົງບັນຈຸຂີ້ເຫຍື້ອຕ້ອງຕິດສະຫຼາກກໍາກັບໃສ່ດັ່ງນີ້:

| |
|---|
| ຂີ້ເຫຍື້ອອັນຕະລາຍ<br>- ວັນທີເກັບ:........................................................................................................ |
| ຊື່ຂອງສະຖານທີ່ບໍລິການ<br>..........................................................................................<br>ຊື່ ແລະ ເບີໂທລະສັບຂອງຜູ້ຮັບຜິດຊອບ<br>........................................................................... |
| ນໍ້າໜັກຂີ້ເຫຍື້ອ........................................................................................ກິໂລ |

**5. ການແຍກຂີ້ເຫຍື້ອ**

ຊຸດປ້ອງກັນໂຕເອງ, ຂີ້ເຫຍື່ອທາງການແພດ ລວມໄປເຖິງ ຂີ້ເຫຍື້ອ ຫຼື ສິ່ງເສດເຫຼືອຂອງຜູ້ທີ່ຕິດເຊື້ອທັງໝົດຕ້ອງ ຖິ້ມລົງໃນຖົງຢາງສະເພາະ ທີ່ເປັນຖົງໃສ່ຂີ້ເຫຍື້ອຕິດເຊື້ອ 2 ຊັ້ນ, ມັດປາກຖົງໃຫ້ແຈບດີ, ຕິດສະຫຼາກໃສ່ຖົງວ່າເປັນຂີ້ເຫຍື້ອຕິດເຊື້ອອັນຕະລາຍ ແລ້ວນໍາໄປບໍາບັດ ແລະ ທໍາລາຍ ຢູ່ໃນຂໍ້ທີ 8 ການກໍາຈັດຂີ້ເຫຍື້ອ ແລະ ມອບໃຫ້ເທດສະບານກໍາຈັດຕໍ່ໄປ. ຫ້າມບໍ່ໃຫ້ເປີດຖົງຂີ້ເຫຍື້ອຄືນ ຖ້າປິດປາກຖົງແລ້ວ ເພື່ອຫຼີກເວັ້ນການສໍາຜັດກັບເຊືອພະຍາດ.

**6. ວິທີການທ້ອນໂຮມ ແລະ ການເກັບມ້ຽນສິ່ງເສດເຫຼືອ, ຂີ້ເຫຍື້ອຕິດເຊື້ອ**

ຕ້ອງກໍານົດສະຖານທີ່ທ້ອນໂຮມຂີ້ເຫຍື້ອສະເພາະ ບໍ່ໃຫ້ປົນກັບຂີ້ເຫຍື້ອທົ່ວໄປເດັດຂາດ, ສໍາລັບຖັງຂີ້ເຫຍື້ອຢູ່ຈຸດທ້ອນໂຮມ ຕ້ອງມີລໍ້ຍູ້, ມີຝາປິດ ເພື່ອຮັບປະກັນບໍ່ໃຫ້ມີສັດມາເຂ່ຍ ແລະ ສະດວກ ໃນການເຄື່ອນຍ້າຍຂີ້ເຫຍື້ອແຕ່ລະຈຸດຕ້ອງໃຫ້ຕິດສະຫຼາກ ກໍາກັບວ່າຂີ້ເຫຍື້ອອັນຕະລາຍ ຖ້າແມ່ນຖົງຢາງຕ້ອງໃສ່ຂີ້ເຫຍື້ອບໍ່ໃຫ້ເກີນ 3/4 ຂອງຖົງ ແລະ ມັດປາກຖົງໃຫ້ແໜ້ນ ແລ້ວນາໄປກາຈັດ ພາຍໃນ 24 ຊົ່ວໂມງ.

**7. ການຂົນສົ່ງ ແລະ ເຄື່ອນຍ້າຍຂີ້ເຫຍື້ອ**

- ເພື່ອຮັບປະກັນບໍ່ໃຫ້ຂີ້ເຫຍື້ອຊະຊາຍ ຕ້ອງມີການກໍານົດເສັ້ນທາງຂົນສົ່ງລະຫວ່າງຕຶກຕ່າງໆ ໄປຫາບ່ອນເກັບມ້ຽນຂີ້ເຫຍື້ອລວມ ໂດຍການນໍາໃຊ້ລໍ້ຂົນສົ່ງຂີ້ເຫຍື້ອອັນຕະລາຍພຽງຢ່າງດຽວ ແລະ ສີດພົ່ນຂ້າເຊື້ອ ດ້ວຍນໍ້າຢາ (Chlorine ) 0,5% ຕາມເສັ້ນທາງຂົນສົ່ງຂີ້ເຫຍື້ອ;

- ສໍາລັບການຂົນສົ່ງແຕ່ລະສະຖານທີ່ທ້ອນໂຮມ ເພື່ອກໍາຈັດ ແມ່ນຕ້ອງນໍາໃຊ້ລົດສໍາລັບຂົນສົ່ງຂີ້ເຫຍື້ອຕິດເຊື້ອສະເພາະ, ພະນັກງານເກັບຂີ້ເຫຍື້ອ ແລະ ພະນັກງານຂັບລົດ ຕ້ອງໄດ້ຮັບການອົບຮົມສະເພາະ ກ່ຽວກັບມາດຕະການປ້ອງກັນຕົນເອງ ແລະ ການຄຸ້ມຄອງສິ່ງເສດເຫຼືອ, ຂີ້ເຫຍື້ອຕິດເຊື້ອ.

8. **ການກໍາຈັດຂີ້ເຫຍື້ອມີ 03 ວິທີ ດັ່ງນີ້:**
   - **ເຕົາອົບ**: ແມ່ນການບາບັດຂີ້ເຫຍື້ອດ້ວຍການນາໃຊ້ເຕົາອົບຄວາມຮ້ອນ ( Autoclave ) ເຊິ່ງລາຍລະອຽດຂອງການນໍາໃຊ້ແມ່ນ ຂຶ້ນກັບສະຫຼາກກໍາກັບໃນຜະລິດຕະພັນ;
   - **ເຕົາເຜົາ**: ຂີ້ເຫຍື້ອຕິດເຊື້ອດັ່ງກ່າວຕ້ອງກາຈັດດ້ວຍການນາໃຊ້ເຕົາເຜົາໃນອຸຫະພູມສູງກ່ວາ 1,200 ອົງສາເຊ;
   - **ການຂ້າເຊື້ອດ້ວຍປູນຂາວ ຫຼື ສານເຄມີ**: ນໍາໄປກໍາຈັດຢູ່ໃນສະຖານທີ່ ທີ່ຖືກຕ້ອງຕາມຫຼັກການອະນາໄມ ດ້ວຍການຂຸດຂຸມຝັງໃຫ້ເລິກ ຢ່າງໜ້ອຍ 2 ແມັດ, ໃສ່ປູນຂາວປູພື້ນ ເພື່ອຂ້າເຊື້ອ ຫຼື ຝຸ່ນຄູ່ລິນເພື່ອຂ້າເຊື້ອ ແລະ ຖົມດ້ວຍປູນຂາວ ແລ້ວຈິ່ງໃຊ້ດິນຖົມໃຫ້ໜາ 30 ຊັງຕີແມັດ.

## ພາກທີ 6

## ການມັດຽນຊາກສົບຜູ້ເສຍຊີວິດຈາກການຕິດເຊື້ອໂຄວິດ-19

1. **ການກຽມທີມງານ:**
   - ຕ້ອງມີເຈົ້າໜ້າທີ່ມັດຽນຊາກສົບຢ່າງໜ້ອຍ 2-3 ຄົນ ເພື່ອຍົກສົບເຂົ້າໃສ່ຖົງໃສ່ສົບຜູ້ເສຍຊີວິດ
   - ເຈົ້າໜ້າທີ່ຜູ້ທີ່ຈະມັດຽນຊາກສົບຜູ້ເສຍຊີວິດ ຍ້ອນໂຄວິດ-19 ຕ້ອງ ໄດ້ຮັບການຝຶກອົບຮົມຫຼັກການປ້ອງກັນຕົນເອງ, ຫຼັກການອະນາໄມ ແລະ ຂ້າເຊື້ອ ແລະ ສວມໃສ່ຊຸດປ້ອງກັນຕົນເອງ ( PPE ) ຄົບຊຸດ.

2. **ກະກຽມອຸປະກອນ:**
   - ຖົງຫໍ່ສົບ ທີ່ມີຊິບຮັດ
   - ໃຊ້ເຫຼົ້າ 70% ຫຼື ນໍ້າຢາຂ້າເຊື້ອຄູ່ລິນ ທີ່ມີຄວາມເຂັ້ມຂຸ້ນ 1% (ໃຊ້ສໍາລີ ຈຸບເຫຼົ້າ 70% ຫຼື ນໍ້າຢາຂ້າເຊື້ອອັດຕາມບາດແຜ ແລະ ຮູອະໄວຍະວະຕ່າງໆ ຂອງຜູ້ເສຍຊີວິດແລ້ວສີດດ້ວຍ ເຫຼົ້າ 70% ຫຼື ນໍ້າຢາຂ້າເຊື້ອທີ່ມີ ຄວາມເຂັ້ມຂຸ້ນ 1% ເພື່ອຂ້າເຊື້ອ ທົ່ວຮ່າງກາຍສົບ)
   - ຜ້າສໍາລັບຊັບນໍ້າຢາ
   - ສະຕິກເກີຕິດຖົງໃສ່ສົບ

3. **ການຫຸ້ມຫໍ່ສົບ**
   - ຫໍ່ສົບຜູ້ເສຍຊີວິດດ້ວຍຖົງຫໍ່ສົບ 3 ຊັ້ນ ໃຫ້ຊິບແຕ່ລະຖົງສະຫຼັບກັນ ແລ້ວວາງຖົງໄວ້ຢູ່ລໍ້ຍູ້, ຖ້າມັດຽນສົບແລ້ວ ຈະບໍ່ໃຫ້ໄຂຖົງສົບຄືນອີກເດັດຂາດ;
   - ຫ້າມບໍ່ໃຫ້ລ້າງ ຫຼື ອະນາໄມສົບຜູ້ເສຍຊີວິດ ແລະ ບໍ່ໃຫ້ ພີ່ນ້ອງສໍາຜັດກັບສົບຜູ້ເສຍຊີວິດເດັດຂາດ;
   - ທຸກອຸປະກອນການແພດທີ່ໃຊ້ກັບສົບແມ່ນບໍ່ອະນຸຍາດໃຫ້ເອົາອອກມາໃຊ້ຄືນ.

4. **ການເຄື່ອນຍ້າຍສົບ**

- ຕິດຕໍ່ຫາຜູ້ທີ່ຮັບຜິດຊອບສະເພາະ ເພື່ອມາເຄື່ອນຍ້າຍສົບອອກໄປເພື່ອຈັດການຊາປະນາກິດສົບ ຢູ່ສະຖານ ທີ່ ທີ່ໄດ້ກຳນົດໄວ້;
- ບໍ່ອະນຸຍາດໃຫ້ ພີ່ນ້ອງ ຜູ້ເສຍຊີວິດ ເຄື່ອນຍ້າຍສົບອອກໄປ ຄືບຮັບຕາມປະເພນີ ແລະ ນຳໄປທຳພິທີຊາ ປະນາກິດສົບດ້ວຍຕົນເອງ;
- ພະນັກງານຂັບລົດ ແລະ ຜູ້ທີ່ເຄື່ອນຍ້າຍສົບຜູ້ເສຍຊີວິດ ຕ້ອງໃສ່ຊຸດ PPE ຄົບຊຸດ ແລະ ຕ້ອງໄດ້ ຜ່ານການຝຶກອົບຮົມເປັນຢ່າງດີສຳລັບການປ້ອງກັນຕົນເອງ ແລະ ວິທີການເຄື່ອນຍ້າຍຊາກສົບຜູ້ເສຍຊີວິດ;
- ຕ້ອງກຳນົດເສັ້ນທາງເຄື່ອນຍ້າຍຊາກສົບຜູ້ເສຍຊີວິດໄວ້ສະເພາະ;
- ທຸກສິ່ງທີ່ນຳໃຊ້ໃນການເຄື່ອນຍ້າຍສົບ ແລະ ອຸປະກອນຕ່າງໆ ເຊັ່ນ: ລົດສຳລັບເຄື່ອນຍ້າຍສົບ, ລໍ້ຍູ້ ຕ້ອງໄດ້ຂ້າເຊື້ອ ດ້ວຍເຫຼົ້າ 70% ຫຼື ປະຕິບັດຕາມຫຼັກການອະນາໄມ ແລະ ຂ້າເຊື້ອທີ່ໄດ້ກຳນົດໄວ້;

5. **ການເຜົາສົບ**

- ກຳນົດສະຖານທີ່ຊາປະນາກິດສົບ ໃຫ້ໄດ້ມາດຕະຖານ ແລະ ຈັດການ ເຜົາສົບທັນທີ ທີ່ມາຮອດສະຖານທີ່ເຜົາສົບ;
- ຖົງໃສ່ສົບ ແລະ ເຄື່ອງໃຊ້ຜູ້ເສຍຊີວິດ ຕ້ອງເຜົາໄປນຳສົບທັງໝົດ;
- ເຜົາສົບ ແລະ ເຄື່ອງໃຊ້ຂອງຜູ້ເສຍຊີວິດ ດ້ວຍເຕົາທີ່ມີຄວາມຮ້ອນສູງ 1.000 ອົງສາເຊ ຂຶ້ນໄປ.

6. **ການອະນາໄມ**

- ສຳລັບເຄື່ອງໃຊ້ຂອງຜູ້ເສຍຊີວິດເຊັ່ນ: ເຄື່ອງນຸ່ງ, ຜ້າເຊັດໂຕ, ຜ້າປູບ່ອນ, ສົບໝອນ, ຜ້າຫົ່ມ ແລະ ອື່ນໆ ແມ່ນໃຫ້ຖືເປັນຂີ້ເຫຍື້ອຕິດເຊື້ອອັນຕະລາຍ ຕ້ອງໄດ້ຂ້າເຊື້ອດ້ວຍຢາຂ້າເຊື້ອທີ່ມີຄວາມເຂັ້ມຂຸ້ນສູງ 0,5-1% ແລ້ວນຳໄປເຜົາພ້ອມກັບຊາກສົບຜູ້ເສຍຊີວິດ
- ສຳລັບເສດຂີ້ເທົ່າຈາກການເຜົາສົບ ແລະ ຂີ້ເຫຍື້ອຕິດເຊື້ອ ແມ່ນໃຫ້ຂຸດຂຸມເລິກ 50 ຊັງຕີແມັດ ແລ້ວໂຮຍດ້ວຍປູນຂາວກ່ອນ ຈຶ່ງນຳເອົາເສດຂີ້ເທົ່າຖອກລົງໃສ່ໃນຂຸມ ຫຼັງຈາກນັ້ນຈຶ່ງຖົມປາກຂຸມດ້ວຍດິນໃຫ້ໜາຈາກປາກຂຸມ 30 ຊມ ແລະ ໂຮຍປູນຂາວອ້ອມປາກຂຸມອີກຄັ້ງ;
- ການອະນາໄມ ແລະ ຂ້າເຊື້ອ ສຳລັບ ລົດຂົນສົ່ງຊາກສົບ, ອຸປະກອນ ແລະ ຊຸດປ້ອງກັນຕົນເອງຂອງຜູ້ສຳຜັດກັບຊາກສົບ ແມ່ນໃຫ້ປະຕິບັດຕາມຄູ່ມືແນະນຳການອະນາໄມ ແລະ ຂ້າເຊື້ອ COVID-19 ຢ່າງເຄັ່ງຄັດ.

ກົມອະນາໄມ ແລະ ສົ່ງເສີມສຸຂະພາບ

ດຣ. ພອນປະເສີດ ອຸນາພົມ

**ເອກະສານອ້າງອີງ:**


1. Decision on Health-Care Waste Management 1373/MOH, 23 Nov 2018
2. WHO_Coronavirus disease (COVID-19) technical guidance: Infection prevention and control / WASH, https://www.who.int/emergencies/diseases/novel-coronavirus-2019/technical-guidance
3. WHO Technical brief_Water, sanitation, hygiene and waste management for COVID-19, 3 March 2020, https://www.who.int/publications-detail/water-sanitation-hygiene-and-waste-management-for-covid-19
4. WHO_Home care for patients with suspected novel coronavirus (nCoV) infection presenting with mild symptoms and management of contacts, 4 February 2020, https://www.who.int/publications-detail/home-care-for-patients-with-suspected-novel-coronavirus-(ncov)-infection-presenting-with-mild-symptoms-and-management-of-contacts
5. WHO_Coronavirus disease (COVID-19) technical guidance: Points of entry and mass gatherings, https://www.who.int/emergencies/diseases/novel-coronavirus-2019/technical-guidance/points-of-entry-and-mass-gatherings
6. Rutala WA, Weber DJ, and Healthcare Infection Control Practices Advisory Committee. Guideline for Disinfection and Sterilization in Healthcare Facilities (2008). Center for disease control and prevention (update May2019).https://www.cdc.gov/infectioncontrol/guidelines/disinfection/
7. "UVLightandCoronavirus",https://www.uv-light.co.uk/coronavirus/.
8. ▶️ WHO,"ModesoftransmissionofviruscausingCOVID-19:implicationsforIPCprecautionrecommendations", https://www.who.int/news-room/commentaries/detail/modes-of-transmission-of-virus-causing-covid-19- implications-for-ipc-precaution-recommendations.
9. ▶️ WladyslawJ.KowalskiandThomasJWalsh,TechnicalReport.March2020."2020COVID-19Coronavirus Ultraviolet Susceptibility"
10. Infection and Prevention Control in Health Care setting , By Department of Health care and rehabilitation,MOH Lao 2020